Funded by:

Australian AID

One Vision, One Identity, One Community

www.asean.org

AANZFTA

# A Guide for ASEAN Business

ASEAN – AUSTRALIA – NEW ZEALAND

## Free Trade Area

CD-ROM Included

# ປື້ມຄູ່ມືສໍາລັບນັກທຸລະກິດອາຊຽນ

## ຕໍ່ສັນຍາເພື່ອສ້າງເຂດການຄ້າເສລີອາຊຽນ-ອົດສະຕາລີ-ນິວຊີແລນ

# ຄຳນຳ

ສັນຍາສ້າງເຂດການຄ້າເສລີອາຊຽນ-ອົດສະຕາລີ-ນິວຊີແລນ (AAN ZFTA) ແມ່ນສັນຍາຄັ້ງປະຫວັດສາດໜຶ່ງ ຂອງອາຊຽນ. ນີ້ແມ່ນສັນຍາທີ່ລວມເອົາ ຄວາມເຂົ້າໃຈໜຶ່ງດຽວທຳອິດ ແລະ ລວມເອົາເກືອບທັງໝົດ ຂໍ້ຕົກລົງທາງເສດຖະກິດຫຼາຍທີ່ສຸດຂອງອາຊຽນກັບປະເທດຄູ່ເຈລະຈາຕ່າງໆ.

ສັນຍາ AANZFTA ແມ່ນການປະຕິບັດເກີນກວ່າທີ່ເຄີຍ ມີໃນຂໍ້ຕົກລົງເຂດການຄ້າເສລີອາຊຽນແບບດັ້ງເດີມ ທີ່ຈຳກັດສະເພາະການຄ້າໃນດ້ານສິນຄ້າ, ດ້ານການບໍລິການ ແລະດ້ານການລົງທຶນ. ຊຶ່ງເຂດໃໝ່ຂອງ ສັນຍາລວມເອົາດ້ານມາດຕະຖານ, ມາດຕະການ ສຸຂານາໄມ ແລະສຸຂານາໄມພືດ, ການຄ້າທາງເອເລັກໂຕຣນິກ, ຊັບສິນທາງປັນຍາ, ນະໂຍບາຍການແຂ່ງຂັນ, ການເຄື່ອນຍ້າຍຂອງນັກທຸລະກິດ ຕະຫຼອດຈົນເຖິງການຮ່ວມມື ທາງດ້ານເສດຖະກິດ.

ປຶ້ມຄູ່ມືສຳລັບນັກທຸລະກິດອາຊຽນຫົວນີ້ ຕັ້ງໃຈທີ່ຈະແນະນຳ ສັນຍາAANZFTA ແລະ ໃຫ້ຄຳແນະນຳປະຊາຄົມທຸລະກິດ ແລະຜູ້ປະກອບການຂອງອາຊຽນ ໃນການຈັດຕັ້ງປະຕິບັດ ແລະການນຳໃຊ້. ປຶ້ມຄູ່ມືນີ້ ເນັ້ນໃສ່ບັນດາຂໍ້ກຳນົດທີ່ສຳຄັນຂອງສັນຍາ ລວມທັງກາລະໂອກາດທາງຕະຫຼາດທີ່ໄດ້ຖືກສ້າງຂຶ້ນສຳລັບຜູ້ຜະລິດຂອງອາຊຽນ, ສຳລັບຊາວຄ້າຂາຍ, ນັກລົງທຶນ ແລະ ມືອາຊີບ. ປຶ້ມຄູ່ມືນີ້ ໄດ້ຮັບການອອກແບບມາເພື່ອເຕີມເຕັມຂໍ້ຄວາມທາງກົດໝາຍ ຂອງ AANZFTA ແຕ່ຈະບໍ່ພະຍາຍາມແປຄວາມໝາຍໃນທາງໃດໆກ່ຽວກັບຂໍ້ຄວາມທາງກົດໝາຍຂອງສັນຍາ.

ເພື່ອເປັນການປະກອບສ່ວນຢ່າງຕໍ່ເນື່ອງຕໍ່ຄວາມຈະເລີນຮຸ່ງເຮືອງ ແລະ ສີວິໄລ ໃຫ້ແກ່ປະຊາຊົນໃນອາຊຽນ,ຂ້າພະເຈົ້າຮຽກຮ້ອງມາຍັງບັນດາທ່ານເພື່ອເພີ້ມກາລະໂອກາດທີ່ຈະໄດ້ຈາກສັນຍາ AANZFTA ໂດຍການແບ່ງປັນຂໍ້ມູນຂ່າວສານກັບບັນດາຄູ່ຮ່ວມທຸລະກິດຂອງທ່ານ ແລະຊ່ວຍພວກເຮົາເສີມສ້າງຄວາມຮັບຮູ້ ແລະອຳນວຍຄວາມສະດວກແກ່ຄວາມເຂົ້າໃຈທີ່ດີກວ່າ ກ່ຽວກັບຂີດໝາຍແຫ່ງຄວາມສຳເລັດ ຂອງສັນຍາທີ່ ເປັນປະຫວັດສາດຂອງອາຊຽນ.

**ດຣ. ສຸລິນ ພິດສຸວັນ**

**ເລຂາທິການໃຫ່ຍອາຊຽນ**

# ຄຳສະແດງຄວາມຂອບໃຈ

ພວກເຮົາ ຂໍສະແດງຄວາມຂອບໃຈມາຍັງຫຼາຍໆທ່ານທີ່ໄດ້ປະກອບສ່ວນ ແລະໃຫ້ການສະໜັບສະໜູນໃນຄວາມພະຍາຍາມສ້າງປຶ້ມຄູ່ມືເຫຼັ້ມນີ້, ຖ້າບໍ່ມີການປະກອບສ່ວນ ແລະ ການສະໜັບສະໜູນດັ່ງກ່າວຂອງພວກທ່ານ ປຶ້ມຫົວນີ້ກໍຄົງບໍ່ສາມາດເກີດຂຶ້ນໄດ້ ຈິ່ງ...

ຂໍຂອບໃຈມາຍັງທ່ານ Andrew Stoler ທີ່ແລກປ່ຽນຄວາມຮູ້ ແລະປະສົບການ ໃນການຈັດພິມແຜີຍແຜ່ປຶ້ມຫົວນີ້;

ຂໍຂອບໃຈມາຍັງ ບັນດາຊ່ຽວຊານຈາກກອງເລຂາອາຊຽນ, Australia's DFAT, Australian Customs Service and New Zealand's MFAT ທີ່ໄດ້ເສຍສະຫຼະເວລາອັນມີຄ່າ ເຂົ້າໃນການກວດກາຄວາມຖືກຕ້ອງຂອງປຶ້ມຫົວນີ້;

ຂໍຂອບໃຈມາຍັງທີມງານຂອງກອງເລຂາອາຊຽນ ທີ່ຊ່ວຍປະສານງານໃນການສ້າງປຶ້ມຄູ່ມືຫົວນີ້ ເພື່ອໃຫ້ການຈັດຕັ້ງປະຕິບັດໂຄງການນີ້ ດຳເນີນໄປຢ່າງລາບລື່ນ;

ຂໍຂອບໃຈມາຍັງ ພະນັກງານອື່ນໆ ທີ່ເປັນສະມາຊິກກອງເລຂາອາຊຽນ ທີ່ໃຫ້ຄວາມຊ່ວຍເຫຼືອ;

ຂໍຂອບໃຈມາຍັງ AusAID ທີ່ໃຫ້ການສະໜັບສະໜູນຂໍ້ລິເລີ່ມນີ້ຕະຫຼອດມາ; ແລະ

ທ້າຍສຸດຂໍສະແດງຄວາມຂອບໃຈມາຍັງທຸກໆທ່ານທີ່ເຂົ້າຮ່ວມໃນການເຈລະຈາສັນຍາ AANZFTA ສຳລັບຄວາມພະຍາຍາມບຸກບືນ ຈົນເຮັດໃຫ້ສັນຍານີ້ສຳເລັດລົງ.

**ກອງເລຂາອາຊຽນ**

# ສາລະບານ


ຄຳນຳ ..... ii

ຄຳສະແດງຄວາມຂອບໃຈ ..... iii

ບັນຊີລາຍຊື່ຂອງຕົວອັກສອນຫຍໍ້ ..... vii

ພາກທີ 1 ພາບລວມຂອງສັນຍາ AANZFTA ..... 2

ພາກທີ 2 ເນື້ອໃນຕົ້ນຕໍຂອງສັນຍາ AANZFTA ..... 4

ການຄ້າດ້ານສິນຄ້າ (ໝວດ 2 ຂອງສັນຍາ AANZFTA) ..... 4

ອັດຕາພາສີ. ..... 4

ມາດຕະການທີ່ບໍ່ແມ່ນພາສີ. ..... 5

ການເສີມຂະຫຍາຍຄວາມໂປ່ງໃສ. ..... 5

ມາດຕະຖານ ແລະບັນດາມາດຕະການສຸຂານາໄມ ແລະສຸຂານາໄມພືດ ..... 5

ມາດຕະຖານ ..... 5

ມາດຕະການສຸຂານາໄມ ແລະສຸຂານາໄມພືດ (SPS) ..... 7

ການຄ້າດ້ານການບໍລິການ ..... 8

ລະບຽບການພາຍໃນປະເທດ ..... 10

ການໄດ້ຮັບສິດເປັນຜູ້ສະໜອງ ..... 11

ຄວາມໂປ່ງໃສ ..... 11

ການຮັບຮູ້ ..... 11

ການປະຕິບັດຕໍ່ການຜູກຂາດ ແລະ ບາງການປະຕິບັດຕົວຈິງຂອງທຸລະກິດ ..... 12

ການປະຕິເສດຜົນປະໂຫຍດ ..... 12

**ຂໍ້ກຳນົດທີ່ສຳຄັນກ່ຽວກັບສະຖາບັນ** ........ 12

**ການບໍລິການດ້ານການເງິນ ແລະ ໂທລະຄົມມະນາຄົມ.** ........ 13

**ການລົງທຶນ**........ 13

ແຜນວຽກ. ........ 15

ຄວາມໂປ່ງໃສ. ........ 16

ການປະຕິບັດທີ່ເປັນທຳໃນຂັ້ນຕອນການບໍລິຫານ........ 16

ການແກ້ໄຂຂໍ້ຂັດແຍ່ງລະຫວ່າງລັດແລະຜູ້ລົງທຶນ. ........ 16

ຊັບສິນທາງປັນຍາ ........ 17

ການປັບປຸງໃໝ່ຂອງສັນຍາວ່າດ້ວຍສິດທິຊັບສິນທາງປັນຍາທີ່ກ່ຽວພັນກັບການຄ້າ. ........ 17

ຄວາມໂປ່ງໃສ. ........ 18

ການຄ້າທາງເອເລັກໂທນິກ........ 19

ນະໂຍບາຍການແຂ່ງຂັນ........ 20

ການເຄື່ອນຍ້າຍຊົ່ວຄາວຂອງນັກທຸລະກິດ ........ 20

ພາກທີ 3 ຮູບແບບການອຳນວຍຄວາມສະດວກທາງດ້ານການຄ້າທີ່ສຳຄັນຂອງເຂດການຄ້າ ເສລີອາຊຽນ-ອົດສະຕາລີ-ນິວຊີແລນ ........ 22

ລະບຽບແຫຼ່ງກຳເນີດສິນຄ້າ ........ 22

ການອຳນວຍຄວາມສະດວກທາງດ້ານການຄ້າໃນ AANZFTA........ 23

ພາກທີ 4 ໂອກາດຂອງການເຂົ້າສູ່ຕະຫຼາດໃໝ່ ........ 26

ໂອກາດການຄ້າດ້ານສິນຄ້າ ........ 26

ໂອກາດໃນການຄ້າດ້ານການບໍລິການ........ 54

## ບັນຊີລາຍຊື່ຂອງແຕ່ລະຫ້ອງ

**ຫ້ອງທີ1:** ຄວາມເຂົ້າໃຈກ່ຽວກັບບັນຊີຂໍ້ຜູກພັນທີ່ເປີດນຳໃຊ້ໃນການຄ້າດ້ານການບໍລິການ..................................9

**ຫ້ອງທີ2**: ຄຳນິຍາມກ່ຽວກັບການລົງທຶນໃນສັນຍາ AANZFTA...................................................................15

**ຫ້ອງທີ3**: ການກວດສອບທາງອີເລັກໂຫຼນິກ ແລະໃບຢັ້ງຢືນ ແບບດິຈິຕໍ ...................................... ..................18

ຫ້ອງທີ4: ການເຄື່ອນຍ້າຍຊົ່ວຄາວຂອງນັກທຸລະກິດ: ໃຜທີ່ຖືກລວມໃນນັ້ນ....................................................20

## ບັນຊີລາຍຊື່ຂອງແຕ່ລະຕາຕະລາງ

**ຕາຕະລາງທີ 1**: ພາບລວມຜົນຂອງການຍົກເລີກພາສີຂອງອົດສະຕາລີ ແລະນິວຊີແລນ....................................26

**ຕາຕະລາງທີ 2**: ເປີເຊັນຂອງລາຍການສິນຄ້າທີ່ມີອັດຕາພາສີ 0% ເຖິງ 5%..................................................27

# ບັນຊີລາຍຊື່ຂອງຕົວອັກສອນຫຍໍ້

AANZFTA : ສັນຍາເພື່ອສ້າງເຂດການຄ້າເສລີອາຊຽນ-ອົດສະຕາລີ -ນິວຊີແລນ

ASEAN: ສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້

CTC: ການປ່ຽນອັດຕາພາສີ

EIF: ຜົນບັງຄັບໃຊ້

FTA: ສັນຍາການຄ້າເສລີ

GATS: ສັນຍາລວມ ຂອງອົງການການຄ້າໂລກວ່າດ້ວຍການຄ້າດ້ານການບໍລິການ

HS: ລະບົບພາສີເອກະພາບ

ICSID: ສູນກາງສາກົນເພື່ອແກ້ໄຂຂໍ້ຂັດແຍ່ງດ້ານການລົງທຶນ

MFN: ປະເທດທີ່ໄດ້ຮັບອະນຸເຄາະຫຼາຍທີ່ສຸດ

ROO: ລະບຽບແຫຼ່ງກຳເນີດສິນຄ້າ

RVC: ອັດຕາສ່ວນມູນຄ່າເພີ້ມພາກພື້ນ

STRACAP: ມາດຕະຖານ, ຂໍ້ກຳນົດດ້ານເຕັກນິກ ແລະຂັ້ນຕອນປະເມີນຄວາມສອດຄ່ອງ

SPS: ສຸຂາອານາໄມ ແລະສຸຂາອານາໄມພືດ

TRIP: ສັນຍາຂອງອົງການການຄ້າໂລກວ່າດ້ວຍການຄ້າທີ່ພົວພັນກັບລິຂະສິດທາງປັນຍາ

UNCITRAL: ຄະນະກຳມາທິການສະຫະປະຊາຊາດວ່າດ້ວຍກົດໝາຍການຄ້າສາກົນ

WCO: ອົງການພາສີໂລກ

WIPO: ອົງການຊັບສິນທາງປັນຍາໂລກ



# ປື້ມຄູ່ມືສຳລັບນັກທຸລະກິດອາຊຽນ

# ຕໍ່ສັນຍາເພື່ອສ້າງເຂດການຄ້າເສລີອາຊຽນ-ອົດສະຕາລີ-ນິວຊີແລນ

# (AANZFTA)

# ພາກທີ 1

## ພາບລວມຂອງສັນຍາ AANZFTA

ສັນຍາເພື່ອສ້າງເຂດການຄ້າເສລີອາຊຽນ-ອົດສະຕາລີ-ນິວຊີແລນ (AANZFTA) ໄດ້ຮັບການລົງນາມ ໂດຍບັນດາລັດຖະມົນຕີເສດຖະກິດອາຊຽນ ແລະຄູ່ພາຄີຈາກອົດສະຕາລີ ແລະນິວຊີແລນ ໃນວັນທີ 27 ກຸມພາ 2009 ແລະຕັ້ງເປົ້າໝາຍວ່າຈະມີຜົນບັງຄັບໃຊ້ໃນວັນທີ 01 ມັງກອນ 2010[1]. ເຂດການຄ້າເສລີນີ້ແມ່ນກວມເອົາປະຊາກອນ 600 ລ້ານຄົນ ແລະກວມເອົາລວມຍອດຜະລິດຕະພັນພາຍໃນພາກພື້ນ ປະມານ 2,7 ຕື້ໂດລາ[2]. ສັນຍາສະບັບໃໝ່ນີ້ ສ້າງຂຶ້ນບົນພື້ນຖານການຕົກລົງທີ່ໄດ້ເຈລະຈາກັນລະຫວ່າງ ປະເທດອາຊຽນ ແລະອົດສະຕາລີ ແລະນິວຊີແລນ ແລະມີຈຸດປະສົງເສີມຂະຫຍາຍທ່າແຮງທາງດ້ານການຄ້າໃນພາກພື້ນ ຊຶ່ງໄດ້ມີຫຼັກຖານຂອງການຂະຫຍາຍການແລກປ່ຽນການຄ້າຢ່າງໄວໃນຊຸມປີຜ່ານມາ.

ນັບແຕ່ເລີ້ມການເຈລະຈາສັນຍາ AANZFTA ໃນປີ 2005, ມູນຄ່າການຄ້າ ພາຍໃນລະຫວ່າງຄູ່ພາຄີຂອງ ສັນຍາໄດ້ເພີ້ມຂຶ້ນໃນແຕ່ລະປີດ້ວຍອັດຕາສະເລ່ຍ 16%. ອົດສະຕາລີ ແລະນິວຊີແລນ ປະກອບກັບອາຊຽນຫົກ (ອາຊຽນເກົ່າ) ຮວມເຂົ້າກັນກາຍເປັນຄູ່ພາຄີທີ່ໃຫ່ຍທີ່ສຸດ. ອາຊຽນໃນຖານະເປັນກຸ່ມ ແມ່ນຄູ່ສັນຍາທີ່ໃຫ່ຍເປັນອັນດັບສອງ ແລະອັນດັບສາມຂອງອົດສະຕາລີ ແລະນິວຊີແລນ. ສັນຍາ AANZFTA ແມ່ນເຂດການຄ້າເສລີທໍາອິດລະຫວ່າງພາກພື້ນກັບພາກພື້ນ ທີ່ມີທັງອົດສະຕາລີ ແລະ ນິວຊີແລນ ແລະ ອາຊຽນເຂົ້າຮ່ວມນໍາ.

---

[1] AANZFTA ຈະມີຜົນບັງຄັບໃຊ້ພາຍຫຼັງ 60 ວັນ ຫຼັງຈາກທີ່ອົດສະຕາລີ ແລະ ນິວຊີແລນ ແລະຢ່າງໜ້ອຍ 4 ປະເທດສະມາຊິກອາຊຽນ ໄດ້ສໍາເລັດຂັ້ນຕອນພາຍໃນ ແລະ ແຈ້ງໃຫ້ປະເທດພາຄີອື່ນຮັບຊາບ. ດີທີ່ສຸດ ສັນຍາ AANZFTA ຈະມີຜົນບັງຄັບໃຊ້ສໍາລັບທັງ 12 ປະເທດພາຄີ ໃນວັນທີ 01 ມັງກອນ ປີ 2010; ເຖິງຢ່າງໃດກໍຕາມ ໃນກໍລະນີ ທີ່ມີບາງປະເທດພາຄີ ບໍ່ສາມາດຈັດຕັ້ງເຂດການຄ້າເສລີໃນເວລາດັ່ງກ່າວໄດ້, ສັນຍາກໍໄດ້ກໍານົດໄວ້ວ່າ ສາມາດເລີ້ມຕົ້ນຈັດຕັ້ງປະຕິບັດສັນຍາໄດ້ ໂດຍປະເທດອົສະຕາລີ ແລະ ນິວຊີແລນ ແລະຢ່າງໜ້ອຍ 4 ປະເທດສະມາຊິກອາຊຽນ. ປື້ມແນະນໍາໄດ້ຊຽນໄວ້ວ່າ ການກໍານົດດັ່ງ ກ່າວ ຈະສາມາດບັນລຸໄດ້ ແລະສັນຍາ AANZFTA ຈະມີຜົນບັງຄັບໃຊ້ ຢ່າງໜ້ອຍສໍາລັບບາງປະເທດພາຄີ ໃນວັນທີ 1 ມັງກອນ 2010.

[2] ເວັ້ນແຕ່ໄດ້ກໍານົດຢູ່ບ່ອນອື່ນ, ທຸກມູນຄ່າທີ່ສະແດງໃນປື້ມແນະນໍາສະບັບນີ້ແມ່ນໃຊ້ເປັນເງິນໂດລາສະຫະລັດ

ສັນຍາໃໝ່ນີ້ ເປັນສັນຍາການຄ້າເສລີທີ່ມີຄວາມີ່ທັນສະໃໝ, ສົມບູນແບບ ຊຶ່ງເປີດກວ້າງໂອກາດໃຫ້ແກ່ນັກທຸລະກິດອາຊຽນ. ການຊ່ວຍໃຫ້ເຂົ້າເຖິງຕະຫຼາດ ໄດ້ເປັນການຊ່ວຍໜູນທີ່ສຳຄັນ ໂດຍການອອກແບບສ້າງລະບຽບການອຳນວຍຄວາມສະດວກ ແລະມາດຕະການຕ່າງໆ ທີ່ມີຄວາມແນ່ນອນ ແລະໂປ່ງໃສກວ່າໃຫ້ແກ່ບັນດາບໍລິສັດທີ່ກຳລັງເຮັດທຸລະກິດໃນພາກພື້ນ. ສັນຍາ AANZFTA ເປັນທັງສັນຍາ *ທີ່ມີຊີວິດ living agreement* ທີ່ຈະມີການປັບປຸງໃຫ້ດີຂຶ້ນເລື້ອຍໆຕະຫຼອດເວລາຂອງການສ້າງກົນໄກ ທີ່ຈະອະນຸຍາດໃຫ້ມີການເປີດເສລີຂຶ້ນຕື່ມ ແລະ ໃນໄລຍະເວລາຂອງການແກ້ໄຂບັນຫາການຈັດຕັ້ງປະຕິບັດຕົວຈິງ. ໂດຍຜ່ານເຂດການຄ້າເສລີ ການເຊື່ອມໂຍງເສດຖະກິດພາກພື້ນ ແລະ ການຮ່ວມມື ຈະຂະຫຍາຍຕົວເພີ້ມຂຶ້ນ ແລະ ເລິກເຊິ່ງກວ່າເກົ່າ ໃນຊຸມປີຕໍ່ໜ້າ.

ແຕ່ວາສັນຍາທີ່ໄດ້ເຈລະຈາລະຫວ່າງລັດຖະບານດ້ວຍກັນ, ດ້ວຍຕົວມັນເອງແມ່ນບໍ່ສາມາດສ້າງເປັນການຄ້າໄດ້. ການຄ້າສາກົນ ແມ່ນທຸລະກິດຂອງທຸລະກິດ ແລະຄວາມເຂົ້າໃຈຕໍ່ເນື້ອໃນຂອງສັນຍາ ຂອງບັນດາຜູ້ປະກອບການ ແມ່ນມີຄວາມສຳຄັນຫຼາຍ ຊຶ່ງຈະເຮັດໃຫ້ເຂົາເຈົ້າມີຜົນປະໂຫຍດໃນການດຳເນີນທຸລະກິດຕົວຈິງ ໃນເຂດການຄ້າເສລີນີ້. ຈຸດປະສົງຂອງປຶ້ມແນະນຳຫົວນີ້ ແມ່ນເພື່ອອະທິບາຍ ໃນກໍລະ ນີການປະຕິບັດຕົວຈິງ ວ່າບັນຍາກາດຂອງການຄ້າໃນພາກພື້ນຈະມີການປ່ຽນແປງໃນຊ່ວງເວລາພາຍຫຼັງ ທີ່ສັນຍາໄດ້ມີຜົນບັງຄັບໃຊ້ໃນຕົ້ນປີ 2010 ຄືແນວໃດ. ຄວາມຮູ້ທີ່ໄດ້ຈາກສ່ວນປະກອບຕົ້ນຕໍ ຂອງເຂດ ການຄ້າເສລີ ແລະ ການຮູ້ຄຸນຄ່າຂອງການປັບປ່ຽນທີ່ເກີດຂຶ້ນໃນເວລາການຈັດຕັ້ງປະຕິບັດ ຈະເຮັດໃຫ້ຜູ້ນຳເຂົ້າ, ຜູ້ສົ່ງອອກ, ນັກລົງທຶນ ແລະ ຜູ້ຊົມໃຊ້ ສາມາດເກັບກ່ຽວຜົນປະໂຫຍດທີ່ໄດ້ຈາກຄວາມຕັ້ງໃຈ ຂອງບັນດາຜູ້ນຳໃນການອຳນວຍຄວາມສະດວກ ໃນເວລາທີ່ພວກເພິ່ນໄດ້ລົງນາມໃນສັນຍາ AANZFTA.

## ພາກທີ 2

# ເນື້ອໃນຕົ້ນຕໍຂອງສັນຍາ AANZFTA

ສັນຍາ AANZFTA ແມ່ນສັນຍາການຄ້າເສລີພາກພື້ນທີ່ທັນສະໄໝ ແລະ ສົມບູນແບບ. ມັນຈະລົບລ້າງອັດຕາພາສີທັງໝົດ ໃນການສົ່ງອອກສິນຄ້າຂອງອາຊຽນໄປປະເທດອົດສະຕາລີ ແລະ ນິວຊີແລນ ດ້ວຍຫຼາຍກວ່າ 96% ຂອງອັດຕາພາສີຂອງອົດສະຕາລີ ຈະຖືກລົບລ້າງໃນເວລາສັນຍາມີຜົນບັງຄັບໃຊ້ ໃນປີ 2010 ແລະ ຫຼາຍຫວ່າ 90% ຂອງອັດຕາພາສີຂອງນິວຊີແລນ ທີ່ໃຊ້ກັບສິນຄ້ານຳເຂົ້າຈາກອາຊຽນ ຈະຖືກລົບລ້າງ ໃນປີ 2013. ອັດຕາພາສີທີ່ຍັງເຫຼືອທັງໝົດຈະຖືກລົບລ້າງໃນປີ 2020. ຂໍ້ຜູກພັນດ້ານອັດຕາ ພາສີນີ້ ຈະນຳໃຊ້ສະເພາະສຳລັບສິນຄ້າທີ່ໄດ້ເງື່ອນໄຂແຫຼ່ງກຳເນີດສິນຄ້າ(ROO)ຂອງສັນຍາ AANZFTA ເທົ່ານັ້ນ. ສັນຍາໃໝ່ນີ້ ຍັງໄດ້ເປີດເສລີໃນຂົງເຂດການບໍລິການຂອງພາກພື້ນ. ຂໍ້ກຳນົດອື່ນຍັງໄດ້ລະບຸເຖິງການລົງທຶນ, ຊັບສິນທາງປັນຍາ, ຂັ້ນຕອນທາງດ້ານພາສີ, ການຄ້າທາງເອເລັກໂຕຣນິກ, ນະໂຍບາຍການແຂ່ງຂັນ, ມາດຕະຖານ ແລະການຍົກຍ້າຍຊົ່ວຄາວຂອງ ນັກທຸລະກິດໃນພາກພື້ນ. ສະຖາບັນໃໝ່ຂອງພາກພື້ນທີ່ສ້າງຂຶ້ນພາຍໃຕ້ສັນຍາ AANZFTA ຈະສ້າງໃຫ້ມີຄວາມໝັ້ນໃຈໃນການຈັດຕັ້ງປະຕິບັດ ທີ່ມີປະສິດທິພາບ ແລະ ຄວາມສາມາດເປີດເສລີຂອງສັນຍາເພື່ອປັບປຸງໃນແຕ່ລະໄລຍະ. ເນື້ອໃນຕົ້ນຕໍຂອງສັນຍາ ໄດ້ສະຫຼຸບຫຍໍ້ໄວ້ຂ້າງລຸ່ມນີ້. ການລະບຸສະເພາະກ່ຽວກັບໂອກາດໃໝ່ໃນການ ເຂົ້າເຖິງຕະຫຼາດການຄ້າດ້ານສິນຄ້າ ແລະ ການຄ້າດ້ານການບໍລິການ ແມ່ນໄດ້ລະບຸໄວ້ໃນພາກທີ 4 ຂອງປຶ້ມແນະນຳທີວນີ້.

**ການຄ້າດ້ານສິນຄ້າ** (ໝວດ 2 ຂອງສັນຍາ AANZFTA)

**ອັດຕາພາສີ**. ດັ່ງທີ່ໄດ້ກ່າວຢູ່ຂ້າງເທິງ, ສັນຍາ AANZFTA ຈະສ້າງໂອກາດໃໝ່ໃຫ້ແກ່ບັນດາຜູ້ສົ່ງອອກ ສຳລັບສິນຄ້າທີ່ໄດ້ແຫຼ່ງກຳເນີດຂອງສັນຍາ AANZFTA ໂດຍຜ່ານການຫຼຸດລົງຢ່າງໄວ ແລະ ການຍົກເລີກພາສີ ດ້ວຍການລົບລ້າງອັດຕາພາສີຂອງເກືອບໝົດທຸກສິນຄ້າໃນມື້ທີ່ສັນຍາມີຜົນບັງຄັບໃຊ້ ຫຼື ໃນຕົ້ນປີ ຂອງການຈັດຕັ້ງປະຕິບັດສັນຍາ. ສັນຍາຍັງໄດ້ກຳນົດໄວ້ເຖິງຄວາມເປັນໄປໄດ້ໃນການເລັ່ງລັດການລົບລ້າງ ຫຼື ຫຼຸດຜ່ອນອັດຕາພາສີ. ສຳລັບຂໍ້ມູນກ່ຽວກັບການນຳໃຊ້ອັດຕາພາສີສະເພາະແຕ່ລະລາຍການສິນຄ້າ, ຜູ້ສົ່ງອອກທີ່ມີຄວາມສົນໃຈ ສາມາດເຂົ້າເບິ່ງໄດ້ໃນແຜນຫຼຸດຜ່ອນອັດຕາພາສີ ຂອງທັງສິບສອງປະເທດພາຄີ ທີ່ມີໃນເວັບໄຊຂອງກອງເລຂາອາຊຽນ www.aseansec.org. ສ່ວນຂໍ້ມູນທົ່ວໄປອື່ນໆກ່ຽວກັບກາລະໂອກາດ ທີ່ມີໃນແຕ່ລະຂະແໜງການ ແມ່ນໄດ້ລະບຸໄວ້ໃນໝວດທີ 4 ຂ້າງລຸ່ມນີ້.

**ມາດຕະການທີ່ບໍ່ແມ່ນພາສີ**. ນອກເໜືອຈາກຂໍ້ກຳນົດກ່ຽວກັບການລຶບລ້າງ ແລະຫຼຸດຜ່ອນອັດຕາພາສີ, ໝວດທີ 2 ຂອງສັນຍາ AANZFTA ຍັງໄດ້ກວມເອົາບັນດາມາດຕະການຈຳກັດທາງດ້ານຈຳນວນ ແລະ ມາດຕະການທີ່ບໍ່ແມ່ນພາສີ. ໃນການຫຼຸດຜ່ອນ ຫຼື ລຶບລ້າງມາດຕະການທີ່ບໍ່ແມ່ນພາສີໃນແຕ່ລະໄລຍະ, ຂັ້ນຕອນການຈັດຕັ້ງປະຕິບັດແມ່ນໄດ້ຖືກສ້າງຂຶ້ນໃນສັນຍາ AANZFTA ຊຶ່ງອະນຸຍາດໃຫ້ມີການທົບທວນຄືນມາດຕະການທີ່ບໍ່ແມ່ນພາສີຂອງລັດຖະບານໃດໜຶ່ງ ໂດຍຄະນະກຳມາທິການການຄ້າດ້ານສິນຄ້າຂອງສັນຍາ AANZFTA ດ້ວຍການທົບທວນການຫຼຸດຜ່ອນ ຫຼືການລຶບລ້າງ ບັນດາມາດຕະການທີ່ມີຜົນກະທົບທາງລົບຕໍ່ການຄ້າ. ສຳລັບນັກທຸລະກິດນີ້ ແມ່ນຂໍ້ກຳນົດທີ່ສຳຄັນອັນໜຶ່ງ. ຜູ້ປະກອບການການຄ້າທີ່ມີຄວາມຮູ້ກ່ຽວກັບມາດຕະການທີ່ບໍ່ແມ່ນພາສີໃນຕະຫຼາດຄ້າຂາຍໃນປະເທດພາຄີຂອງສັນຍາ AANZFTA ທີ່ໄດ້ຮັບຜົນກະທົບຕໍ່ທຸລະກິດຂອງເຂົາເຈົ້າ ແມ່ນສາມາດນຳເອົາບັນຫາເຫຼົ່ານັ້ນ ສະເໜີຕໍ່ລັດຖະບານ ເພື່ອໃຫ້ລັດຖະບານນຳສະເໜີບັນຫາດັ່ງກ່າວ ຕໍ່ຄະນະກຳມາທິການການຄ້າດ້ານສິນຄ້າ.

**ການເສີມຂະຫຍາຍຄວາມໂປ່ງໃສ.** ບັນດານັກທຸລະກິດ ຍັງຈະໄດ້ຮັບຜົນປະໂຫຍດຈາກຂໍ້ກຳນົດກົດລະບຽບ ທີ່ເສີມຂະຫຍາຍຄວາມໂປ່ງໃສ. ສັນຍາເຂດການຄ້າເສລີ ບັງຄັບໃຫ້ແຕ່ລະລັດຖະບານທີ່ ເຂົ້າຮ່ວມພິມເຜີຍແຜ່, ລວມທັງການເຜີຍແຜ່ທາງອິນເຕີເນັດ ບັນດາກົດໝາຍ, ລະບຽບການ, ຂໍ້ຕົກລົງ ແລະ ລະບຽບການທີ່ພົວພັນເຖິງການຄ້າ. ເກືອບທຸກປະເທດ ແມ່ນໄດ້ກຳນົດໃຫ້ມີຄ່າທຳນຽມ ແລະ ຄ່າໃຊ້ຈ່າຍຕ່າງໆ ໃນການນຳເຂົ້າ ທີ່ນອກເໜືອຈາກການເກັບພາສີແບບສະເພາະຜະລິດຕະພັນ ແລະສັນຍາ AANZFTA ໄດ້ຮຽກຮ້ອງໃຫ້ຕ້ອງແຈ້ງຂໍ້ມູນກ່ຽວກັບຄ່າທຳນຽມ ແລະ ຄ່າໃຊ້ຈ່າຍຕ່າງໆເຫຼົ່ານັ້ນໃນອິນເຕີເນັດ. ຂໍ້ບັງຄັບກ່ຽວກັບການໃຫ້ມີຄວາມໂປ່ງໃສດັ່ງກ່າວນີ້ ແມ່ນໄດ້ຖືກວາງອອກໂດຍອົງການການຄ້າໂລກ (WTO).

**ມາດຕະຖານ ແລະບັນດາມາດຕະການສຸຂານາໄມ ແລະສຸຂານາໄມພືດ**

**ມາດຕະຖານ** (ໝວດທີ 6 ຂອງສັນຍາ AANZFTA). ມາດຕະຖານ, ຂໍ້ກຳນົດກົດລະບຽບທາງດ້ານເຕັກ ນິກ ແລະຂັ້ນຕອນການປະເມີນຄວາມສອດຄ່ອງ ແມ່ນຖືກສ້າງຂຶ້ນໂດຍໜ່ວຍງານຂອງລັດຖະບານ ແລະ ພາກເອກະຊົນ ເພື່ອຈຸດປະສົງໄດ້ມາຊຶ່ງນະໂຍບາຍລວມທີ່ສຳຄັນ ເຊັ່ນ ການຮັບປະກັນວ່າສິນຄ້າ ຈະບໍ່ມີຜົນກະທົບຕໍ່ສຸຂະພາບ ຫຼື ບໍ່ມີຄວາມສ່ຽງຕໍ່ຄວາມປອດໄພຂອງຜູ້ບໍລິໂພກ. ຢ່າງໃດກໍຕາມ, ເມື່ອບັນດາມາດຕະການເຫຼົ່ານີ້ມີຄວາມສຳຄັນທີ່ແຕກຕ່າງກັນໃນປະເທດທີ່ຕ່າງກັນ, ຄວາມແຕກຕ່າງດັ່ງກ່າວ ສາມາດເປັນບັນ

ທາສິ່ງທ້າທາຍທີ່ສຳຄັນ (ແລະເພີ້ມຄ່າໃຊ້ຈ່າຍ) ສຳລັບຜູ້ສົ່ງອອກ. ໝວດທີ 6 ຂອງສັນຍາ AANZFTA ໄດ້ ຮັບຮູ້ເຖິງບັນຫານີ້ ແລະ ລວມເອົາພັນທະທີ່ສຳຄັນ ພົວພັນເຖິງມາດຕະຖານ, ຂໍ້ກຳນົດກົດລະບຽບດ້ານ ເຕັກນິກ ແລະຂັ້ນຕອນການປະເມີນຄວາມສອດຄ່ອງ ທີ່ວາງອອກໃຫ້ເປັນພັນທະຂອງລັດຖະບານ ພາຍໃຕ້ ສັນຍາອົງການການຄ້າໂລກ ວ່າດ້ວຍສິ່ງກີດຂວາງ ທາງດ້ານເຕັກນິກຕໍ່ການຄ້າ. ສຳລັບທຸລະກິດ, ຂໍ້ກຳນົດ ທີ່ພົວພັນເຖິງມາດຕະຖານຂອງສັນຍາ AANZFTA ແມ່ນມີຄວາມໝາຍສຳຄັນ ໃນການຄ້າຂາຍ.

ໃນການປະຕິບັດໃຫ້ສອດຄ່ອງກັບຂໍ້ກຳນົດທີ່ກ່ຽວຂ້ອງຂອງອົງການການຄ້າໂລກ WTO ນັ້ນ ສັນ ຍາ AANZFTA ໄດ້ລວມເອົາພັນທະທີ່ເປັນພື້ນຖານ ເພື່ອນຳໃຊ້ມາດຕະຖານຂອງສາກົນ ເປັນບ່ອນອີງ ໃຫ້ແກ່ຂໍ້ກຳນົດກົດລະບຽບດ້ານເຕັກນິກແຫ່ງຊາດ. ໃນເມື່ອມາດຕະຖານສາກົນບໍ່ໄດ້ຖືກນຳໃຊ້ ຍ້ອນໄດ້ ຖືກພິຈາລະນາວ່າເປັນມາດຕະການທີ່ບໍ່ມີປະສິດທິຜົນ ຫຼື ບໍ່ມີຄວາມເໝາະສົມ ແລະ ເມື່ອມາດຕະຖານ ແຫ່ງຊາດ ກໍມີຄວາມແຕກຕ່າງກັນໃນລະຫວ່າງບັນດາປະເທດສະມາຊິກສັນຍາ AANZFTA ດັ່ງນັ້ນ ບັນດາ ລັດຖະບານຖືກຮຽກຮ້ອງໃຫ້ພິຈາລະນາຮັບຮູ້ຂໍ້ກຳນົດກົດລະບຽບດ້ານເຕັກນິກ ຂອງປະເທດຄູ່ພາຄີອື່ນເທົ່າ ທຽມກັບມາດຕະການທີ່ນຳໃຊ້ໃນປະເທດຂອງຕົນ ແລະ ເຊັ່ນດຽວກັນກັບຂັ້ນຕອນການປະເມີນຄວາມສອດ ຄ່ອງ. ການສົ່ງເສີມໃຫ້ຂໍ້ກຳນົດເຫຼົ່ານີ້ມີຄວາມເທົ່າທຽມກັນ ແມ່ນມີຄວາມສຳຄັນໃຫ້ແກ່ນັກທຸລະກິດ ຍ້ອນ ວ່າຈຸດປະສົງຂອງທຸລະກິດ ແມ່ນຫຼີກລ້ຽງການກວດກາສິນຄ້າຫຼາຍເທື່ອ ແລະສິ້ນເປືອງ ຍ້ອນການໃຊ້ມາດ ຕະຖານທີ່ແຕກຕ່າງກັນ.

ໝວດວ່າດ້ວຍມາດຕະຖານ ຍັງເປັນພັນທະໃຫ້ລັດຖະບານທີ່ເຂົ້າຮ່ວມສັນຍາ ໃຫ້ລິເລີ້ມດຳເນີນ ການສ້າງຄວາມສະດວກແກ່ການຄ້າ ທີ່ພົວພັນເຖິງມາດຕະຖານ, ຂໍ້ກຳນົດທາງດ້ານເຕັກນິກ ແລະ ຂັ້ນຕອນ ການປະເມີນຄວາມສອດຄ່ອງ ລວມເຖິງສັນຍາວ່າດ້ວຍບັນຫາການວາງກົດລະບຽບຕ່າງໆ. ຕົວຢ່າງ, ມີສອງ ຫຼື ຫຼາຍປະເທດສະມາຊິກສັນຍາ AANZFTA ໄດ້ປະຕິບັດສັນຍາ ຫຼື ການກຳນົດມາດຕະຖານໃຫ້ສອດຄ່ອງ ຫຼື ການຮັບຮູ້ຄວາມເທົ່າທຽມກັນຂອງບັນດາຂໍ້ກຳນົດທາງດ້ານເຕັກນິກ ຫຼື ຂັ້ນຕອນການປະເມີນຄວາມ ສອດຄ່ອງນັ້ນ ປະເທດສະມາຊິກເຫຼົ່ານັ້ນ ແມ່ນມີພັນທະເປີດຮັບການເຂົ້າຮ່ວມສັນຍາໃຫ້ແກ່ສະມາຊິກອື່ນ ຂອງສັນຍາ AANZFTA ທີ່ສາມາດປະຕິບັດໄດ້ຕາມເງື່ອນໄຂຂອງການກຳນົດ ດັ່ງກ່າວ.

ເພື່ອໃຫ້ໝັ້ນໃຈວ່າ ເຂດການຄ້າເສລີຍັງຄົງເປັນສັນຍາທີ່ມີຊີວິດ living agreement ທີ່ສາມາດ ປັບປຸງໄດ້ຕະຫຼອດເວລານັ້ນ ປະເທດພາຄີ ຍັງໄດ້ພ້ອມກັນສ້າງຕັ້ງອະນຸກຳມະການດ້ານມາດຕະຖານ, ລະ ບຽບການດ້ານເຕັກນິກ ແລະ ຂັ້ນຕອນປະເມີນຄວາມສອດຄ່ອງຂຶ້ນ (ຊຶ່ງເອີ້ນຫຍໍ້ວ່າ ອະນຸກຳມະການ

STRACAP) ຊຶ່ງມີໜ້າທີ່ປະຊຸມກັນເປັນແຕ່ລະໄລຍະ ເພື່ອສົ່ງເສີມແລະກວດກາການຈັດຕັ້ງປະຕິບັດຂໍ້ກຳນົດຕ່າງໆ ທີ່ພົວພັນເຖິງມາດຕະຖານຂອງສັນຍາ AANZFTA. ປະສົບການຂອງເຂດການຄ້າເສລີອື່ນ ໄດ້ສະແດງໃຫ້ເຫັນວ່າການສ້າງໜ່ວຍງານດັ່ງກ່າວ ຈະເຮັດໃຫບັນດາປະເທດພາຄີສາມາດແກ້ໄຂບັນຫາການຄ້າທີ່ເກີດຂຶ້ນໂດຍການນຳໃຊ້ບັນດາມາດຕະຖານ ແລະ ຂັ້ນຕອນການປະເມີນຄວາມສອດຄ່ອງແຫ່ງຊາດ (ຂອງແຕ່ລະປະເທດ) ທີ່ແຕກຕ່າງກັນ.

**ມາດຕະການສຸຂານາໄມ ແລະສຸຂານາໄມພືດ (SPS)**(ໝວດທີ 5 ຂອງສັນຍາ AANZFTA)

ບັນດາມາດຕະການເຫຼົ່ານີ້ຖືກວາງອອກເພື່ອປົກປ້ອງຊີວິດ ແລະ ສຸຂະພາບຂອງຄົນ, ສັດ ແລະ ຕົ້ນໄມ້ ຊຶ່ງຈຳເປັນຕ້ອງໄດ້ພິຈາລະນາເຖິງເງື່ອນໄຂສະພາບແວດລ້ອມສະເພາະຂອງແຕ່ລະປະເທດ ດັ່ງນັ້ນຈະເປັນຜົນເຮັດໃຫ້ ຄວາມສຳຄັນຂອງບັນດາມາດຕະການດັ່ງກ່າວມີຄວາມແຕກຕ່າງກັນໄປ ຖ້າທຽບລະຫວ່າງປະເທດໜຶ່ງ ກັບອີກປະເທດອື່ນ. ຍ້ອນມາດຕະຖານຂອງສິນຄ້າ, ຄວາມແຕກຕ່າງຂອງມາດຕະການດ້ານ SPS ກໍສາມາດເປັນສິ່ງກໍ່ເກີດບັນຫາການຄ້າໄດ້. ໝວດທີ 5 ຂອງສັນຍາ AANZFTA ຄາດຫວັງຈະຊ່ວຍແບ່ງເບົາຄວາມສາມາດເປັນໄປໄດ້ໃນຫຼາຍວິທີ ຊຶ່ງເຄີຍເກີດຂຶ້ນ ກັບປະຊາຄົມທຸລະກິດຢ່າງຕໍ່ເນື່ອງ.

ໃນບາດກ້າວທຳອິດ, ລັດຖະບານຂອງປະເທດສະມາຊິກສັນຍາ AANZFTA ຖືກຮຽກຮ້ອງໃຫ້ສ້າງຂໍ້ກຳນົດທີ່ເທົ່າທຽມກັນ ແລະ ດຳເນີນການຕັດສິນເທົ່າທຽມກັນ ເພື່ອຫຼີກລ້ຽງບັນຫາທີ່ກ່ຽວພັນກັບການຄ້າໃນຂົງເຂດ SPS. ນີ້ຍັງແມ່ນພັນທະໜຶ່ງເພື່ອກ້າວໄປເຖິງການເຈລະຈາ ຕາມການສະເໜີຂອງປະເທດພາຄີອື່ນ ເພື່ອເປົ້າໝາຍສ້າງຂໍ້ກຳນົດໃນການຮັບຮູ້ທີ່ເທົ່າທຽມກັນແບບສອງຝ່າຍ ກ່ຽວກັບບັນດາມາດຕະການສະເພາະຂອງ SPS .

ສ່ວນບາດກ້າວທີສອງ, ສັນຍາ AANZFTA ໄດ້ສ້າງກົນໄກປຶກສາຫາລື ເພື່ອແກ້ໄຂບັນຫາການຄ້າທີ່ກ່ຽວພັນກັບມາດຕະການ SPS. ໃນກໍລະນີ ທີ່ຜູ້ສົ່ງອອກສັງເກດເຫັນວ່າ ລັດຖະບານຂອງສັນຍາ AANZFTA ໃດໜຶ່ງໄດ້ນຳໃຊ້ມາດຕະການ SPS ໃນທາງທີ່ບໍ່ມີຄວາມຈຳເປັນ ແລະ ມີຜົນກະທົບທາງລົບຕໍ່ການຊື້ຂາຍຂອງລາວໃນພາກພື້ນ ລາວສາມາດສະເໜີບັນຫານັ້ນຕໍ່ລັດຖະບານຂອງລາວ ຊຶ່ງລັດຖະບານຈະສະເໜີ ນຳໃຊ້ກົນໄກການປຶກສາຫາລືເພື່ອພະຍາຍາມແກ້ໄຂບັນຫາແບບສອງຝ່າຍ. ບັນຫາທີ່ບໍ່ສາມາດແກ້ໄຂໄດ້ແບບສອງຝ່າຍ ແມ່ນສາມາດນຳສະເໜີຕໍ່ຄະນະກຳມະການຮ່ວມຂອງເຂດການຄ້າເສລີ ເພື່ອຊ່ວຍແກ້ໄຂ.

ສຸດທ້າຍ, ໝວດຂອງມາດຕະການ SPS ຂອງສັນຍາ AANZFTA ກໍໄດ້ສ້າງຕັ້ງອະນຸກຳມະການກ່ຽວກັບບັນຫາ SPS ເພື່ອຈຸດປະສົງທົບທວນຄືນຄວາມຄືບໜ້າໃນການຈັດຕັ້ງປະຕິບັດບັນດາຂໍ້ກຳນົດ SPS ຂອງເຂດການຄ້າເສລີນີ້ ລວມເຖິງການສ້າງໜ່ວຍງານສະເພາະກິດ ຊຶ່ງຈະຊ່ວຍເຮັດໃຫ້ເປົ້າໝາຍຂອງຂໍ້ກຳນົດໃນໝວດນີ້ໄດ້ຮັບການປັບປຸງໃຫ້ດີຂຶ້ນໃນແຕ່ລະໄລຍະ. ດ້ວຍກົນລະນີກ່ຽວກັບມາດຕະຖານຂອງສິນຄ້າ ສະຖາບັນສັນຍາທີ່ມີຊີວິດ ຄືດັ່ງອະນຸກຳມະການ SPS ແມ່ນຖືກຄົ້ນພົບເພື່ອຊ່ວຍອຳນວຍຄວາມສະດວກໃຫ້ແກ່ການເປີດເສລີການຄ້າ ໃນພາກເນື້ອໃນຂອງສັນຍາການຄ້າເສລີອື່ນໆ.

**ການຄ້າດ້ານການບໍລິການ** (ໝວດທີ 8 ຂອງສັນຍາ AANZFTA)

ໂດຍຜ່ານສັນຍາ AANZFTA, ບັນດາປະເທດພາຄີ ແມ່ນໄດ້ປະຕິບັດເກີນພັນທະແບບສອງຝ່າຍໃນການຄ້າດ້ານການບໍລິການທີ່ປະເທດເຫຼົ່ານັ້ນມີໄວ້ໃນWTO. ພັນທະດັ່ງກ່າວ ລວມທັງການເຂົ້າເຖິງຕະຫຼາດ, ການປະຕິບັດແບບພາຍໃນຊາດ, ລະບຽບປະຕິບັດຕໍ່ປະເທດທີ່ໄດ້ຮັບອະນຸເຄາະຫຼາຍທີ່ສຸດ ແລະ ມາດຕະການປົກປ້ອງ ແລະ ຫຼາຍໆຂໍ້ກຳນົດກົດລະບຽບ ແລະພັນທະອື່ນໆ ຊຶ່ງຈະຊ່ວຍໃຫ້ມີຄວາມແນ່ນອນ ແລະໂປ່ງໃສ ໃຫ້ແກ່ຜູ້ສົ່ງອອກຂອງອາຊຽນໃນວົງການການບໍລິການ.

ເຖິງວ່າລະບຽບການຂອງການຄ້າດ້ານການບໍລິການໃນສັນຍາ AANZFTA ແມ່ນມີສ່ວນກ່ຽວພັນຢູ່ໃນຫຼາຍສັນຍາຂອງ WTO-Plus (ໝາຍຄວາມວ່າ ພັນທະທີ່ມີຢູ່ໃນສັນຍານີ້ ແມ່ນລື່ນກາຍພັນທະ ທີ່ແຕ່ລະປະເທດພາຄີຕ້ອງປະຕິບັດຢູ່ໃນກອບສັນຍາທົ່ວໄປວ່າດ້ວຍການຄ້າດ້ານການບໍລິການຂອງ WTO (GATS)) ນັ້ນ ຢູ່ໃນກອບເຂດການຄ້າເສລີ ນີ້ກໍມີໂຄງຮ່າງຄືກັນກັບ GATS. ໝວດທີ່ກ່ຽວກັບການຄ້າດ້ານການບໍລິການໄດ້ວາງອອກກ່ຽວກັບສິດແລະພັນທະທົ່ວໄປຂອງສັນຍາ ເພື່ອໃຫ້ທຸກຄົນໃຊ້ຮ່ວມກັນ.

### ຫ້ອງທີ 1: ຄວາມເຂົ້າໃຈກ່ຽວກັບພັນທະຕໍ່ບັນຊີລາຍຊື່ຂະແໜງການຄ້າທີ່ເປີດໃຫ້ບໍລິການ

ຢູ່ໃນສັນຍາ GATS ຊະນິດ ບັນຊີລາຍຊື່ທີ່ເປີດ ແກ່ການປະຕິບັດພັນທະດ້ານການບໍລິການໃນສັນຍາ AANZFTA ນັ້ນ ບັນດາປະເທດໄດ້ ກຳນົດພັນທະຂໍ້ຜູກພັນດ້ວຍ ໂມດຂອງການຈັດຫາ ແລະ ກຳນົດໂດຍອີງຕາມວ່າ ເມື່ອ ໃດທີ່ພັນທະດັ່ງກ່າວກະທົບຕໍ່ຄວາມສາມາດດຳເນີນທຸລະກິດໃນປະເທດ (ການເຂົ້າເຖິງຕະຫຼາດ) ຫຼື ສະແດງເຖິງ ມາດຕະການທີ່ເລືອກປະຕິບັດກັບຜູ້ໃຫ້ບໍລິການຕ່າງປະເທດ (ການປະຕິບັດແບບພາຍໃນຊາດ). ໃນບາງກໍລະນີ ພັນທະຂໍ້ຜູກພັນໄດ້ກຳນົດໄວ້ເປັນ None (ຊຶ່ງໝາຍຄວາມວ່າ ບໍ່ມີສິ່ງກີດຂວາງ ແລະ/ຫຼື ບໍ່ມີການຈຳແນກປະຕິບັດ) ຫຼື ບໍ່ຜູກມັດ ( unbound ) ຊຶ່ງເປັນເຄື່ອງໝາຍຂອງການຈະບໍ່ປະຕິບັດພັນທະຂອງລັດຖະບານ ທີ່ກ່ຽວຂ້ອງ. ທັງ 4 ຊະ ນິດຂອງໂມດການຈັດຫາ ມີດັ່ງນີ້:

**ໂມດທີ 1: cross border supply** ການບໍລິການຈາກດິນແດນຂອງປະເທດສະມາຊິກໜຶ່ງເຂົ້າໄປຍັງດິນແດນ ຂອງປະເທດສະມາຊິກອື່ນໃດໜຶ່ງ ( ເມື່ອຜູ້ສົ່ງອອກການບໍລິການໃນປະເທດ **ກ** ຂາຍການ ບໍລິການໃຫ້ ຜູ້ຊົມໃຊ້ຢູ່ປະເທດ **ຂ** ແລະ ທັງສອງ ບໍ່ໄດ້ອອກຈາກປະເທດຂອງຕົນ) ຕົວຢ່າງ: ນັກສະຖາປະນິກຂອງປະເທດສິງກະໂປ ຂາ ແຜນວາດການສ້າງຕຶກ(ແບບເຮືອນ) ໃຫ້ແກ່ບໍລິສັດກໍ່ສ້າງ ຢູ່ປະເທດນິວຊີແລນ.

**ໂມດທີ 2: Consumption abroad** ການບໍລິການ ໃນດິນແດນຂອງປະເທດສະມາຊິກໜຶ່ງ ແກ່ຜູ້ຊົມໃຊ້ການບໍລິການຂອງປະເທດສະມາຊິກອື່ນໃດໜຶ່ງ ( ເມື່ອ ຜູ້ຊົມໃຊ້ການບໍລິການ ຈາກປະເທດ **ຂ** ເດີນທາງທ່ອງທ່ຽວ ໄປປະເທດ **ກ** ເພື່ອຊື້ ແລະຊົມໃຊ້ການບໍລິການ ຢູ່ປະເທດ ກ ) ຕົວຢ່າງ: ນັກຮຽນຈາກປະເທດມາເລເຊຍ ເດີນທາງໄປປະເທດອິດສະຕາລີ ເພື່ອເຂົ້າຮຽນໃນມະຫາວິທະຍາໄລຢູ່ທີ່ນັ້ນ;

**ໂມດທີ 3: Commercial presence** ການບໍລິການໂດຍຜູ້ໃຫ້ບໍລິການຂອງປະເທດສະມາຊິກໜຶ່ງ ໂດຍຜ່ານຕົວແທນທາງການຄ້າ ໃນດິນແດນຂອງປະເທດສະມາຊິກອື່ນໃດໜຶ່ງ (ເມື່ອຜູ້ສະໜອງການບໍລິການ ໃນປະເທດ **ກ** ໄດ້ສ້າງຕັ້ງຫ້ອງການໜຶ່ງຂຶ້ນໃນປະເທດ **ຂ** ເພື່ອຂາຍບໍລິການໃຫ້ຜູ້ຊົມໃຊ້ໃນປະເທດ **ຂ** ) ຕົວຢ່າງ: ບໍລິສັດ ກົດໝາຍໜຶ່ງຂອງອິດສະຕາລີ ໄດ້ເປີດຫ້ອງການ ຢູ່ຮ່າໂນ້ຍ; ແລະ

**ໂມດທີ 4: Temporary movement of natural persons** ການບໍລິການ ໂດຍຜູ້ໃຫ້ບໍລິການຂອງ ປະເທດສະມາຊິກໜຶ່ງ ໂດຍຜ່ານບຸກຄົນທຳມະດາຂອງປະເທດສະມາຊິກດັ່ງກ່າວ ໃນດິນແດນຂອງ ປະເທດສະມາຊິກອື່ນໃດໜຶ່ງ ( ເມື່ອປະຊາຊົນຜູ້ໜຶ່ງໄດ້ຖືກຈ້າງ ຈາກຜູ້ສະໜອງບໍລິການໃນປະເທດ **ກ** ເດີນທາງຊົ່ວຄາວໄປປະເທດ **ຂ** ເພື່ອໃຫ້ ບໍລິການແກ່ຜູ້ຊົມໃຊ້ໃນປະເທດ **ຂ** ) ຕົວຢ່າງ: ເຄືອຂ່າຍໂຮງແຮມ ໜຶ່ງຂອງ ນິວຊີແລນ ສົ່ງຜູ້ຈັດການ ໄປເປີດໂຮງແຮມໃໝ່ຢູ່ ບຣູໄນ ເພື່ອເປັນຜູ້ຈັດການໂຮງແຮມ ໃນສອງປີທຳອິດ.

ນອກເໜືອຈາກນັ້ນ, ແຕ່ລະປະເທດພາຄີຂອງສັນຍາ AANZFTA ກໍຍັງມີແຜນຂໍ້ຜູກພັນສະເພາະ ຊຶ່ງຈັດເປັນບັນຊີການເຂົ້າຕະຫຼາດ ແລະພັນທະການປະຕິບັດແບບພາຍໃນຊາດ ຊຶ່ງໃຊ້ເປັນການກະກຽມດໍາເນີນງານຂອງຂະແໜງບໍລິການ ແລະຂະແໜງບໍລິການຍ່ອຍຂອງແຕ່ລະປະເທດ ຕາມຮູບແບບຂອງການສະໜອງທີ່ແຕກຕ່າງກັນ ທີ່ຖືກນໍາໃຊ້ໃນສັນຍາ AANZFTA ແລະ GATS . ກາລະໂອກາດອັນໃໝ່ໄດ້ຖືກໄຂຂຶ້ນໃຫ້ແກ່ບັນດາຜູ້ສົ່ງອອກຂອງອາຊຽນ ຍ້ອນວ່າ ພັນທະຂອງອົດສະຕາລີ ແລະນິວຊີແລນ ປະຕິບັດເກີນພັນທະໃນ WTO ທີ່ໄດ້ປຶກສາຫາລືກັນໃນພາກທີ ຂອງປຶ້ມຄູ່ມືທີ່ນີ້.

ຢູ່ໃນຂະແໜງການໃດທີ່ມີການປະຕິບັດພັນທະການເຂົ້າສູ່ຕະຫຼາດແບບເຕັມຮູບແບບ, ການດໍາເນີນການຂອງປະເທດພາຄີຂອງສັນຍາ AANZFTA ແມ່ນບໍ່ສ້າງສິ່ງກີດຂວາງ ເຊັ່ນ: ການຈໍາກັດຈໍານວນຂອງຜູ້ໃຫ້ບໍລິການ ທີ່ໄດ້ຮັບອະນຸຍາດໃຫ້ເຂົ້າຕະຫຼາດ; ການຈໍາກັດມູນຄ່າ ຂອງການໂອນຍ້າຍການບໍລິການທີ່ໄດ້ຮັບອະນຸຍາດແລ້ວ ຫຼືຈໍານວນການໃຫ້ບໍລິການ; ການຈໍາກັດດ້ານເງິນທຶນຕ່າງປະເທດທີ່ໃຊ້ໃນການດໍາເນີນງານ; ແລະ ມາດຕະການທີ່ຮຽກຮອງໃຫ້ເຮັດບໍລິການຜ່ານຊະນິດເງິນທຶນສະເພາະໃດໜຶ່ງ. ເມື່ອຂໍ້ຜູກພັນທັງໝົດໄດ້ຮັບການປະຕິບັດ ກ່ຽວກັບການປະຕິບັດແບບພາຍໃນຊາດ ລັດຖະບານ ຕົກລົງໃຫ້ຜູ້ສະໜອງບໍລິການຕ່າງປະເທດ ໄດ້ຮັບການປະຕິບັດບໍ່ໜ້ອຍກວ່າທີ່ຕົນປະຕິບັດກັບຜູ້ສະໜອງພາຍໃນຊາດ. ເຖິງຢ່າງໃດກໍຕາມ, ດັ່ງທີ່ໄດ້ລະບຸໄວ້ຂ້າງເທິງ, ແຜນຂໍ້ຜູກພັນຂອງບາງປະເທດອາດມີບາງຂໍ້ຈໍາກັດກ່ຽວກັບການເຂົ້າຕະຫຼາດ ຫຼືການປະຕິບັດແບບພາຍໃນຊາດ ໃນຮູບແບບເຮັດໃນລວງດຽວກັນ ( ຂອງທຸກຂະແໜງການ) ຫຼືເຮັດສະເພາະໃນຂະແໜງການໃດໜຶ່ງ.

**ລະບຽບການພາຍໃນປະເທດ.** ໝວດທີ 8 ຂອງສັນຍາ AANZFTA ວ່າດ້ວຍການຄ້າດ້ານການບໍລິການ ຍັງບັນຈຸບາງພັນທະທີ່ສໍາຄັນຂອງລັດຖະບານ ທີ່ກ່ຽວພັນເຖິງຂໍ້ກໍານົດກົດລະບຽບພາຍໃນ. ບັນດາພັນທະ ແລະການຈັດຕັ້ງປະຕິບັດທີ່ມີປະສິເທີພາບເຫຼົ່ານີ້ ແມ່ນໄດ້ຮັບການສົນໃຈໃນພາກປະຕິບັດຂອງນັກທຸລະກິດ ? ຕົວຢ່າງ, ທຸກມາດຕະການທີ່ໃຊ້ກັບການຍື່ນຄໍາຮ້ອງທົ່ວໄປ ຕ້ອງຖືກດໍາເນີນຕາມລະບຽບບໍລິຫານໃນລັກສະນະທີ່ມີເຫດຜົນ, ມີປະສິດທິພາບ ແລະ ເປັນທໍາ. ໃນທໍານອງດຽວກັນ, ໃນຂະແໜງການທີ່ມີການ ນໍາໃຊ້ຂໍ້ຜູກພັນແບບສະເພາະ, ຂັ້ນຕອນ ແລະ ເງື່ອນໄຂດ້ານຄຸນນະພາບ, ມາດຕະຖານດ້ານເຕັກນິກ ແລະ ຂັ້ນຕອນ ແລະເງື່ອນໄຂການອະນຸຍາດ ຈະຕ້ອງປະຕິບັດບົນພື້ນຖານຕາມເງື່ອນໄຂດ້ານເປົ້າໝາຍ ແລະ ຄວາມໂປ່ງໃສທີ່ວາງໄວ້; ຈະຕ້ອງບໍ່ເພີ່ມພາລະທີ່ບໍ່ຈໍາເປັນ; ແລະ ດ້ວຍຕົວມັນເອງຈະບໍ່ກໍ່ໃຫ້ເກີດເປັນສິ່ງຈໍາກັດດ້ານການສະໜອງຂອງວຽກບໍລິການ.

**ການໄດ້ຮັບສິດເປັນຜູ້ສະໜອງ.** ໃນກໍລະນີທີ່ນັກທຸລະກິດໃນຂະແໜງບໍລິການຖືກຮຽກຮ້ອງໃຫ້ຍື່ນສະເໜີເພື່ອຂໍສິດເປັນຜູ້ສະໜອງດ້ານບໍລິການໃນຕະຫຼາດ, ສັນຍາ AANZFTA ໄດ້ກໍານົດໃຫ້ເຈົ້າໜ້າທີ່ທີ່ຈະມອບສິດດັ່ງກ່າວໃຫ້ປະຕິບັດຕາມເພື່ອ:

- ໃຫ້ໝັ້ນໃຈວ່າ ຜູ້ຍື່ນຄໍາຮ້ອງມີຂໍ້ມູນແລະເວລາພຽງພໍເພື່ອປະກອບຂໍ້ມູນຕ່າງໆໃສ່ໃບຟອມໃຫ້ຄົບຖ້ວນ,
- ແຈ້ງໃຫ້ຜູ້ຍື່ນຄໍາຮ້ອງກ່ຽວກັບຄໍາຕັດສິນພາຍໃນໄລຍະເວລາທີ່ສົມເຫດສົມຜົນ (ເໝາະສົມ)?
- ສະໜອງຂໍ້ມູນກ່ຽວກັບສະຖານະຂອງຄໍາຮ້ອງໃນການພິຈາລະນາ, ແລະ
- ເມື່ອຄໍາຮ້ອງຖືກປະຕິເສດ ຕ້ອງສະໜອງໃຫ້ແກ່ຜູ້ຍື່ນຄໍາຮ້ອງ ບັນດາຂໍ້ມູນກ່ຽວກັບເຫດຜົນເພື່ອປະຕິບັດ ແລະໃຫ້ໂອກາດແກ່ຜູ້ຍື່ນຄໍາຮ້ອງ ໄດ້ຍື່ນຄໍາຮ້ອງສະບັບໃໝ່ຖ້າເຂົາມີຄວາມຕ້ອງການ.

**ຄວາມໂປ່ງໃສ.** ນັກທຸລະກິດຈະໄດ້ຮັບໂອກາດຮຽນຮູ້ກ່ຽວກັບລະບຽບ, ຂໍ້ກໍານົດກົດລະບຽບຕ່າງໆ ແລະມາດຕະການອື່ນໆ ທີ່ກະທົບຕໍ່ການຄ້າດ້ານການບໍລິການ ໂດຍຜ່ານການເງື່ອນໄຂທີ່ກໍານົດໄວ້ໃນສັນຍາ AANZFTA ວ່າ ຂໍ້ມູນກ່ຽວກັບບັນດາມາດຕະການເຫຼົ່ານີ້ ແລະ ທຸກສັນຍາສາກົນ ທີ່ອາດມີຜົນກະທົບຕໍ່ການຄ້າດ້ານການບໍລິການ ແມ່ນຈະຖືກພິມເຜີຍແຜ່ ແລະມີຢູ່ໃນອິນເຕີເນັດ. ລັດຖະບານຍັງຖືກຮຽກຮ້ອງໃຫ້ສ້າງຕັ້ງຈຸດຕອບຂໍ້ສັກຖາມເພື່ອມີໜ້າທີ່ແຈ້ງຕອບຂໍ້ຮຽກຮ້ອງກ່ຽວກັບບັນດາຂໍ້ມູນຂ່າວສານທີ່ໄດ້ຮັບຈາກປະເທດຄູ່ພາຄີອື່ນຂອງສັນຍາ AANZFTA ຢ່າງໄວ.

**ການຮັບຮູ້**. ເປັນສ່ວນໜຶ່ງທີ່ສໍາຄັນໃນໝວດດ້ານການບໍລິການຂອງສັນຍາ AANZFTA ທີ່ສົ່ງເສີມໃຫ້ມີການຮັບຮູ້ກ່ຽວກັບການສຶກສາ ແລະ/ຫຼື ປະສົບການ ທີ່ກໍານົດໃຫ້ມີໃນການເຂົ້າຮ່ວມດ້ວຍການອອກໃບ ອະນຸຍາດ ແລະການຢັ້ງຢືນ ເພື່ອດໍາເນີນການບໍລິການວຽກງານໃດໜຶ່ງ. ປະເທດພາຄີຖືກຮຽກຮ້ອງໃຫ້ ເຂົ້າຮ່ວມສ້າງຄວາມເປັນເອກະພາບ ບັນດາເງື່ອນໄຂເຫຼົ່ານີ້ ຫຼື ເຂົ້າຮ່ວມການເຈລະຈາເພື່ອສ້າງສັນຍາການຮັບຮູ້ ຊຶ່ງສິ່ງດັ່ງກ່າວຈະເຮັດໃຫ້ ຜູ້ສະໜອງການບໍລິການທີ່ມີຄວາມຊໍານານງານໃນປະເທດພາຄີຂອງສັນຍາ AANZFTA ໃດໜຶ່ງສາມາດດໍາເນີນການຄ້າຂອງພວກເຂົາໃນປະເທດພາຄີອື່ນໄດ້ຢ່າງງ່າຍດາຍກ່ວາເກົ່າ. ເມື່ອມີສອງ ຫຼືຫຼາຍປະເທດພາຄີຂອງສັນຍາ AANZFTA ເຂົ້າຮ່ວມໃນການປະຕິບັດລັກສະນະນີ້ແລ້ວ ພວກເຂົາມີພັນທະຕ້ອງອະນຸຍາດໃຫ້ປະເທດພາຄີອື່ນສາມາດເຈລະຈາການເຂົ້າຮ່ວມໃນສັນຍານໍາໄດ້. ເມື່ອປະເທດພາຄີໜຶ່ງ ສະໝັກໃຈຍອມຮັບຮູ້ແບບອັດຕະໂນມັດ ປະເທດສະມາຊິກນັ້ນ ຈະໃຫ້ໂອກາດທີ່ພຽງພໍແກ່ປະເທດສະມາຊິກອື່ນໃດໜຶ່ງເພື່ອສະແດງໃຫ້ເຫັນວ່າປະເທດເຫຼົ່ານັ້ນສາມາດປະຕິບັດໄດ້ຕາມເງື່ອນໄຂໄດ້ເໝືອນກັນ.

**ການປະຕິບັດຕໍ່ການຜູກຂາດ ແລະ ບາງການປະຕິບັດຕົວຈິງຂອງທຸລະກິດ.** ເມື່ອລັດຖະບານໃດໜຶ່ງຂອງສັນຍາ AANZFTA ອະນຸຍາດໃຫ້ມີການກຳນົດຜູກຂາດຕໍ່ບາງວຽກງານບໍລິການໃນຕະຫຼາດ, ລັດຖະບານດັ່ງກ່າວມີພັນທະໃນເຂດການຄ້າເສລີ ເພື່ອໝັ້ນໃຈວ່າການຜູກຂາດດັ່ງກ່າວ ຈະບໍ່ເຮັດໃນທາງກຳນົດຂໍ້ຜູກພັນສະເພາະຂອງລັດຖະບານດ້ານການບໍລິການ. ໃນທຳນອງດຽວກັນ, ເມື່ອລັດຖະບານຖືກກ່າວຫາວ່າອະນຸຍາດໃຫ້ຜູ້ສະໜອງບໍລິການປະຕິບັດໄປໃນທາງຈຳກັດການແຂ່ງຂັນ ແລະ ຈຳກັດການຄ້າ ລັດຖະບານດັ່ງກ່າວຈະຖືກຮຽກຮ້ອງໃຫ້ເຂົ້າສູ່ການປຶກສາຫາລື ເພື່ອລຶບລ້າງການປະພຶດຕ້ານການແຂ່ງຂັນ.

**ການປະຕິເສດຜົນປະໂຫຍດ.** ຍ້ອນເປັນກໍລະນີສຳລັບທຸກສິດທິພິເສດຂອງສັນຍາການຄ້າ, ສັນຍາ AANZFTA ໄດ້ຖືກອອກແບບໄວ້ເພື່ອສະໜອງຜົນປະໂຫຍດໃຫ້ແກ່ບັນດາບໍລິສັດ ແລະ ຜູ້ສະໜອງດ້ານບໍລິການໃນພາກພື້ນ, ບໍ່ແມ່ນມີໄວ້ໃຫ້ແກ່ປະເທດທີ່ບໍ່ແມ່ນພາຄີ. ເພື່ອໝັ້ນໃຈວ່ານີ້ແມ່ນກໍ ລະນີດັ່ງກ່າວ, ມາດຕາ 21 ຂອງໝວດທີ 8 ຂອງສັນຍາ ໄດ້ອະນຸຍາດໃຫ້ປະເທດພາຄີປະຕິເສດຜົນປະ ໂຫຍດຂອງສັນຍາ:

- ເພື່ອສະໜອງການບໍລິການໃດໜຶ່ງ ຖ້າພິສູດໄດ້ວ່າ ການບໍລິການດັ່ງກ່າວແມ່ນມາຈາກ ຫຼື ຢູ່ໃນດິນແດນຂອງປະເທດທີ່ບໍ່ແມ່ນພາຄີຂອງສັນຍາ.
-ໃນກໍລະນີຂອງການບໍລິການດ້ານການຂົນສົ່ງທາງທະເລ ຖ້າວ່າການບໍລິການດັ່ງກ່າວເປັນການໃຫ້ບໍລິການ: ໂດຍເຮືອກຳປັ່ນທີ່ໄດ້ລົງທະບຽນພາຍໃຕ້ກົດໝາຍຂອງປະເທດທີ່ບໍ່ແມ່ນພາຄີ; ແລະ ໂດຍບຸກຄົນຂອງປະເທດທີ່ບໍ່ແມ່ນພາຄີ ຊຶ່ງໄດ້ດຳເນີນ ແລະ/ຫຼື ນຳໃຊ້ເຮືອດັ່ງກ່າວສ່ວນໜຶ່ງ ຫຼືທັງໝົດ.
- ເພື່ອໃຫ້ຜູ້ສະໜອງດ້ານບໍລິການ ທີ່ເປັນນິຕິບຸກຄົນ ຖ້າເຫັນໄດ້ວ່າຜູ້ສະໜອງບໍລິການດັ່ງກ່າວບໍ່ແມ່ນຜູ້ສະໜອງບໍລິການຂອງປະເທດພາຄີອື່ນ.

**ຂໍ້ກຳນົດທີ່ສຳຄັນກ່ຽວກັບສະຖາບັນ.** ກໍເໝືອນກັນກັບຄວາມສຳຄັນອື່ນຂອງສັນຍາ AANZFTA , ໝວດຂອງການບໍລິການໄດ້ສ້າງສະຖາບັນ (institution) ຊຶ່ງຈະເຮັດໃຫ້ໝັ້ນໃຈວ່າ ສັນຍາ AANZFTA ແມ່ນສັນຍາທີ່ມີຊີວິດ living agreement ທີ່ມີຄວາມສາມາດປັບປ່ຽນໄດ້ໃນແຕ່ລະໄລຍະ. ຄະນະກຳມາທິການດ້ານການບໍລິການໄດ້ຖືກສ້າງຕັ້ງຂຶ້ນ ຊຶ່ງມີໜ້າທີ່ດຳເນີນການທົບທວນບັນດາພັນທະ ຂອງແຕ່ລະປະເທດສະມາຊິກຂອງສັນຍາ AANZFTA ພາຍຫຼັງສາມປີຂອງການມີຜົນບັງຄັບໃຊ້ຂອງສັນຍາ. ຄະນະກຳມາທິການຍັງຈະພິຈາລະນາບັນດາຄຳຖາມກ່ຽວກັບການປົກປ້ອງແບບສຸກເສີນສຳລັບການຄ້າດ້ານການບໍລິການ

ໃນກໍລະນີທີ່ການເຈລະຈາໃນ WTO ກ່ຽວກັບຄໍາຖາມເຫຼົ່ານີ້ ບໍ່ມີຜົນສະຫຼຸບໄດ້ພາຍໃນເວລາ 3 ປີ ທີ່ສັນຍາ AANZFTA ມີຜົນບັງຄັບໃຊ້. ຕາມທໍາມະຊາດແລ້ວ, ຄະນະກໍາມະການຍັງສາມາດສະເໜີບັນຫາອື່ນໃດໜຶ່ງທີ່ພົວພັນໃນການຈັດຕັ້ງປະຕິບັດຂອງພາກສ່ວນນີ້ ໃນສັນ ຍາເຂດການຄ້າເສລີ.

**ການບໍລິການດ້ານການເງິນ ແລະ ໂທລະຄົມມະນາຄົມ**. ທໍາມະຊາດຂອງຂະແໜງບໍລິການດ້ານການເງິນ ແລະຂະແໜງບໍລິການດ້ານໂທລະຄົມມະນາຄົມ (ບ່ອນທີ່ຄໍາຖາມກ່ຽວກັບການເຂົ້າເຖິງເຄືອຂ່າຍ ແລະ ບັນຫາການແຂ່ງຂັນ ແມ່ນເປັນບັນຫາທີ່ສໍາຄັນ) ໄດ້ພົບເຫັນສອງຂະແໜງການນີ້ເລື້ອຍໆວ່າມີການປະຕິບັດແບບພິເສດ ໃນສັນຍາເຂດການຄ້າເສລີໃດໜຶ່ງ. ໃນສັນຍາ AANZFTA ກໍບໍ່ມີຄວາມແຕກຕ່າງຫຍັງຕໍ່ກັບກໍລະນີດັ່ງກ່າວ ແລະເອກະ ສານຊ້ອນທ້າຍຂອງຂະແໜງການພິເສດ ໄດ້ຖືກລະບຸໄວ້ໃນການບໍລິການດ້ານການເງິນ ແລະ ດ້ານໂທລະຄົມມະນາຄົມ.

**ການລົງທຶນ.** (ໝວດທີ 11 ຂອງສັນຍາ AANZFTA)

ການຄ້າ ແລະການລົງທຶນ ແມ່ນມີການເຊື່ອມໂຍງກັນຢ່າງຖຽງບໍ່ໄດ້ໃນການຄ້າໂລກ. ການເພີ້ມຂຶ້ນເລື້ອຍໆ ບັນດາປະເທດທີ່ກໍາລັງດໍາເນີນການເຈລະຈາສັນຍາການຄ້າເສລີແບບໃໝ່ ເປັນຕົວຢ່າງໃນການນໍາເອົາຂໍ້ກໍານົດທີ່ພົວພັນກັບການລົງທຶນເຂົ້າໃສ່ໃນສັນຍາ. ສັນຍາ AANZFTA ໝວດທີ 11 ທີ່ໄດ້ເວົ້າການລົງທຶນ ແມ່ນ ຍັງຂະບວນການທີ່ຍາວໄກ ແລະ ແມ່ນການລົງທຶນທີ່ຍິ່ງໃຫ່ຍໃຫ້ແກ່ການດໍາເນີນທຸລະກິດໃນພາກພື້ນ.

ຄໍານິຍາມກ່ຽວກັບ ການລົງທຶນ ທີ່ນໍາໃຊ້ໃນສັນຍາ AANZFTA ແມ່ນມີຄວາມໝາຍກວ້າງ, ບໍ່ເປັນຄໍານິຍາມທີ່ເປັນປະໂຫຍດພື້ນຖານຢ່າງລະອຽດ . ເພື່ອກວມລວມເອົາການລົງທຶນສັນຍາ AANZFTA ໄດ້ກໍານົດລະດັບການປົກປ້ອງຜູ້ລົງທຶນ ລວມເຖິງຄວາມເປັນໄປໄດ້ຂອງການແກ້ໄຂຂໍ້ຂັດແຍ່ງໂດຍຜ່ານ ກົດໝາຍແກ້ໄຂຂໍ້ຂັດແຍ່ງຜູ້ລົງທຶນຂອງລັດ. ພັນທະຕົ້ນຕໍຂອງປະເທດພາຄີ ສັນຍາ AANZFTA ທີ່ພົວພັນເຖິງການກວມເອົາການລົງທຶນ ລວມມີດັ່ງນີ້:

- ເງື່ອນໄຂໃນການຍອມຮັບ ການປະຕິບັດແບບເປັນທໍາ ແລະສະເໝີພາບ ໃຫ້ແກ່ການລົງທຶນໃນຂະແໜງການສະເພາະ (ໝາຍຄວາມວ່າຂະບວນຍຸດຕິທໍາບໍ່ສາມາດປະຕິເສດໄດ້ໃນການດໍາເນີນຂັ້ນຕອນດ້ານກົດໝາຍ ແລະ ການບໍລິຫານ ແລະການລົງທຶນດັ່ງກ່າວນັ້ນ ໄດ້ກໍານົດໄວ້ດ້ວຍການປົກປ້ອງແລະປ້ອງກັນຢ່າງເຕັມທີ່ ໂດຍອີງໃສ່ປະເພນີປະຕິບັດຂອງກົດໝາຍສາກົນ);

- ເງື່ອນໄຂປະຕິບັດຕໍ່ຜູ້ລົງທຶນຂອງປະເທດພາຄີອື່ນຂອງສັນຍາ AANZFTA ແມ່ນບໍ່ໃຫ້ໜ້ອຍກວ່າການປະຕິບັດຕໍ່ຜູ້ລົງທຶນພາຍໃນປະເທດຂອງຕົນ ຫຼື ບໍ່ໜ້ອຍກວ່າປະເທດພາຄີອື່ນໃດໜຶ່ງ ຫຼື ປະເທດທີ່ບໍ່ແມ່ນພາຄີທີ່ກ່ຽວພັນເຖິງການຊົດເຊີຍຄວາມເສຍຫາຍຂອງນັກລົງທຶນຍ້ອນຂໍ້ຂັດແຍ່ງທາງທະຫານ, ສົງຄາມກາງເມືອງ ຫຼື ການປະກາດສຸກເສີນຂອງລັດຖະບານ;

- ພັນທະໃນການອະນຸຍາດໃຫ້ໂອນເງິນທຶນໄດ້ຢ່າງເສລີ ທີ່ພົວພັນເຖິງການລົງທຶນໃນຂະແໜງການສະເພາະ ໂດຍປັດສະຈາກການຊັກຊ້າ, ຂຶ້ນກັບຂໍ້ກຳນົດໃດໜຶ່ງທີ່ແນ່ນອນ ທີ່ກ່ຽວພັນເຖິງບັນຫາເຊັ່ນ ການເສຍອາກອນ, ການປ້ອງກັນສິດຂອງເຈົ້າໜີ້, ແລະການຊົດເຊີຍ ການດຳເນີນການຟ້ອງຮ້ອງກ່ຽວກັບຄະດີທາງອາດຍາ ແລະ ອື່ນໆ ແລະ,

- ສິດເພື່ອໃຫ້ໝັ້ນໃຈວ່າທຸກການຫັນເປັນມະຫາຊົນ ຫຼື ການສົ່ງອອກ ຂອງການລົງທຶນ ແມ່ນຖືກເຮັດເພື່ອສາທາລະນະ ແລະດ້ວຍວິທີບໍ່ຈຳແນກປະຕິບັດ, ປະຕິບັດການຊົດເຊີຍຢ່າງໄວ, ພຽງພໍ ແລະ ມີປະສິດທິພາບ ແລະ ຖືກດຳເນີນການຕາມຂັ້ນຕອນຂອງກົດໝາຍ.

**ຫ້ອງທີ 2. ຄຳນິຍາມຂອງສັນຍາ AANZFTA ກ່ຽວກັບການລົງທຶນ**

ການລົງທຶນ ໝາຍເຖິງທຸກໆຊະນິດຂອງຄວາມເປັນເຈົ້າຂອງຊັບສິນ ຫຼືຊັບສິນຖືກຄຸ້ມຄອງໂດຍຜູ້ລົງທຶນ ລວມເຖິງ ແຕ່ບໍ່ຈຳກັດໃນ ວິທີການລຸ່ມນີ້:

- ສັງຫາລິມະຊັບ ແລະອະສັງຫາລິມະຊັບ ແລະ ສິດໃນຊັບສິນອື່ນໆ ເຊັ່ນ: ສິນເຊື່ອ, ສິດທີ່ຈະຍຶດຊັບ ຂອງລູກໜີ້ ຈົນກວ່າຈະນຳເງິນມາຊຳລະ ຫຼື ຄຳໝັ້ນສັນຍາ;
- ຫຸ້ນສ່ວນ, ໃບຫຸ້ນ, ພັນທະບັດ ແລະ ຫຸ້ນກູ້ ແລະ ຮູບແບບອື່ນໃດຂອງການມີສ່ວນຮ່ວມໃນບຸກຄົນ juridicial ແລະສິດທີ່ໄດ້ຈາກນັ້ນ;
- ສິດໃນຊັບສິນທາງປັນຍາ ທີ່ໄດ້ຮັບການຍອມຮັບ ຕາມກົດໝາຍ ແລະຂໍ້ບັງຄັບ ຂອງແຕ່ລະປະເທດພາຄີ ແລະຄ່ານິຍົມ;
- ສິດທວງເງິນ ຫຼື ທວງການປະຕິບັດສັນຍາ ທີ່ກ່ຽວຂ້ອງກັບທຸລະກິດແລະມີຄ່າທາງການເງິນ;
- ສິດພາຍໃຕ້ສັນຍາ, ລວມທັງສັນຍາເຮັດຄົບວົງຈອນ, ສັນຍາການກໍ່ສ້າງ, ການຈັດການ, ການຜະລິດ ຫຼືລາຍໄດ້ທີ່ໄດ້ຈາກການເຮັດສັນຍາຮ່ວມກັນ; ແລະ
- ການສຳປະທານເຮັດທຸລະກິດທີ່ຕ້ອງການໃຫ້ດຳເນີນກິດຈະກຳດ້ານເສດຖະກິດ ແລະມີມູນຄ່າທາງການເງິນ ຕາມກົດໝາຍ ຫຼືຕາມສັນຍາ ລວມທັງການສຳປະທານໃນການສຳຫຼວດ, ການປູກຝັງ, ການສະກັດ ຫຼື ການນຳໃຊ້ປະໂຫຍດຈາກຊັບພະຍາກອນທຳມະຊາດ.

ເພື່ອຈຸດປະສົງຂອງຄຳນິຍາມກ່ຽວກັບການລົງທຶນ (ໃນມາດຕານີ້), ຜົນຕອບແທນຂອງການລົງທຶນ ໃຫ້ຖືວ່າເປັນການລົງທຶນ ແລະ ການປ່ຽນແປງໃດໆຂອງຮູບແບບການລົງທຶນ ຊຶ່ງຊັບສິນໄດ້ຖືກລົງທຶນ ແລະຖືກ ລົງທຶນຄືນໃໝ່ຈະຕ້ອງບໍ່ມີຜົນກະທົບຕໍ່ ລັກສະນະການລົງທຶນຂອງການລົງທຶນດັ່ງກ່າວ.

**ໝາຍເຫດ:** ຄຳວ່າ ການລົງທຶນ ແຕ່ບໍ່ລວມເຖິງຄຳສັ່ງ ຫຼືຄຳພິພາກສາຂອງສານ ຫຼື ການດຳເນີນການ ທາງສານ ຫຼື ການປົກຄອງ. ການລົງທຶນ ບໍ່ໝາຍຄວາມວ່າເປັນເງິນທີ່ຮຽກຮ້ອງໃຫ້ເກີດຂຶ້ນ ແຕ່ພຽງຜູ້ດຽວ ຈາກ (ກ) ສັນຍາການຄ້າສຳລັບຂາຍສິນຄ້າ ຫຼືການບໍລິການ ຫຼື (ຂ) ການຂະຫຍາຍຄວາມເຊື່ອຖືໃນການເຊື່ອມຕໍ່ ກັບສັນຍາການຄ້າດັ່ງກ່າວ.

**ແຜນວຽກ.** ເຊັ່ນດຽວກັບພາກສ່ວນອື່ນໆຂອງສັນຍາ AANZFTA ທີ່ໄດ້ເວົ້າມາໃນຄູ່ມືກ່ອນໜ້ານີ້, ໝວດຂອງການລົງທຶນ ໄດ້ວາງແຜນວຽກທີ່ຈະເຮັດໃຫ້ສັນຍານີ້ມີການປັບປຸງແຕ່ລະໄລຍະ. ມາດຕາ 16 ຂອງ

ໝວດນີ້ ໄດ້ ລິເລີ່ມແຜນວຽກທີ່ລວມເຖິງ"ການປຶກສາຫາລື" ກ່ຽວກັບບັນຫາຕາຕະລາງຂອງໃນໄລຍະເວລາ ທີ່ສະຫງວນໄວ້ ແລະ ການເຂົ້າສູ່ຕະຫຼາດ.

**ຄວາມໂປ່ງໃສ.** ທຸລະກິດຈະໄດ້ຮັບຜົນປະໂຫຍດຢ່າງຫຼວງຫຼາຍຈາກການປະຕິບັດພັນທະຂອງ ລັດຖະບານ ສັນຍາ AANZFTA ທີ່ຈະຕ້ອງພິມເຜີຍແຜ່ ລວມທັງການເຜີຍແຜ່ທາງອິນເຕີເນັດ ບັນດາມາດຕະການທີ່ ກ່ຽວ ຂ້ອງກັບການລົງທຶນທັງໝົດ, ກໍ່ຄືຂໍ້ມູນທີ່ກ່ຽວຂ້ອງກັບທຸກໆສັນຍາສາກົນ ທີ່ລັດຖະບານດັ່ງກ່າວໄດ້ເຂົ້າ ເປັນພາ ຄີ ແລະ ທີ່ມີສ່ວນກ່ຽວຂ້ອງກັບການລົງທຶນ. ເມື່ອໃດທີ່ມີການພິຈາລະນາກ່ຽວກັບມາດຕະການໃໝ່ ທີ່ພົວພັນກັບການລົງທຶນ, ລັດຖະບານຂອງສັນຍາ AANZFTA ແມ່ນຕ້ອງເປີດໂອກາດໃຫ້ຜູ້ທີ່ມີຄວາມ ສົນ ໃຈ ປະກອບຄຳເຫັນ ກ່ອນທີ່ຈະຮັບຮອງການນຳໃຊ້ມາດຕະການດັ່ງກ່າວ.

**ການປະຕິບັດທີ່ເປັນທຳໃນຂັ້ນຕອນການບໍລິຫານ.** ພາຍໃຕ້ຂໍ້ກຳນົດຂອງສັນຍາ AANZFTA ທີ່ກ່ຽວຂ້ອງ ກັບການລົງທຶນສິດທິສ່ວນບຸກຄົນ ແລະ ບໍລິສັດແມ່ນຈະໄດ້ຮັບການປົກປ້ອງເປັນຢ່າງດີໃນຂັ້ນຕອນ ການ ບໍລິຫານ. ລັດຖະບານຕ້ອງໄດ້ແຈ້ງກ່ຽວກັບການ ຈະນຳໃຊ້ມາດຕະການກ່ຽວຂ້ອງກັບການລົງທຶນ ໃຫ້ແກ່ ນັກລົງທຶນທີ່ມີຜົນກະທົບໂດຍກົງ ໄດ້ຮັບຊາບກ່ຽວ ກັບການລິເລີ່ມດຳເນີນຂັ້ນຕອນບໍລິຫານ ແລະ ມີໂອກາດ ໃນການປະກອບຄຳຄິດເຫັນຕໍ່ມາດຕະການດັ່ງກ່າວ. ລັດຖະບານ ຂອງສັນຍາ AANZFTA ແມ່ນຍັງຕ້ອງ ຢຶດຖືການປະຕິບັດທາງຕຸລາການ ແລະ ສານ ຫຼື ຂັ້ນຕອນທົບທວນຄືນຢ່າງໄວ ແລະ ການກວດສອບຄວາມ ຖືກຕ້ອງ ຂອງການຕັດສິນຄັ້ງສຸດທ້າຍ ກ່ຽວກັບ ບັນຫາການລົງທຶນ. ປະເທດພາຄີທີ່ຖືກດຳເນີນຄະດີ ແມ່ນ ຈະໄດ້ຮັບໂອກາດຕາມຄວາມເໜາະສົມເພື່ອຊອກຫາ ຫຼື ຕໍ່ສູ້ເພື່ອຮັກສາຈຸດຢືດຂອງຕົນ; ມີສິດທີ່ຈະໄດ້ຮັບ ການຕັດສິນຕາມກົດໝາຍຂອງປະເທດຕົນເອງ ແລະ ຄວນຈະໄດ້ຮັບໂອກາດໃຫ້ອຸທອນຕໍ່ກັບການຕັດສິນ ທີ່ບໍ່ເປັນທຳ.

**ການແກ້ໄຂຂໍ້ຂັດແຍ່ງລະຫວ່າງລັດແລະຜູ້ລົງທຶນ.** ເຂດການຄ້າເສລີ FTA ຮັບຮູ້ວ່າ ອາດມີບາງກໍລະນີທີ່ນັກ ລົງທຶນຈະພົບບັນຫາກ່ຽວກັບການເຄື່ອນໄຫວທີ່ກ່ຽວຂ້ອງກັບການລົງທຶນ ຂອງປະເທດສະມາຊິກສັນຍາ AANZFTA ໃດໜຶ່ງ. ຂໍ້ກຳນົດລະອຽດທີ່ເວົ້າເຖິງວ່າ ນັກລົງທຶນຄວນຈະເຮັດແນວໃດ ໃນການລິເລີ່ມປຶກສາ ຫາລືກັບລັດຖະບານ ກ່ຽວກັບບັນຫາດັ່ງກ່າວ ແລະ ນັກລົງທຶນຈະຮຽກຮ້ອງສິດ ເພື່ອສະເໜີເຂົ້າຫາຂະບວນ ຍຸຕິທຳຄືແນວໃດ. ໃນກໍລະນີທີ່ມີຂໍ້ຂັດແຍ່ງລະຫວ່າງນັກລົງທຶນ ແລະ ລັດຖະບານທີ່ເຂົ້າຮ່ວມໃນສັນຍາ AANZFTA, ນັກລົງທຶນດັ່ງກ່າວ ມີທາງເລືອກຕາມຂັ້ນຕອນດັ່ງຕໍ່ໄປນີ້ເພື່ອແກ້ໄຂຂໍ້ຂັດແຍ່ງ:

- ໃນກໍລະນີ ມີການຮ້ອງຟ້ອງຕໍ່ ລັດຖະບານ ຟີລິບປິນ ຫຼື ຫວຽດນາມ ຕ້ອງໄດ້ປະຕິບັດຕາມ ຂະບວນການສານຂອງປະເທດພາຄີດັ່ງກ່າວ ໂດຍກົງ;
- ໃນກໍລະນີປະຕິບັດຕາມ ສົນທິສັນຍາ ສູນກາງສາກົນເພື່ອການແກ້ໄຂຂໍ້ຂັດແຍ່ງໃນການລົງທຶນ (ICSID) ແລະລະບຽບຂັ້ນຕອນໃນການດຳເນີນການ ໄກ່ເກ່ຍຂອງ (ICSID) ທັງປະເທດຜູ້ຮ້ອງຟ້ອງ ແລະ ປະເທດຜູ້ຖືກຮ້ອງຟ້ອງ ຕ້ອງເປັນສະມາຊິກຂອງສົນທິສັນຍານີ້; ຫຼື
- ປະຕິບັດຕາມລະບຽບການອຳນວຍຄວາມສະດວກເພີ່ມເຕີມຂອງ ສົນທິສັນຍາ(ICSID) ທີ່ໄດ້ກຳນົດໄວ້ວ່າ ປະເທດໃດໜຶ່ງທີ່ເປັນປະເທດຜູ້ຟ້ອງຮ້ອງ ຫຼື ເປັນປະເທດຖືກຟ້ອງຮ້ອງ ຕ້ອງເປັນພາຄີຂອງສົນທິສັນຍາ (ICSID) ; ຫຼື
- ປະຕິບັດຕາມລະບຽບການໄກ່ເກ່ຍ ຂອງກົດໝາຍການຄ້າສາກົນ ຂອງຄະນະກຳມາທິການສະຫະປະຊາຊາດ (UNCITRAL) ຫຼື
  - ຖ້າຫາກຄູ່ກໍລະນີເຫັນດີນຳກັນ ກໍສາມາດສະເໜີໄກ່ເກ່ຍຂໍ້ຂັດແຍ່ງ ຜ່ານສະຖາບັນໄກ່ເກ່ຍຂໍ້ຂັດແຍ່ງ ອື່ນໃດໜຶ່ງ,

ໃນໝວດການລົງທຶນ ຍັງໄດ້ກຳນົດລະບຽບການລະອຽດ ທີ່ກ່ຽວພັນເຖິງເງື່ອນໄຂ ແລະ ຂໍ້ຈຳກັດ ໃນການຍື່ນຄຳຮ້ອງ ເພື່ອແກ້ໄຂຂໍ້ຂັດແຍ່ງລະຫວ່າງລັດຖະບານ ແລະ ຜູ້ລົງທຶນ; ລະບຽບໃນການຄັດເລືອກຜູ້ໄກ່ເກ່ຍ ແລະ ການດຳເນີນການໄກ່ເກ່ຍ ແລະ ຂັ້ນຕອນການໃຫ້ຄຳຕັດສິນ.

**ຊັບສິນທາງປັນຍາ** (ໝວດທີ 13 ຂອງ AANZFTA)

**ການປັບປຸງໃໝ່ຂອງສັນຍາວ່າດ້ວຍສິດທິຊັບສິນທາງປັນຍາທີ່ກ່ຽວພັນກັບການຄ້າ.** ຂໍ້ກຳນົດຂອງສັນຍາ AANZFTA ໃນສ່ວນທີ່ກ່ຽວພັນກັບຊັບສິນທາງປັນຍາ ທີ່ມີໃນໝວດທີ 13 ໄດ້ເຮັດໜ້າທີ່ເພີ້ມສິດ ແລະ ພັນທະຂອງປະເທດພາຄີ ທີ່ໄດ້ເຄີຍປະຕິບັດໃນສັນຍາອົງ ການການຄ້າໂລກວ່າດ້ວຍສິດໃນຊັບສິນທາງປັນຍາທີ່ກ່ຽວພັນກັບການຄ້າ (TRIPS), ຢ່າງໃດກໍ່ຕາມ, ຍ້ອນວ່າສັນຍາ TRIPS ແມ່ນໃຊ້ແຕ່ປີ1993 ຈົນເຖິງປະຈຸບັນ, ເຂດການຄ້າເສລີ ຍັງໄດ້ພະຍາຍາມທີ່ຈະປັບປຸງການປົກປ້ອງຊັບສິນທາງປັນຍາ ຂອງພາກພື້ນໂດຍຜ່ານການລວມເອົາລະບຽບການ ເພື່ອຊ່ວຍໃຫ້ບັນດາລັດຖະບານຂອງພາຄີສັນຍາ AANZFTA ໃນການເຂົ້າຮ່ວມ ແລະ ຈັດຕັ້ງປະຕິບັດໃນຫຼາຍສັນຍາຊັບສິນທາງປັນຍາສາກົນ. ໂດຍສະເພາະຢ່າງຍິ່ງ ສັນຍາທີ່ມີຄວາມສຳຄັນ ຕໍ່ ປະຊາຄົມທຸລະກິດ ດັ່ງຕໍ່ໄປນີ້:

- ສົນທິສັນຍາສິງກະໂປປີ 2006 ວ່າດ້ວຍກົດໝາຍເຄື່ອງໝາຍການຄ້າ;
- ສົນທິສັນຍາດ້ານລິຂະສິດ ຂອງ ອົງການຊັບສິນທາງປັນຍາໂລກ (WIPO) ປີ 1996 ; ແລະ
- ສົນທິສັນຍາວ່າດ້ວຍ ການສະແດງ ແລະ ຮູບເງົາ (Performance and phonograms) ຂອງ WIPO ປີ 1996.

**ຄວາມໂປ່ງໃສ.** ໝວດກ່ຽວກັບລິຂະສິດທາງປັນຍາ ຂອງສັນຍາ AANZFTA ຍັງກຳນົດພັນທະສະເພາະຈຳນວນໜຶ່ງ ກ່ຽວກັບ ການປົກປ້ອງ ສິດທິໃນຊັບສິນທາງປັນຍາ, ຄື ໃຫ້ລັດຖະບານນຳໃຊ້ software ແລະເຮັດແບບໂປ່ງໃສ. ໂດຍສະເພາະຢ່າງຍິ່ງ, ເພື່ອປົກປ້ອງຜົນປະໂຫຍດຂອງປະຊາຄົມທຸລະກິດ ລັດຖະບານຕ້ອງແນ່ໃຈວ່າ ກົດໝາຍ ແລະ ລະບຽບການຕ່າງໆ ທີ່ນຳໃຊ້ໂດຍທົ່ວໄປ ທີ່ກ່ຽວຂ້ອງກັບລັກສະນະພຽບພ້ອມ, ຂອບເຂດ, ການໄດ້ມາ, ການມີຜົນບັງຄັບໃຊ້, ແລະການປ້ອງກັນ ການສວຍໃຊ້ສິດທິໃນຊັບສິນທາງປັນຍາ ຈະຕ້ອງໄດ້ຮັບການຈັດພິມເຜີຍແຜ່ຕໍ່ສາທາລະນະ ດ້ວຍພາສາຊາດ ຫຼື ພາສາອັງກິດ.

**ຫ້ອງທີ 3: ການກວດສອບທາງອີເລັກໂທນິກ ແລະ ໃບຢັ້ງຢືນແບບດີຈີຕໍ**

ມາດຕາທີ 5 ຂອງໝວດທີ 10 ຂອງ AANZFTA ກຳນົດໄວ້ວ່າ :

"1. ແຕ່ລະຝ່າຍຕ້ອງສືບຕໍ່ປະຕິບັດ ຫຼື ຮັບຮອງໃນທັນທີ ທີ່ມີການປະຕິບັດ ບັນດາມາດຕະການຕາມມາດຕະຖານສາກົນ ສຳລັບການກວດສອບທາງອີເລັກໂທນິກ ເຊັ່ນ:

ກ) ການອະນຸຍາດໃຫ້ຜູ້ເຂົ້າຮ່ວມໃນການຕິດຕໍ່ທາງອີເລັກໂທນິກ ເພື່ອກຳນົດເອົາເທັກໂນໂລຍີການກວດສອບທີ່ເໝາະສົມ ແລະ ຮູບແບບການປະຕິບັດສຳລັບການຕິດຕໍ່ທາງອີເລັກໂທນິກ;

ຂ) ບໍ່ຈຳກັດການຮັບຮູ້ ເທັກໂນໂລຍີ ການກວດສອບ ແລະ ຮູບແບບການປະຕິບັດ; ແລະ

ຄ) ອານຸຍາດໃຫ້ຜູ້ເຂົ້າຮ່ວມໃນການຕິດຕໍ່ທາງອີເລັກໂທນິກມີໂອກາດທີ່ຈະພິສູດວ່າການຕິດຕໍ່ທາງອີເລັກໂທນິກຂອງພວກເຂົາປະຕິບັດສອດຄ່ອງກັບ ກົດໝາຍ ແລະລະບຽບການພາຍໃນຂອງ ບັນດາປະເທດພາຄີ.

2. ປະເທດພາຄີ, ບ່ອນທີ່ເປັນໄປໄດ້, ຈະຕ້ອງພະຍາຍາມດຳເນີນການຮັບຮູ້ຊຶ່ງກັນແລະກັນຕໍ່ໃບຢັ້ງຢືນແບບດີຈີຕໍ ແລະ ລາຍເຊັນທທາງອີເລັກໂທນິກທີ່ໄດ້ ຫຼື ໄດ້ຖືກຮັບຮູ້ໂດຍລັດຖະບານ ບົນພື້ນຖານໄດ້ຮັບການຍອມຮັບຕາມມາດຖານໃນລະດັບສາກົນ.

3.ປະເທດພາຄີຈະຊຸກຍູ້ໃຫ້ທຸລະກິດນຳໃຊ້ ໃບຢັ້ງຢືນແບບດີຈີຕໍຮ່ວມກັນ.

ພ້ອມນັ້ນ ປະເທດພາຄີ ຍັງມີພັນທະສ້າງຂໍ້ມູນຂ່າວສານເພື່ອເຜີຍແຜ່ຕໍ່ສາທາລະນະໃນການຕັດສິນໃຈຂອງສານ ແລະການວິນິໃສທາງປົກຄອງ ທີ່ມີສ່ວນກ່ຽວຂ້ອງກັບການປົກປ້ອງສິດໃນຊັບສິນທາງປັນຍາ. ຫາກເປັນໄປໄດ້ ຂໍ້ມູນນີ້ຄວນຈະມີໃນອິນເຕີເນັດ. ປະເທດພາຄີ ຍັງມີພັນທະທີ່ຈະເຮັດໃຫ້ຄວາມພະຍາຍາມທີ່ຈະຈັດໃຫ້ມີຖານຂໍ້ມູນໃນອິນເຕີເນັດ ທຸກໆຂໍ້ມູນກ່ຽວກັບສິດຂອງເຄື່ອງໝາຍການຄ້າ ທີ່ກຳລັງລໍຖ້າ ແລະທີ່ໄດ້ລົງທະບຽນແລ້ວ ໃນເຂດຄຸ້ມຄອງຂອງພວກເຂົາ.

**ການຄ້າທາງເອເລັກໂທນິກ (ໝວດທີ 10 ຂອງ AANZFTA)**

ກອບການຮ່ວມມືໃນລະດັບພາກພື້ນ ແລະ ການປະສານງານດ້ານການຄ້າອີເລັກໂທນິກ ໄດ້ມີຢູ່ໃນໝວດທີ 10 ຂອງສັນຍາ AANZFTA. ໃນທັນທີທີ່ມີການປະຕິບັດ, ລັດຖະບານມີໜ້າທີ່ຕ້ອງຄົງໄວ້ ຫຼື ຮັບຮອງບັນດາກົດໝາຍ ແລະ ຂໍ້ກຳນົດກົດລະບຽບພາຍໃນຂອງຕົນ ໃນການບັງຄັບໃຊ້ກັບການຕິດຕໍ່ສື່ສານທາງອີເລັກໂທນິກ ຊຶ່ງປະຕິບັດຕາມກົດໝາຍຕົວແບບ ສະບັບປີ 1996 ວ່າດ້ວຍການຄ້າທາງເອເລັກໂທນິກທີ່ຖືກສ້າງຂຶ້ນໂດຍ UNCITRAL. ໃນຖານະທີ່ເປັນສ່ວນໜຶ່ງ ຂອງການປະຕິບັດກອບຂໍ້ກຳນົດນີ້, ປະເທດສະມາຊິກຂອງສັນຍາ AANZFTA ຈະຮັກສາ ຫຼື ແນະນຳມາດຕະການດ້ານການກວດສອບທາງເອເລັກໂທນິກ, ການປົກປ້ອງຜູ້ຊົມໃຊ້ແບບອອນລາຍ ແລະ ການປົກປ້ອງຖານຂໍ້ມູນແບບອອນລາຍ (online).

ສັນຍາ AANZFTA ຍັງມີຂໍ້ບັງຄັບຕໍ່ລັດຖະບານຂອງສະມາຊິກໃນການປະຕິບັດວຽກງານຂໍ້ລິເລີ້ມທີ່ຈັດໃຫ້ມີການນຳໃຊ້ເຈ້ຍໃຫ້ນ້ອຍລົງ. ການດຳເນີນທຸລະກິດໃນພາກພື້ນ ຈະຮູ້ຄຸນຄ່າໃນຄວາມເປັນຈິງວ່າສັນຍານີ້ມີຈຸດມຸ້ງໝາຍ ຕໍ່ວັດຖຸປະສົງຂອງການຍອມຮັບເອກະສານບໍລິຫານການຄ້າແບບເອເລັກໂທນິກ ບົນພື້ນຖານວິທີການທີ່ໄດ້ມີ ການຕົກລົງກັນໃນອົງການຈັດຕັ້ງສາກົນເຊັ່ນ ອົງການພາສີໂລກ (WCO).

ຄວາມໂປ່ງໃສໃນການຄ້າທາງເອເລັກໂທນິກແມ່ນໄດ້ຮັບການສົ່ງເສີມຜ່ານພັນທະ ທີ່ປະເທດພາຄີຈະຈັດພິມເຜີຍແຜ ຫຼື ເປີດເຜີຍແຜ່ຕໍ່ສາທາລະນະບັນດາມາດຕະການທີ່ໃຊ້ໂດຍທົ່ວໄປ ທີ່ກ່ຽວຂ້ອງກັບການຄ້າແບບອີເລັກໂທນິກ ແລະ ເພື່ອໃຫ້ຮູບແບບເອກະສານເອເລັກໂທນິກຖືກເຜີຍແຜ່ຕໍ່ສາທາລະນະ.

ທັງໝົດຂອງ ການລິເລີ້ມນີ້ ຈະຊ່ວຍໃຫ້ໝັ້ນໃຈວ່າ ເຂດການຄ້າເສລີພາກພື້ນ AANZFTA ເປັນເຂດການຄ້າພາກພື້ນໜຶ່ງໃນແຖວໜ້າຂອງໂລກໃນການສົ່ງເສີມສະພາບແວດລ້ອມທີ່ທຸລະກິດ ສາມາດໄດ້ຮັບຜົນປະໂຫຍດຈາກປະສິດທິພາບ ແລະ ປະຫຍັດຄ່າໃຊ້ຈ່າຍໂດຍການບໍ່ນຳໃຊ້ເຈ້ຍ ແລະ ຈາກການຄ້າອີເລັກໂທນິກ.

**ນະໂຍບາຍການແຂ່ງຂັນ (ໝວດທີ 14 ຂອງສັນຍາ AANZFTA )**

ໃນພາກພື້ນ AANZFTA , ແຕ່ລະປະເທດແມ່ນມີຄວາມແຕກຕ່າງກັນຫຼາຍໃນວິທີການພິຈາລະນາຂອງລັດຖະບານ ຕໍ່ກັບແນວທາງການສຶກສານະໂຍບາຍການແຂ່ງຂັນ ແລະ ມີຄວາມແຕກໂຕນກັນຫຼາຍໃນຄວາມສາມາດທາງດ້ານເຕັກນິກຂອງລັດຖະບານ ເພື່ອຮັບຮອງນຳໃຊ້ໃໝ່ ຫຼື ການຮັກສາໄວ້ ລະບົບນະໂຍບາຍການແຂ່ງຂັນທີ່ມີແລ້ວ. ໃນແງ່ຂອງສັນຍາ, ສັນຍາ AANZFTA ຈະບໍ່ພະຍາຍາມທີ່ຈະສ້າງພັນທະໃໝ່ ໃນສ່ວນທີ່ກ່ຽວກັບນະໂຍບາຍການແຂ່ງຂັນ ໃນກຸ່ມປະເທດພາຄີດ້ວຍກັນ. ແຕ່ເຂດການຄ້າເສລີ ຈະສ້າງກອບການຮ່ວມມື ຊຶ່ງອົດສະຕາລີ ແລະ ນິວຊີແລນ ອາດຕົກລົງທີ່ຈະໃຫ້ຄວາມຮ່ວມມື ຕາມຄວາມເໝາະສົມເພື່ອໃຫ້ການຊ່ວຍເຫຼືອລັດຖະບານອາຊຽນທີ່ມີການລິເລີ່ມ ກ່ຽວຂ້ອງເຖິງການແຂ່ງຂັນ ທີ່ພວກເຂົາອາດຕັດສິນໃຈທີ່ຈະດຳເນີດການນະໂຍບາຍດັ່ງກ່າວ.

**ການຍົກຍ້າຍຊົ່ວຄາວຂອງນັກທຸລະກິດ (ໝວດທີ 9 ຂອງ AANZFTA )**

ໃນໂລກຍຸກໂລກາວິວັດທຸກມື້ນີ້, ມີຄວາມຈຳເປັນທີ່ຕ້ອງສົ່ງຜູ້ແທນທຸລະກິດໄປເປັນຜູ້ຕາງໜ້າໃນໄລຍະສັ້ນ ຢູ່ຕະຫຼາດຕ່າງປະເທດ ເພື່ອເຮັດໃຫ້ທຸລະກິດໄດ້ຮັບປະສິດທິພາບໃນຕະຫຼາດເຫຼົ່ານັ້ນ ( ເຊັ່ນ: ການເຈລະຈາສັນຍາຊື້ຂາຍສິນຄ້າ, ການສົ່ງມອບບໍລິການໃຫ້ກັບລູກຄ້າ). ການແຜ່ລາມໂດຍທຳມະຊາດຂອງການດຳເນີນທຸລະກິດໃນລັກສະນະນີ້ ໄດ້ຮັບການຍອມຮັບໃນສັນຍາລວມຂອງອົງການການຄ້າໂລກວ່າດ້ວຍການຄ້າດ້ານການບໍລິການ WTO GATS ແລະ ຖືກຮັບຮູ້ ໃນເກືອບທຸກເຂດການຄ້າເສລີທີ່ທັນສະໃໝ. ສັນຍາ AANZFTA ໄດ້ລວມເອົາທັງສອງພັນທະທົ່ວໄປ ທີ່ພົວພັນເຖິງການຍົກຍ້າຍຊົ່ວຄາວ ຂອງນັກທຸລະກິດ ແລະ ຕາຕະລາງເວລາຂອງຂໍ້ຜູກພັນຂອງແຕ່ລະປະເທດພາຄີ ໄດ້ສ້າງຂຶ້ນເພື່ອເຂົ້າຮ່ວມໃນສັນຍາເຂດການຄ້າເສລີ.

**ຫ້ອງທີ 4: ການຍົກຍ້າຍຊົ່ວຄາວຂອງນັກທຸລະກິດ: ຜູ້ທີ່ໄດ້ຮັບການຄຸ້ມຄອງ?**

ຂໍ້ຜູກມັດທີ່ສ້າງຂຶ້ນພາຍໃຕ້ສັນຍາ AANZFTA ໂດຍປົກກະຕິມີຜົນຕໍ່:

- ຜູ້ດຳເນີນທຸລກິດ
- ຜູ້ຕິດຕັ້ງ ແລະ ຜູ້ບໍລິການ
- ຜູ້ບໍລິຫານຂອງທຸລະກິດມີສຳນັກງານໃຫຍ່ຢູ່ປະເທດພາຄີ ຈັດຕັ້ງສາຂາ ຫຼື ບໍລິສັດຍ່ອຍ, ທາງການ ຄ້າອື່ນໆ ຂອງທຸລະກິດໃນພາຄີອື່ນໆ;
- ຜູ້ຮັບໂອນເງິນພາຍໃນ;
- ຜູ້ໃຫ້ບໍລິການຕາມສັນຍາ

ການຍົກຍ້າຍຊົ່ວຄາວຂອງນັກທຸລະກິດ ແລະ ໄລຍະເວລາຂໍ້ກຳນົດໂດຍລັດຖະບານທີ່ເຂົ້າຮ່ວມໃນແຕ່ລະເຂດການຄ້າເສລີ.

ລະຫວ່າງພັນທະກໍລະນີທົ່ວໄປຈັດຕັ້ງຂຶ້ນໃນສັນຍາ AANZFTA ໃນໝວດການຍົກຍ້າຍຊົ່ວຄາວຂອງນັກທຸລະກິດ ແມ່ນ ຂັ້ນຕອນກ່ຽວກັບການໄດ້ຮັບອະນຸຍາດໃຫ້ພັກເຊົາຊົ່ວຄາວ, ຂັ້ນຕອນການຈັດຕັ້ງປະຕິບັດ ແລະຄວາມໂປ່ງໃສ. ການຄ້າເສລີ ຍັງໄດ້ເຮັດໃຫ້ຊັດເຈນວ່າ ໂດຍບໍ່ມີບັນຫາໃນຂໍ້ຕົກລົງ ຄວນກວດກາເບິ່ງຄວາມສາມສາມາດຂອງລັດຖະບານເພື່ອດຳເນີນນະໂຍບາຍພາຍໃນ ໃນການກວດຄົນເຂົ້າເມືອງ.

ໃນບັນດາພັນທະທົ່ວໄປທີ່ໄດ້ສ້າງຂຶ້ນໃນສັນຍາ AANZFTA ໝວດວ່າດ້ວຍການຍົກຍ້າຍຊົ່ວຄາວຂອງນັກທຸລະກິດ ແມ່ນບັນດາຂັ້ນຕອນທີ່ກ່ຽວຂ້ອງກັບການໄດ້ຮັບອະນຸຍາດໃຫ້ພັກເຊົາຊົ່ວຄາວ, ການດຳເນີນການສະໝັກຂໍ ແລະ ຄວາມໂປ່ງໃສ. ສັນຍາດັ່ງກ່າວນີ້ ຍັງໄດ້ເຮັດໃຫ້ຊັດເຈນວ່າ ບໍ່ມີພາກສ່ວນໃດໃນສັນຍາທີ່ ຖືເປັນການແຊກແຊງຄວາມສາມາດຂອງລັດຖະບານ ໃນການດຳເນີນນະໂຍບາຍການກວດຄົນເຂົ້າເມືອງພາຍໃນທີ່ມີປະສິດທິພາບ

ຕາມຂັ້ນຕອນການປະຕິບັດແລ້ວ ລັດຖະບານພາຄີຂອງ AANZFTA ແມ່ນມີໜ້າທີ່ເຮັດໃຫ້ແນ່ໃຈວ່າ ຄ່າທຳນຽມທີ່ເກັບ ໃນການດຳເນີນຂໍການເຂົ້າເມືອງຊົ່ວຄາວ ແມ່ນເໝາະສົມ ແລະ ມີການພິຈາລະນາໃບສະໝັກຂໍ ທີ່ມີຄວາມຍຸດທິຕິທຳ ແລະ ພາຍໃນໄລຍະເວລາທີ່ເໝາະສົມເຊັ່ນກັນ. ເພື່ອຊ່ວຍທົວໜ່ວຍທຸລະກິດໃນການນຳໃຊ້ຜົນປະໂຫຍດ ຂອງຄວາມເປັນໄປໄດ້ສຳລັບການຍົກຍ້າຍຊົ່ວຄາວ ຂອງບຸກຄົນ, ບັນດາພາຄີຂອງ AANZFTA ແມ່ນມີໜ້າທີ່ເຜີຍແຜ່ເອກະສານອະທິບາຍທີ່ກ່ຽວຂ້ອງກັບການຂໍເຂົ້າເມືອງ ແລະເງື່ອນໄຂ ສຳລັບການເຂົ້າເມື່ອງຊົ່ວຄາວ ໂດຍອີງໃສ່ຂໍ້ກຳນົດຂອງ AANZFTA.

ບັນດາພັນທະສະເພາະທີ່ສ້າງຂຶ້ນ ໂດຍອົດສະຕາລີ ແລະ ນິວຊີແລນ ທີ່ກ່ຽວຂ້ອງກັບການຍົກຍ້າຍຊົ່ວຄາວຂອງ ບຸກຄົນຖິ່ນຖານ ແມ່ນໄດ້ລະບຸໄວ້ໃນຕາຕະລາງ ໃນເອກະສານຊ້ອນທ້າຍ ຂອງ AANZFTA ຊຶ່ງຕາງໜ້າຂອງທຸລະກິດໃດທີ່ສົນໃຈ ແມ່ນສາມາດປຶກສາໄດ້ຜ່ານເວັບໄຊຕໍ່ໄປນີ້: www.aseansec.org

## ພາກທີ 3

## ຮູບແບບການອຳນວຍຄວາມສະດວກທາງດ້ານການຄ້າທີ່ສຳຄັນຂອງເຂດການຄ້າ ເສລີອາຊຽນ-ອົດສະຕາລີ-ນິວຊີແລນ

ນອກເໜືອຈາກກາລະໂອກາດການເຂົ້າເຖິງຕະຫຼາດໃໝ່ຂອງຜູ້ສົ່ງອອກອາຊຽນ ທີ່ຖືກສ້າງຂຶ້ນໂດຍ ການກຳຈັດສິ່ງກີດຂວາງຕໍ່ການຄ້າດ້ານສິນຄ້າ ແລະ ການບໍລິການ, AANZFTA ໄດ້ລວບລວມຮູບແບບສຳ ຄັນຈຳນວນຫຼາຍ ທີ່ອອກແບບ ເພື່ອເຮັດໃຫສັນຍານີ້ ມີຄວາມງ່າຍດາຍ ແລະ ຫຼຸດຕົ້ນທຶນໃນການຄ້າຂາຍ ໃນພາກພື້ນຂອງພວກເຮົາ. ບາງຮູບແບບສຳຄັນໃນການອຳນວຍຄວາມສະດວກທາງດ້ານການຄ້າຂອງ ສັນ ຍານີ້ ປະກອບມີ: ລະບຽບແຫຼ່ງກຳເນີດສິນຄ້າທີ່ທັນສະໃໝ ແລະ ມີຄວາມຍືດຍຸ່ນ, ຂັ້ນຕອນການ ແຈ້ງເສຍ ພາສີ ທີ່ງ່າຍດາຍ, ແລະ ການເພີ່ມພູນຄວາມໂປ່ງ.

### ລະບຽບແຫຼ່ງກຳເນີດສິນຄ້າ (ໝວດທີ 3 ຂອງ AANZFTA)

ລະບຽບແຫຼ່ງກຳເນີດສິນຄ້າທີ່ນຳໃຊ້ໃນ AANZFTA ຖືກສ້າງຂຶ້ນມາໃນລັກສະນະທີ່ຊ່ວຍເພີ່ມ ຄວາມສາມາດຂອງຜູ້ສົ່ງອອກ ໃນການນຳໃຊ້ຜົນປະໂຫຍດຈາກກາລະໂອກາດທີ່ມີພາຍໃຕ້ເຂດການຄ້າເສລີ ນີ້ ໂດຍການສະເໜີ 2 ທາງເລືອກ (ສຳລັບເກືອບທຸກລາຍການສິນຄ້າ) ໃຫ້ຜູ້ສົ່ງອອກ ເພື່ອທົດສອບວ່າສິນຄ້າ ຂອງເຂົາເຈົ້າໄດ້ແຫຼ່ງກຳເນີດ ຫຼືບໍ່ .

ໃນ 83% ຂອງລະຫັດຍ່ອຍອັດຕາພາສີທັງໝົດ, ລະບຽບແຫຼ່ງກຳເນີດສິນຄ້າ ຂອງ AANZFTA ແມ່ນອີງໃສ່ "ລະບຽບທີ່ໃຊ້ໄດ້ເທົ່າທຽມກັນ" ຊຶ່ງຜູ້ສົ່ງອອກ ສາມາດເລືອກນຳໃຊ້ກົດອັດຕາສ່ວນມູນຄ່າທີ່ສ້າງ ຂຶ້ນໄດ້ພາຍໃນກຸ່ມ (RVC) ຫຼື ກົດການປ່ຽນລະຫັດພາສີ (CTC)). ສ່ວນອີກ 10% ຂອງ ລະຫັດຍ່ອຍອັດຕາ ພາສີ ແມ່ນນຳໃຊ້ໄດ້ແຕ່ກົດ CTC ເທົ່ານັ້ນ ແລະ ປະມານ1% ທີ່ ສ່ວນໃຫຍ່ແມ່ນຢູ່ໃນຂະແໜງລົດຍົນ ແມ່ນ ນຳໃຊ້ແຕ່ ກົດ RVC ຢ່າງດຽວ. ສິນຄ້າປະເພດສິ່ງເສດເຫຼືອ ແລະ ຂອງເສຍ ກວມເອົາປະມານ 1.4 % ຊຶ່ງ ກຳນົດໂດຍລະບຽບພິເສດ. ສຳລັບອີກ 4.5 % ທີ່ເຫຼືອ ແມ່ນຕ້ອງເປັນສິນຄ້າທີ່ໄດ້ມາ ຫຼື ຜະລິດໂດຍການນຳ ໃຊ້ວັດຖຸດິບພາຍໃນພາກພື້ນ AANZFTA ທັງໝົດ ຊຶ່ງໝາຍວ່າ ຈະບໍ່ສາມາດນຳໃຊ້ລະບຽບແຫຼ່ງກຳເນີດສະ ເພາະຜະລິດຕະພັນແບບທົ່ວໄປໄດ້. ສຸດທ້າຍ, ປະມານສອງສ່ວນສາມລະຫັດຍ່ອຍຂອງສິນຄ້າປະເພດເຄມີ ສາມາດນຳໃຊ້ກົດປະຕິກິລິຍາທາງດ້ານເຄມີ ເພື່ອສະແດງວ່າພວກມັນແມ່ນ "ສິນຄ້າທີ່ໄດ້ແຫຼ່ງກຳເນີດ" ຫາກ ສິນຄ້າດັ່ງກ່າວບໍ່ສາມາດຕອບສະໜອງລະບຽບແຫຼ່ງກຳເນີດສິນຄ້າຕາມກົດ RVC ຫຼື CTC ໄດ້.

ຄວາມຍືດຍຸ່ນໃນການນຳໃຊ້ລະບຽບແຫຼ່ງກຳເນີດສິນຄ້າຂອງ AANZFTA ຍັງໄດ້ຖືກປັບປຸງເພີ່ມຕື່ມອີກ ໂດຍອີງໃສ່ຄວາມຈິງທີ່ວ່າລະບຽບແຫຼ່ງກຳເນີດສິນຄ້າຂອງສັນຍານີ້ ທີ່ໄດ້ກຳນົດສຳລັບການສະສົມຈາກພາກພື້ນ ໃນການຄຳນວນ ເພື່ອຕັດສິນສິດໃນການໄດ້ຮັບການປະຕິບັດແບບພິເສດທາງດ້ານ ອັດຕາພາສີ ແມ່ນຖືກຄາດໃຫ້ເປັນມູນຄ່າ ທີ່ມີຄວາມສຳຄັນໃຫ້ແກ່ຂະແໜງການປຸງແຕ່ງ ຍ້ອນວ່າສິ່ງດັ່ງກ່າວ ຈະສະໜັບສະໜູນການເຊື່ອມໂຍງເຂົ້າໃນການສະໜອງແບບຕໍ່ອງໂສ້ໃນພາກພື້ນ. ໃນກົດເກນຂອງລະບຽບແຫຼ່ງກຳເນີດສິນຄ້າຂອງ AANZFTA, ວັດຖຸດິບ ຫຼື ສ່ວນປະກອບທີ່ໄດ້ແຫຼ່ງກຳເນີດ ຈາກປະເທດພາຄີໜຶ່ງທີ່ຖືກນຳໃຊ້ເຂົ້າໃນການຜະລິດສິນຄ້າ ໃນອີກປະເທດພາຄີໜຶ່ງ ແມ່ນ ຈະຖືກປະຕິບັດດັ່ງ ເປັນວັດຖຸດິບ ຫຼື ສ່ວນປະກອບທີ່ໄດ້ແຫຼ່ງກຳເນີດ ຈາກປະເທດນັ້ນ ເພື່ອກຳນົດແຫຼ່ງກຳເນີດສິນຄ້າດັ່ງກ່າວ. ຕົວຢ່າງ, ຜູ້ຜະລິດ ໃນປະເທດຫວຽດນາມ ສາມາດນັບເອົາສ່ວນປະກອບທີ່ນຳເຂົ້າຈາກປະເທດສິງກະໂປ ແລະ ມາເລເຊຍທີ່ໄດ້ແຫຼ່ງກຳເນີດສິນຄ້າ ພາຍໃຕ້ AANZFTA ເປັນເໝືອນດັ່ງສ່ວນປະກອບຂອງຕົນເອງ ເພື່ອຄຳນວນຄວາມໄດ້ສິດໃນການບັນລຸເງື່ອນໄຂດ້ານລະບຽບແຫຼ່ງກຳເນີດສິນຄ້າ ເມື່ອສົ່ງສິນຄ້າດັ່ງກ່າວໄປປະເທດພາຄີໃດໜຶ່ງ.

ເພື່ອເປັນການປະກອບສ່ວນໃນການຊ່ວຍເຫຼືອຜູ້ສົ່ງອອກ ແລະ ຜູ້ຜະລິດ ໃຫ້ມີຄວາມຄຸ້ນເຄີຍກັບລະບຽບແຫຼ່ງກຳເນີດສິນຄ້າຂອງ AANZFTA ກອງເລຂາອາຊຽນ ໄດ້ຜະລິດປຶ້ມຄູ່ມືກ່ຽວກັບລະບຽບການດັ່ງກ່າວອີກຕ່າງຫາກ.

**ການອຳນວຍຄວາມສະດວກທາງດ້ານການຄ້າໃນ AANZFTA( ໝວດທີ 4 ຂອງ AANZFTA)**

ສະພາບແວດລ້ອມທາງດ້ານການຄ້າທີ່ມີປະສິດທິພາບ, ໂປ່ງໃສ ແລະ ສາມາດຄາດເດົາໄດ້ ໂດຍອີງໃສ່ບັນທັດຖານ, ມາດຖານ ແລະ ຕົວຢ່າງໃນການປະຕິບັດ ທີ່ຍອມຮັບໃນລະດັບສາກົນ ກໍຄືຂັ້ນຕອນການແຈ້ງເສຍພາສີທີ່ງ່າຍດາຍ ແລະ ການຫຼຸດຕົ້ນທຶນໃນການເຮັດການຄ້າລະຫວ່າງປະເທດ ແມ່ນໄດ້ປະກອບສ່ວນເຂົ້າໃນການສ້າງສະພາບແວດລ້ອມທາງດ້ານທຸລະກິດທີ່ມີການແຂ່ງຂັນ.

AANZFTA ປະກອບມີ ໝວດວ່າດ້ວຍຂັ້ນຕອນການແຈ້ງເສຍພາສີ ທີ່ມີຈຸດປະສົງເຊັ່ນ: ເພື່ອໃຫ້ແນ່ໃຈວ່າມີຄວາມສາມາດຄາດເດົາໄດ້, ມີຄວາມສອດຄ່ອງ ແລະ ມີຄວາມໂປ່ງໃສ ໃນການນຳໃຊ້ກົດໝາຍ ແລະ ກົດລະບຽບພາສີຂອງປະເທດພາຄີ ເພື່ອສົ່ງເສີມການດຳເນີນຂັ້ນຕອນການແຈ້ງເສຍພາສີ ທີ່ມີປະສິດທິພາບ ແລະ ການຊຳລະສະສາງສິນຄ້າ ເລັ່ງລັດການດຳເນີນຊຳລະພາສີຂອງສິນຄ້າ, ແລະ ເພື່ອເຮັດໃຫ້ຂັ້ນຕອນການແຈ້ງ ເສຍພາສີມີຄວາມງ່າຍດາຍ.

ເພື່ອໃຫ້ບັນລຸເປົ້າໝາຍດັ່ງກ່າວ ບັນດາປະເທດພາຄີ ໄດ້ຮັບເອົາພັນທະ ໃນການປະຕິບັດຫຼາຍແຜນວຽກສະເພາະ ຊຶ່ງເຫັນວ່າການຈັດຕັ້ງປະຕິບັດບັນດາວຽກງານສະເພາະທີ່ມີປະສິດທິຜົນນັ້ນ ຈະປະກອບສ່ວນເຂົ້າໃນການອຳນວຍຄວາມສະດວກໃຫ້ແກ່ການຄ້າລະຫວ່າງອາຊຽນ ແລະ ປະເທດອົດສະຕາລີ ແລະ ນິວຊີແລນ ແລະ ຈະຊ່ວຍສ້າງສະພາບແວດລ້ອມດ້ານທຸລະກິດທີ່ມີການແຂ່ງຂັນ.

ກ) ສຳລັບຂັ້ນການແຈ້ງເສຍພາສີ ແລະ ການປະຕິບັດ, ບັນດາປະເທດພາຄີ ຕ້ອງແນ່ໃຈວ່າມັນສາມາດຄາດເດົາໄດ້, ສອດຄ່ອງ, ໂປ່ງໃສ ແລະ ອຳນວຍຄວາມສະດວກໃຫ້ແກ່ການຄ້າ, ຊຶ່ງລວມມີການເລັ່ງລັດຂະບວນການຊຳລະພາສີຂອງສິນຄ້າ. ຖ້າເປັນໄປໄດ້ໃນກໍລະນີທີ່ໄດ້ຮັບການອະນຸຍາດ ໂດຍກົດໝາຍພາສີ, ຂັ້ນຕອນການແຈ້ງເສຍພາສີຂອງລັດຖະບານຂອງປະເທດພາຄີຂອງ AANZFTA ຕ້ອງອີງໃສ່ການປະຕິບັດທີ່ມີມາດຕະຖານ ແລະ ຖືກແນະນຳ ໂດຍອົງການພາສີໂລກ (WCO). ນອກຈາກນັ້ນ, ການທົບທວນຂັ້ນຕອນການແຈ້ງເສຍພາສີ ໂດຍໜ່ວຍງານຄຸ້ມຄອງວຽກງານພາສີຂອງປະເທດພາຄີ ເພື່ອຈຸດປະສົງໃຫ້ມີຄວາມງ່າຍດາຍ ແມ່ນສ່ວນໜຶ່ງຂອງພັນທະພາຍໃຕ້ AANZFTA ເພື່ອອຳນວຍຄວາມສະດວກໃຫ້ແກ່ການຄ້າ.

ຂ) ການປະເມີນມູນຄ່າພາສີຂອງສິນຄ້າ. ບັນດາປະເທດພາຄີ ໄດ້ຕົກລົງກຳນົດມູນຄ່າພາສີຂອງສິນຄ້າທີ່ຖືກຄ້າຂາຍ ໂດຍອີງໃສ່ຂໍ້ກຳນົດຂອງສັນຍາວ່າດ້ວຍການປະເມີນມູນຄ່າພາສີຂອງສິນຄ້າ ຂອງອົງການການຄ້າໂລກ.

ຄ) ບັນດາປະເທດຄູ່ຄ້າຂອງ AANZFTA ຈະພິຈາລະນາການນຳໃຊ້ລະບົບອັດຕະໂນມັດ ທີ່ສະໜັບສະໜຸນການດຳເນີນການພາສີທາງອີເລັກໂທຼນິກ ໂດຍອີງໃສ່ມາດຕະຖານ ແລະ ການປະຕິບັດ ທີ່ແນະນຳໂດຍອົງການພາສີໂລກ ກໍຄື ໂຄງສ້າງ ແລະ ຄວາມອາດສາມາດຂອງແຕ່ລະປະເທດພາຄີທີ່ມີຢູ່;

ງ) ການແຈ້ງພາສີລ່ວງໜ້າ. ຕາມຂໍ້ກຳນົດນີ້, ແຕ່ລະປະເທດພາຄີ ໂດຍຜ່ານໜ່ວຍງານຄຸ້ມຄອງວຽກງານພາສີ ຕ້ອງຂຽນເປັນລາຍລັກອັກສອນກ່ຽວກັບລະບຽບການວ່າດ້ວຍການຈຳແນກລະຫັດພາສີ, ບັນຫາກ່ຽວກັບແຫຼ່ງກຳເນີດ ແລະ ການປະເມີນມູນຄ່າພາສີຂອງສິນຄ້າ. ການປະຕິບັດກົດການແຈ້ງພາສີລ່ວງໜ້າແມ່ນຖືວ່າມີຄວາມສຳຄັນ ໃນການສ້າງຄວາມໝັ້ນໃຈໃຫ້ແກ່ຜູ້ຄ້າຂາຍ.

ຈ) ຂໍ້ກົດກ່ຽວກັບການຄຸ້ມຄອງຄວາມສ່ຽງ ແມ່ນໄດ້ຖືກລວມເຂົ້າໃນ AANZFTA. ເປັນທີ່ຕົກລົງກັນວ່າ ເພື່ອປັບປຸງການໄຫຼວຽນຂອງສິນຄ້າໃນດ້ານການນຳເຂົ້າ ໜ່ວຍງານຄຸ້ມຄອງວຽກງານພາສີຂອງ

ແຕ່ລະປະເທດພາຄີ ຕ້ອງທົບທວນຄືນຂັ້ນຕອນແຈ້ງເສຍພາສີຂອງຕົນຢ່າງເປັນປະຈຳ. ສະນັ້ນ, ໃນກໍລະນີທີ່ໜ່ວຍງານຄຸ້ມຄອງພາສີຂອງປະເທດພາຄີໜຶ່ງ ເຫັນສົມຄວນວ່າການກວດກາສິນຄ້າ ແມ່ນບໍ່ມີຄວາມຈຳເປັນເພື່ອອະນຸຍາດ ໃຫ້ມີການຊຳລະສະສາງພາສີຂອງສິນຄ້າຈາກການຄຸ້ມຄອງຂອງພາສີ, ປະເທດພາຄີດັ່ງກ່າວຕ້ອງພະຍາຍາມສະໜອງເອກະສານທັງໝົດທີ່ຈຳເປັນ ຫຼື ການດຳເນີນການທາງອີເລັກໂຫຼນິກ ຂອງສິນຄ້າດັ່ງກ່າວ.

ສ) AANZFTA ປະກອບມີມາດຕາວ່າດ້ວຍຈຸດສອບຖາມຂໍ້ມູນ ທີ່ສ້າງຂຶ້ນເພື່ອອຳນວຍຄວາມສະດວກໃນການປຶກສາຫາລື ແລະ ການແລກປ່ຽນຂໍ້ມູນຂ່າວສານ. ມາດຕານີ້ໄດ້ກຳນົດວ່າ ແຕ່ລະປະເທດພາຄີ ຕ້ອງແຕ່ງຕັ້ງ ໜຶ່ງ ຫຼື ຫຼາຍຈຸດສອບຖາມຂໍ້ມູນ ເພື່ອສະໜອງຂໍ້ມູນໃຫ້ແກ່ບຸກຄົນທີ່ສົນໃຈ ກ່ຽວກັບບັນຫາດ້ານພາສີ ແລະ ຕ້ອງໃຫ້ມີຈຸດສອບຖາມຂໍ້ມູນດັ່ງກ່າວ ທາງອິນເຕເນັດ ແລະ/ຫຼື ໃນຮູບແບບຟອມ, ຂໍ້ມູນທີ່ກ່ຽວຂ້ອງກັບຂັ້ນຕອນໃນການສອບຖາມຂໍ້ມູນ. ນອກຈາກນັ້ນ, ແຕ່ລະປະເທດພາຄີ ແມ່ນຖືກມອບໃຫ້ປະກາດທຸກຂໍ້ກຳນົດກ່ຽວຂໍ້ບັນຍັດ ແລະ ກົດລະບຽບ ແລະ ຂັ້ນຕອນການດຳເນີນການແຈ້ງເສຍພາສີຕ່າງໆ ທີ່ໄດ້ນຳໃຊ້ ຫຼື ຖືກບັງຄັບໃຊ້ ໂດຍໜ່ວຍງານຄຸ້ມຄອງພາສີ ຂອງປະເທດຕົນ ທາງອິນເຕີເນັດ ແລະ/ຫຼື ໃນຮູບແບບຟອມ.

ຊ) ຂໍ້ກຳນົດວ່າດ້ວຍການທົບທວນ ແລະ ການອຸທອນ ແມ່ນຖືກລວບລວມເຂົ້າໃນສັນຍາການຄ້າເສລີນີ້. ໃນມຸມມອງທາງດ້ານການຄ້າ, ສິ່ງດັ່ງກ່າວແມ່ນບັນຫາທີ່ສຳຄັນ ຍ້ອນວ່າມັນເຮັດໃຫ້ຜູ້ນຳເຂົ້າສິນຄ້າ ໃນຂົງເຂດຂອງປະເທດພາຄີຂອງ AANZFTA ໃດໜຶ່ງ ມີຄວາມໝັ້ນໃຈໃນການເຂົ້າສູ່ການທົບທວນໃນສານ. ນອກຈາກນັ້ນ, ສັນຍາການຄ້າເສລີນີ້ ໄດ້ກຳນົດໄວ້ວ່າການຕັດສິນກ່ຽວກັບການອຸທອນ ແມ່ນຈະແຈ້ງໃຫ້ຜູ້ຂໍອຸທອນ ພ້ອມທັງເຫດຜົນເປັນລາຍລັກອັກສອນ.

ທຸກການປະຕິບັດໃນ AANZFTA ເຫຼົ່ານີ້ ທີ່ໄດ້ອອກແບບ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຄ້າ ຈະປະກອບສ່ວນເຂົ້າໃນການສ້າງລະບອບການນຳເຂົ້າ ແລະ ສົ່ງອອກ ໃນພາກພື້ນ ໃຫ້ເສລີກ່ວາເກົ່າ, ເລັ່ງລັດ ແລະ ຕົ້ນທຶນຕ່ຳ.

# ພາກທີ 4 ໂອກາດຂອງການເຂົ້າສູ່ຕະຫຼາດໃໝ່

**ໂອກາດການຄ້າດ້ານສິນຄ້າ**

ກ່ອນໜ້າ ທີ່ ສັນຍາ AANZFTA ຈະຜົນບັງຄັບໃຊ້, ເກືອບ 48% ຂອງອັດຕາພາສີທົ່ວໄປ ຂອງອົດສະຕາລີ ທີ່ນຳໃຊ້ກັບປະເທດອາຊຽນ ແມ່ນບໍ່ເສຍພາສີ (ພາສີເປັນ 0%) ແລະ 59% ລາຍການອັດຕາພາສີທົ່ວໄປຂອງນິວຊີແລນກໍ ບໍ່ມີພາສີ. ອີກ 39 % ຂອງອັດຕາພາສີຂອງອົດສະຕາລີ ແລະ ອີກ 7% ອັດຕາພາສີຂອງນິວຊີແລນ ແມ່ນມີອັດຕາພາສີນ້ອຍກ່ວາ 5 % .

**ຕາຕະລາງທີ 1**

**ພາບລວມ ຜົນການລົບລ້າງອັດຕາພາສີ ຂອງ ອົດສະຕາລີ ແລະ ນິວຊີແລນ**

| ປະເທດ | ອັດຕາພາສີ ປີ 2005 ຄິດໄລ່ເປັນ(%) | 2010 (%) | 2013 (%) | ການລົບລ້າງອັດຕາພາສີຄັ້ງສຸດທ້າຍ (%) | ປີ ທີ່ບັນລຸຜົນ |
|---|---|---|---|---|---|
| **ອົດສະຕາລີ** | 47.6 | 96.4 | 95.4 | 100 | 2020 |
| **ນິວຊີແລນ** | 58.6 | 84.7 | 90.3 | 100 | 2020 |

**ແຫຼ່ງຂໍ້ມູນ: ປື້ມຄູ່ມືກ່ຽວກັບ AANZFTA ຂອງອົດສະຕາລີ, ກົມການຕ່າງປະເທດ ແລະ ການຄ້າ ຂອງປະເທດອົດສະຕາລີ.**

ຕາຕະລາງສະແດງໃຫ້ເຫັນຈຳນວນອັດຕາພາສີຂອງສິນຄ້າທີ່ : ອັດຕາພາສີທົ່ວໄປຂອງປີ 2005 ບໍ່ໄດ້ເສຍພາສີ, ຊຶ່ງກຳນົດ ອັດຕາພາສີ ເປັນ 0% ໃນ AANZFTA ໃນປີ 2010 ແລະ 2013, ແລະເວລາສິ້ນສຸດຂອງການລົບລ້າງອັດຕາພາສີທັງໝົດ.

**ຕາຕະລາງທີ 2**

**ຈຳນວນສ່ວນຮ້ອຍ (ເປີເຊັນ)ຂອງລາຍການອັດຕາພາສີທີ່ມີອັດຕາ ແຕ່ 0%-5%**

| ປະເທດ | ອັດຕາພາສີ ປີ 2005 ຄິດໄລ່ເປັນ(%) | 2011 (%) | 2013 (%) | 2017 (%) | 2020 (%) | 2025 (%) |
|---|---|---|---|---|---|---|
| **ອົດສະຕາລີ** | 86.2 | 96.7 | 96.8 | 97.6 | 100 | 100 |
| **ນິວຊີແລນ** | 65.4 | 91.3 | 94.6 | 98.3 | 100 | 100 |

**ແຫຼ່ງຂໍ້ມູນ: ປື້ມຄູ່ມືກ່ຽວກັບ AANZFTA ຂອງອົດສະຕາລີ, ກົມການຕ່າງປະເທດ ແລະ ການຄ້າ ຂອງປະເທດອົດສະຕາລີ.**

ຕາຕະລາງທີສອງ ແມ່ນສະແດງລາຍການອັດຕາພາສີຂອງບັນດາປະເທດຢູ່ໃນລະດັບ 0-5% ( ເຊັ່ນ: ອັດຕາພາສີແມ່ນສູນ ຫຼື ທີ່ມີລະດັບອັດຕາພາສີຕ່ຳທີ່ບໍ່ສາມາດຂັດຂວາງການຄ້າ): ທີ່ໃຊ້ໃນປີ (2005), ໃນປີ 2011, 2013,2017,2020,ແລະ 2025,

ໃນລະຫວ່າງໝວດຂອງສິນຄ້າດັ່ງລຸ່ມນີ້ ຈະເຫັນໄດ້ວ່າມີການເປີດເສລີທີ່ສຳຄັນທີ່ສຸດ ພາຍຫຼັງທີ່ ສັນຍາ AANZFTA ມີຜົນບັງຄັບໃຊ້ ສຳ ລັບປະເທດອົດສະຕາລີ ນິວຊີແລນ:

1. ນ້ຳຜັກ ແລະ ໝາກໄມ້ , ຜັກ ແລະໝາກໄມ້ ທີ່ຜ່ານການປຸງແຕ່ງ ແລະເກັບຮັກສາ(ລະຫັດພາສີ 20)

2. ຜ້າຝ້າຍ(ລະຫັດພາສີ 52)

3. ແຮ່ທາດ ແລະ ເຊື້ອເພີງ( ລະຫັດພາສີ 25-27)

4. ເຄື່ອງຈັກ (ລະຫັດພາສີ 84)

5. ເຄື່ອງຈັກໄຟຟ້າ (ລະຫັດພາສີ 85)

6. ປະລາດສະຕິກ ແລະ ສິ່ງທີ່ຜະລິດຈາກປະລັດສະຕິກ (ລະຫັດພາສີ 39)

7. ຢາງ (ລະຫັດພາສີ 40)

8. ເຄື່ອງຕັດຫຍິບ ແລະ ຈຳພວກເຄື່ອງຕັດຫຍິບ(ລະຫັດພາສີ 50,5108-5113,5207-5212,53-60,)

9. ເຄື່ອງນຸ່ງຫົ່ມ ແລະ ເກີບ (ລະຫັດພາສີ 61,62,64)

10. ພາຫະນະ ສຳລັບຂົນສົ່ງຜູ້ໂດຍສານ (ລະຫັດພາສີ 8703)

11. ພາຫະນະ ສຳລັບຂົນສົ່ງສິນຄ້າ (ລະຫັດພາສີ 8704)

12. ເຄື່ອງເຟີນິເຈີ (ລະຫັດພາສີ 94)

## ການເປີດເສລີພາກຕໍ່ພາກ \ການເປີດເສລີພາກອຸດສາຫະກຳ

## ການເປີດເສລີ ເປັນແຕ່ລະໝວດສິນຄ້າ

ປະຕິບັດຕາມຂັ້ນຕອນໃນບົດແນະນຳນີ້, ອັດຕາພາສີຫຼຸດລົງ ແລະ ລົບລ້າງລາຍການຂອງອົດສ໌ຕາລີ ແລະ ນິວຊີແລນ ແມ່ນໄດ້ປຶກສາຫາລືກັບການໃຫ້ຄວາມຊ່ວຍເຫຼືອບັນດາທຸລະກິດອາຊຽນເຫັນໄດ້ກາລະໂອກາດໃໝ່ໃນການສົ່ງອອກສິນຄ້າໄປສູ່ຕະຫຼາດເຫຼົ່ານີ້.

ໃນໝວດສິນຄ້າຕໍ່ໄປນີ້ ຂອງປື້ມຄູ່ມືນີ້, ແຜນຫຼຸດຜ່ອນ ແລະລົບລ້າງອັດຕາພາສີ ສຳລັບອົດສະຕາລີ ແລະ ນິວຊີແລນ ແມ່ນໄດ້ຮັບການພິຈາລະນາ ເພື່ອຊ່ວຍໃຫ້ນັກທຸລະກິດອາຊຽນ ເຫັນໄດ້ກາລະໂອກາດໃໝ່ໃນການສົ່ງອອກສິນຄ້າໄປສູ່ຕະຫຼາດເຫຼົ່ານີ້.

## ດ້ານກະສິກຳ

**1. ນ້ຳຜັກ ແລະ ໝາກໄມ້ , ຜັກ ແລະໝາກໄມ້ ທີ່ຜ່ານການປຸງແຕ່ງ ແລະເກັບຮັກສາ(ລະຫັດພາສີ 20)**

ອົດສະຕາລີນຳເຂົ້າປະມານ 52.6 ລ້ານໂດລາສະຫະລັດ( ຄິດສະເລ່ຍ ປີ 2006-2008) ມູນຄ່າຂອງຜະລິດຕະພັນເຫຼົ່ານີ້ແມ່ນຈາກອາຊຽນ. ອົດສະຕາລີ ແມ່ນຕະຫຼາດສົ່ງອອກທີ່ໃຫຍ່ ເຊິ່ງມີທ່າແຮງຫຼາຍໃນການສົ່ງອອກຂອງອາຊຽນ. ການນຳເຂົ້າສິນຄ້າເຫຼົ່ານີ້ ຈາກທົ່ວໂລກຂອງອົດສະຕາລີ ຄິດສະເລ່ຍເປັນມູນຄ່າ 550.6 ລ້ານ ໂດລາສະຫະລັດ ໃນແຕ່ລະປີ. ໃນອົດສະຕາລີ, ລາຍການອັດຕາພາສີສ່ວນໃຫຍ່ແມ່ນຢູ່ທີ່ 5%, ຊຶ່ງທັງໝົດຈະຖືກລົບລ້າງໃນມື້ທີ່ສັນຍາມີຜົນບັງຄັບໃຊ້ໃນປີ 2010.

ນິວຊີແລນນຳເຂົ້າ ຜະລິດຕະພັນເຫຼົ່ານີ້ໃນແຕ່ລະປີ ຈາກອາຊຽນ ປະມານ 11.8 ລ້ານ ໂດລາສະຫະລັດ( ຄິດສະເລ່ຍ ປີ 2006-2008 ),ແລະ ນຳເຂົ້າ ສິນຄ້າເຫຼົ່ານີ ຈາກທົ່ວໂລກ ປະມານ 182 ລ້ານໂດລາສະຫະລັດ ໃນແຕ່ລະປີ.

ໃນນິວຊີແລນ ລາຍການອັດຕາພາສີສ່ວນໃຫຍ່ຂອງມວດສິນຄ້ານີ້ແມ່ນຢູ່ທີ່ 5 ຫາ 7 %, ຊຶ່ງມີແຜນລຶບລ້າງອັດຕາພາສີໃນປີ 2010.

### ອົດສະຕາລີ

- ນ້ຳຜັກ ແລະ ໝາກໄມ້ : ກຳນົດອັດຕາພາສີຢູ່ທີ່ 0% ໃນມື້ສັນຍາມີຜົນບັງຄັບໃຊ້, ຍົກເວັ້ນ 2 ລາຍການ ອັດຕາພາສີ 5% ຈະຖືກລຶບລ້າງໃນປີ 2010( ນ້ຳໝາກກ້ຽງແຊ່ແຂງ, ນ້ຳໝາກໄມ້ຫຼືພືດຜັກ.ຊະນິດອື່ນໆ )
- ຜັກ ແລະໝາກໄມ້ທີ່ຜ່ານການປຸງແຕ່ງ ແລະເກັບຮັກສາ : ກຳນົດອັດຕາພາສີຢູ່ທີ່ 0% ໃນມື້ສັນຍາມີຜົນບັງຄັບໃຊ້, ຍົກເວັ້ນ 2 ລາຍການ ອັດຕາພາສີ 5% ຈະຖືກລຶບລ້າງໃນປີ 2010( ຜັກບົດ ແລະ "ອື່ນໆ" ການເກັບຮັກສາຜັກ ແລະ ຜັກບົດປະສົມກັນ).

### ນິວຊີແລນ

- ນ້ຳຜັກ ແລະໝາກໄມ້: ອັດຕາພາສີຖືກລຶບລ້າງທັງໝົດໃນມື້ສັນຍາມີຜົນບັງຄັບໃຊ້ ແຕ່ຍົກເວັ້ນ 2 ລາຍການ (1 ລາຍການມີອັດຕາພາສີ 6.5% ແລະ 1 ລາຍການມີອັດຕາພາສີ 7%),ໂດຍຈະຖືກລຶບລ້າງໃນປີ 2010 (ລະຫັດພາສີ 2009.90.21 ແລະ ລະຫັດພາສີ 2009.80.21).
- ຜັກ ແລະໝາກໄມ້ທີ່ຜ່ານການປຸງແຕ່ງ ແລະເກັບຮັກສາ: ອັດຕາພາສີຖືກລຶບລ້າງທັງໝົດໃນມື້ທີ່ສັນຍາມີຜົນບັງຄັບໃຊ້ ແຕ່ຍົກເວັ້ນ 3 ລາຍການ. 2 ລາຍການມີອັດຕາພາສີ 5% (ໂດຍຈະຖືກລຶບລ້າງໃນປີ 2010).

### 2. ຜ້າຝ້າຍລວມທັງດ້າຍຫຍິບ,ເສັ້ນດ້າຍ ແລະ ແຜ່ນແພ ( ລະຫັດພາສີ 52)

ອົດສະຕາລີນຳເຂົ້າ 10.3 ລ້ານໂດລາສະຫະລັດ ມູນຄ່າການນຳເຂົ້າແຜ່ນແພຈາກອາຊຽນໃນແຕ່ລະປີ (ຄິດສະເລ່ຍ ປີ 2006-2008) ແລະລວມມູນຄ່າການນຳເຂົ້າທັງໝົດປະມານ 112.4 ລ້ານໂດລາສະ ຫະລັດ ຂອງແຜ່ນແພຈາກທົ່ວໂລກ. ໃນອົດສະຕາລີ, ລາຍການອັດຕາພາສີສ່ວນໃຫຍ່ແມ່ນຢູ່ທີ່ 5% ຫຼື 10%.

ມີພຽງສອງສາມລາຍການທີ່ອັດຕາພາສີເປັນ 0% (ມີ 5 ລາຍການຂອງ 139). ອັດຕາພາສີທັງໝົດໃນກຸ່ມຜະລິດຕະພັນນີ້ ແມ່ນຈະຖືກລົບລ້າງໃນປີ 2010 ຍົກເວັ້ນ 2 ລາຍການທີ່ມີອັດຕາພາສີ 10%:

| | |
|---|---|
| 5208 | ແຜ່ນແພ, ທີ່ມີສ່ວນປະສົມຂອງຜ້າຝ້າຍ 85% ຂຶ້ນໄປ, ນ້ຳໜັກບໍ່ເກີນ 200 ກິໂລ. |
| 5208.52.00 | _ _ຕ່ຳແບບທຳມະດາ,ນ້ຳໜັກແມ່ນເກີນ 100 ກິໂລ. |

| | |
|---|---|
| 5209 | ແຜ່ນແພ, ທີ່ມີສ່ວນປະສົມຂອງຜ້າຝ້າຍ 85% ຂຶ້ນໄປ, ນ້ຳໜັກເກີນ 200 ກິໂລ. |
| 5209.22.00 | _ _ແຜ່ນແພຕ່ຳລາຍສອບ ແບບ 3 ເສັ້ນ ຫຼື ແບບ 4 ເສັ້ນ ລວມເຖິງ ແຜ່ນແພຕ່ຳລາຍສອງແບບໄຂວ່ກັນ |

ອັດຕາພາສີທັງ 2 ລາຍການນີ້ແມ່ນຈະຖືກຫຼຸດລົງເຖິງ 8% ໃນປີ 2011, ຫຼຸດລົງ 5% ໃນປີ 2012 ແລະ ຫຼຸດຈົນຮອດ 0% ໃນປີ 2015.

ການລົບລ້າງອັດຕາພາສີໃນໝວດສິນຄ້ານີ້ແມ່ນເປັນການສ້າງໂອກາດທີ່ສຳຄັນສຳລັບຜູ້ສົ່ງອອກຝ້າຍຂອງອາຊຽນໃນການສົ່ງອອກໄປຕະຫຼາດອົດສະຕາລີ.

ນິວຊີແລນນຳເຂົ້າແຜ່ນແພຈາກອາຊຽນໃນແຕ່ລະປີ ມີມູນຄ່າ 2.9 ລ້ານໂດລາສະຫະລັດ. ລວມມູນຄ່າການນຳເຂົ້າແຜ່ນແພຈາກທົ່ວໂລກໃນແຕ່ລະປີ ປະມານ 32 ລ້ານໂດລາສະຫະລັດ. ໃນນິວຊີແລນ, ລາຍການອັດຕາພາສີຂອງຜະລິດຕະພັນທັງໝົດແມ່ນເປັນ0% (ບໍ່ເສຍພາສີ.)

**ຜະລິດຕະພັນອຸດສາຫະກຳ ແລະ ພາຫານະ**

## 3.ເຄື່ອງຈັກ( ລະຫັດພາສີ HS 84)

ອົດສະຕາລີນຳເຂົ້າເຄື່ອງຈັກຈາກອາຊຽນໃນແຕ່ລະປີ ແມ່ນມີມູນຄ່າ 3.7 ພັນລ້ານໂດລາສະຫະລັດ (ຄິດສະເລ່ຍ ປີ 2006-2008) . ມູນຄ່າການນຳເຂົ້າທັງໝົດຈາກທົ່ວໂລກ ແມ່ນມີ 24 ລ້ານໂດລາສະ

ທະລັດ. ອັດຕາພາສີຂອງເຄື່ອງຈັກສ່ວນໃຫຍ່ນຳເຂົ້າມາໃນອິດສະຕາລີແມ່ນຈະຢູ່ທີ່ 0% ແລະ 5%, ມີພຽງບາງລາຍການ ທີ່ອັດຕາພາສີ ຍັງເປັນ 10%.

## ອິດສະຕາລີ

- ອັດຕາພາສີ ປີ 2005 (614 ລາຍການ):
  - 0% ມີ 269 ລາຍການ
  - 5% ມີ 308 ລາຍການ
  - 10% ມີ 37 ລາຍການ
- ອັດຕາພາສີຈະຖືກລຶບລ້າງທັງໝົດ ແຕ່ຍົກເວັ້ນ 3 ລາຍການ ໃນປີ 2010 ແລະ ຈະຖືກລຶບລ້າງທັງໝົດໃນປີ 2020:
  - ອັດຕາພາສີ 0% ຈະຖືກກຳນົດໃຊ້ໃນມື້ສັນຍາມີຜົນບັງຄັບໃຊ້.
  - ລວມທັງ ເຄື່ອງກັງຫັນອາຍພົ່ນ, ເຄື່ອງກັງຫັນໃຊ້ແກັສ, ເຄື່ອງຈັກກະເສດ.
  - ອັດຕາພາສີ 5% ຈະຖືກລຶບລ້າງໃນມື້ສັນຍາຜົນບັງຄັບໃຊ້( ມີ 240 ລາຍການ) ,ໃນປີ 2010 ( ມີ 65 ລາຍການ).
  - ຍົກເວັ້ນ 3 ລາຍການ ຈະຄົງໄວ້ທີ່ 5% ກ່ອນຈະຫຼຸດລົງເຖິງ 0% ໃນປ2020. 3 ລາຍການເຫຼົ່ານີ້ລວມມີບາງປະເພດ ຂອງ ເຄື່ອງຈັກທີ່ໃຊ້ຍໍ, ການຍົກ, ການເຄື່ອນຍ້າຍ, ການນວດປະສົມ, ການຂົບແຕກ, ການບົດແຫຼກ, ການຄັດເລືອກ, ການແຍກ ແລະ ການລ້າງ.

  - ອັດຕາພາສີຢູ່ທີ່ 10% ແລະ ຈະຖືກຍົກເລີກໃນມື້ສັນຍາມີຜົນບັງຄັບໃຊ້.
  - ລວມເອົາຜະລິດຕະພັນເຊັ່ນ: ກັບລູກກິ້ງທີ່ໃຊ້ປະກອບເຂົ້າໃນພາຫະນະຜູ້ໂດຍສານ,ເຄື່ອງປັບອາກາດທີ່ໃຊ້ໃນພາຫະນະສ່ວນຕົວ,ແລະ pressure reducing vales.

## ນິວຊີແລນ

ເຄື່ອງຈັກຕ່າງໆ ແມ່ນນອນໃນ 20 ລາຍການສິນຄ້າຕົ້ນຕໍ ທີ່ນິວຊີແລນ ນຳເຂົ້າຈາກອາຊຽນ. ມູນຄ່າການນຳເຂົ້າ ຄິດສະເລ່ຍໃນແຕ່ລະປີ ປະມານ 492 ລ້ານ ໂດລາສະຫະລັດ. ນິວຊີແລນນຳເຂົ້າຜະລິດຕະພັນເຄື່ອງຈັກຈາກທົ່ວໂລກໃນແຕ່ລະປີລວມທັງໝົດປະມານ 3.9 ພັນລ້ານໂດລາສະຫະລັດ.

ມີຫຼາຍກວ່າເຄິ່ງໜຶ່ງຂອງລາຍການອັດຕາພາສີໃນກຸ່ມຜະລິດຕະພັນນີ້ແມ່ນຢູ່ໃນລະດັບ 7% ຂອງອັດຕາພາສີ ( ປະກອບມີ ເຄື່ອງຕົ້ມອາຍນ້ຳ (steam boilers),ເຄື່ອງປັບອາກາດ,ເຕົາຫຼອມໂລຫະ,ຕູ້ເຢັນ, ເຄື່ອງແຊ່ແຂງ, ເຄື່ອງສັ່ງນຳໜັກ,ລິດຍົກ ). ອີກເຄິ່ງໜຶ່ງສ່ວນໃຫຍ່ນຳເຂົ້າບໍ່ໄດ້ເສຍພາສີ (ສຳລັບເຄື່ອງຮັບໃຊ້ກະສິກຳ, forestry machineries, ເຄື່ອງຜະລິດນ້ຳນົມ, ເຄື່ອງສຳລັບເຮັດວາຍ ແລະ ນ້ຳໝາກໄມ້,ເຄື່ອງຄອມພິວເຕີ ແລະ ອື່ນໆ) ເຖິງແມ່ນວ່າອັດຕາພາສີຫຼາຍລາຍການຍັງມີ ອັດຕາພາສີທີ່ 5% ແລະ 10%.

- ອັດຕາພາສີ ປີ ( ມີ 618 ລາຍການ):
  - 0% ມີ 294 ລາຍການ
  - 5% ມີ 34 ລາຍການ
  - 6.5% ມີ 28 ລາຍການ
  - 7% ມີ 311 ລາຍການ
  - 10% ມີ 13 ລາຍການ
  - 10 ລາຍການອັດຕາພາສີ ຂອງເຄື່ອງອາໄຫຼ່ ແມ່ນຂຶ້ນກັບອັດຕາພາສີ ທີ່ເຄື່ອງອາໄຫຼ່ນັ້ນຖືກນຳໃຊ້.
- ອັດຕາພາສີຈະຖືກຍ້າຍໃຫ້ ເປັນ 0% ໃນທຸກລາຍການອັດຕາພາສີ ໃນປີ 2020:
  - ອັດຕາພາສີ 0% ຖືກກຳນົດໃຊ້ໃນມື້ສັນຍາມີຜົນບັງຄັບໃຊ້
  - ອັດຕາພາສີ 5% ແມ່ນຈະຖືກລົບລ້າງໃນມື້ສັນຍາມີຜົນບັງຄັບໃຊ້ ຫຼື ໃນປີ 2010.
  - ອັດຕາພາສີ 6.5% ຈະຖືກລົບລ້າງໃນມື້ສັນຍາມີຜົນບັງຄັບໃຊ້ ຫຼື ໃນປີ 2010 ຍົກເວັ້ນສຳລັບ1 ລາຍການ ທີ່ຈະ ຫຼຸດເປັນ 0% ໃນປີ 2020 (ລົດໂລຢູ່ງບດິນ road rollers).
  - ອັດຕາພາສີ 7% ຈະຖືກລົບລ້າງທັງໝົດໃນມື້ສັນຍາມີຜົນບັງຄັບໃຊ້ ຫຼື ໃນປີ 2020 ( 287 ລາຍການ) ຍົກເວັ້ນ 21 ລາຍການ ທີ່ ຈະຫຼຸດເປັນ 0% ໃນປີ 2012. ດ້ວຍແຜນຫຼຸດຜ່ອນຄື: 5% ໃນປີ 2010 ແລະ,3% ໃນປີ 2011ແລະ 0% ໃນປີ 2012. ໃນ 21 ລາຍການດັ່ງກ່າວລວມເອົາ ຫຼາຍໆຊະນິດຂອງ ເຄື່ອງປັບອາກາດ, ຕູ້ເຢັນ, ຕູ້ແຊ່ ແລະເຄື່ອງແຊ່ ອື່ນໆອີກ, ເຄື່ອງອົບຜ້າ,ເຄື່ອງກອງນ້ຳ ແລະ ເຄື່ອງດື່ມອື່ນໆ ຫຼື ເຄື່ອງຟອກ.
  - 1 ລາຍການ ອັດຕາພາສີ ທີ່ຈະຫຼຸດໃຫ້ເປັນ 0% ໃນປີ 2020:

| | |
|---|---|
| 84.81 | ເສັ້ນ, |
| 8481.80.19 | --ອື່ນໆ |

- ອັດຕາພາສີ 10% ຈະຖືກລຶບລ້າງໃນມື້ສັນຍາມີຜົນບັງຄັບໃຊ້ ຫຼື ໃນປີ 2012 ( 11ລາຍການ).
    - ➢ ນີ້ລວມເອົາບາງ ເຄື່ອງສາກຫົວທຽນແບບລູກສູບ ຫຼື ແບບໝູນທາງໃນການເຜົາໃໝ້ລູກສູບເຄື່ອງຍົນ,
- 2 ລາຍການຈະຍ້າຍເປັນ 0% ໃນປີ 2020.
    - ➢ ລວມມີນໍ້າມັນ ເຄື່ອງກອງນໍ້າມັນສໍາລັບເຄື່ອງຍົນເຜົາໃໝ້ພາຍໃນ ແລະ ຕົວກອງອາກາດທໍ່ໄອເສຍສໍາລັບເຄື່ອງຍົນຂອງສາກົນ.ອັດຕາພາສີສໍາລັບ 2 ລາຍການຈະລົດລົງເຖິງ 8% ໃນປີ 2014, 5% ໃນປີ 2015 ແລະ 0% ໃນປີ 2020.
    - ➢ ອັດຕາພາສີຂອງ 10 ລາຍການອັດຕາພາສີ ຊຶ່ງອັດຕາພາສີຈະຂຶ້ນກັບການນໍາໃຊ້ສຸດທ້າຍຈະຖືກລຶບລ້າງໃນປີ 2012.

## 4. ເຄື່ອງຈັກໄຟຟ້າ (ລະຫັດພາສີ HS 85)

### ອິດສະຕາລີ

ການນໍາເຂົ້າ ເຄື່ອງຈັກໄຟຟ້າ ຂອງອິດສະຕາລີ ຈາກອາຊຽນ ໃນແຕ່ລະປີ ແມ່ນມີມູນຄ່າປະມານ 2.2 ລ້ານໂດລາສະຫະລັດ ແລະ ນໍາເຂົ້າຈາກທົ່ວໂລກໃນແຕ່ລະປີລວມທັງໝົດມີມູນຄ່າປະມານ 16.9 ຕື້ໂດລາສະຫະລັດ.

- ອັດຕາພາສີ ປີ 2005 ( ມີ 338 ລາຍການ)
- 0% ມີ 166 ລາຍການ
- 5% ມີ 149 ລາຍການ
- 10% ມີ 23 ລາຍການ
- ອັດຕາພາສີຈະຖືກລຶບລ້າງທັງໝົດ **ໃນປີ 2010** ຍົກເວັ້ນ 2 ລາຍການ ແລະ ທຸກໆລາຍການໃນປີ 2020.
- ອັດຕາພາສີ 0% ຈະຖືກກໍານົດໃຊ້ໃນມື້ສັນຍາມີມີຜົນບັງຄັບໃຊ້.
- ອັດຕາພາສີ 5% ສ່ວນໃຫຍ່ຈະຖືກລຶບລ້າງໃນມື້ສັນຍາມີຜົນບັງຄັບໃຊ້ (112 ລາຍການ).
    - ບາງລາຍການຖືກລຶບລ້າງໃນປີ 2010 ( ມີ 35 ລາຍການ, ລວມມີ ເຕົາລີດ ແລະ ປືນ,ບັ້ງໄຟສາຍແບບ ພົກພາ,ເຄື່ອງເຮັດນໍ້າອຸ່ນ, ເຄື່ອງເຮັດຄວາມຮ້ອນໄຟຟ້າ, ເຄື່ອງເປົ່າຜົມ, ເຄື່ອງຊີ້ງກາເຜ, ລໍາໂພງ ແລະ ອື່ນໆ).
    - ບາງລາຍການຖືກລຶບລ້າງໃນປີ 2020 ( 2 ລາຍການ, ລວມມີ ວິທະຍຸ ແລະ ກ້ອງວີດີໂອ ).

ອັດຕາພາສີ 10 % ຈະຖືກລົບລ້າງໃນມື້ສັນຍາມີຜົນບັງຄັບໃຊ້.

## ປະເທດນິວຊີແລນ

ເຄື່ອງໄຟຟ້າແມ່ນໜຶ່ງໃນສິນຄ້າຫຼັກທີ່ປະເທດນິວຊີແລນນຳເຂົ້າຈາກບັນດາປະເທດອາຊຽນສະເລ່ຍແລ້ວມີມູນຄ່າປະມານ 361.7 ລ້ານໂດລາສະຫະລັດຕໍ່ປີ. ປະເທດນິວຊີແລນນຳເຂົ້າເຄື່ອງໄຟຟ້າ ຈາກທົ່ວໂລກມີປະມານ 2.6 ຕື້ໂດລາສະຫະລັດ. ອັດຕາພາສີນຳເຂົ້າເຄື່ອງໄຟຟ້າຂອງປະເທດນິວຊີ ແລນແມ່ນຢູ່ລະຫວ່າງ 0% ແລະ 17.5%. ການລົບລ້າງອັດຕາພາສີທັງໝົດສຳລັບສິນຄ້າປະເພດນີ້ ໃນປີ 2020 ຈະເປັນ ການສ້າງໂອກາດອັນດີໃຫ້ແກ່ຜູ້ຜະລິດເຄື່ອງໄຟຟ້າຂອງອາຊຽນ.

- ອັດຕາພາສີ ປີ 2005: 431 ລາຍການແມ່ນມີອັດຕາພາສີ ຢູ່ລະຫວ່າງ 0% ແລະ 17.5%

- ເກືອບທຸກລາຍການສິນຄ້າ ມີອັດຕາພາສີຢູ່ທີ່ 7% ແລະຈະຖືກລົບລ້າງໃນປີ 2010.

ຍົກເວັ້ນລາຍການສິນຄ້າຈຳນວນໜຶ່ງທີ່ຈະຖືກລົບລ້າງໃນປີ 2012ແລະ 2020 (ລວມມີ: ໝໍ້ໄຟບາງຊະນິດ, ເຄື່ອງເຜົາໄໝ້/ທົວທຽນ, ເຕົາອົບ/ໝໍ້ໄຟຟ້າ, ລຳໂພງ, ເຄື່ອງກະຈາຍສຽງບາງຊະນິດ, ດອກໄຟຟ້າບາງຊະນິດ, ສາຍໄຟບາງຊະນິດ/ສາຍເຄເບີນ).

- ສ່ວນລາຍການສິນຄ້າທີ່ມີອັດຕາພາສີ 17.5% ແມ່ນຈະຖືກລົບລ້າງໃນປີ 2020.

ລວມມີ: ໝໍ້ໄຟບາງຊະນິດ, ໄດສະຕາດ(ignition coils) ສຳລັບເຄື່ອງຈັກຂອງພາຫະນະຂົນສົ່ງໂດຍສານ, ຊຸດສາຍໄຟສຳລັບ ເຄື່ອງ ຈັກຂອງພາຫະນະໂດຍສານ.

**5. ຢາງ (ໝວດທີ 40)**

**ອິດສະຕາລີ**

ແຕ່ລະປີອິດສະຕາລີນຳເຂົ້າຢາງຈາກບັນດາປະເທດອາຊຽນ ມີມູນຄ່າປະມານ 343.2 ລ້ານໂດລາສະຫະລັດ ຊຶ່ງມູນຄ່າລວມທີ່ປະເທດອິດສະຕາລີ ນຳເຂົ້າຢາງຈາກທົ່ວໂລກ ປະມານ 2.3 ຕື້ໂດລາສະຫະລັດ ຕໍ່ປີ. ປະມານ 57% ຂອງລາຍການສິນຄ້າໝວດນີ້ ແມ່ນມີອັດຕາພາສີ 5%.

- ອັດຕາພາສີ ປີ 2005 (ມີ 99 ລາຍການສິນຄ້າ)

- 0% ມີ 13 ລາຍການ

- 5% ມີ 59 ລາຍການ

ລວມມີ: ຢາງສັງເຄາະ, ຢາງປະສົມ, ຢາງວູຄາ ໄນສ

- 7.5% ມີ 3 ລາຍການ

ລວມມີ: ຖົງມືແພດ, ຊຸດດຳນ້ຳ, ແລະ ເຄື່ອງນຸ່ງຫົ່ມຕ່າງໆທີ່ເຮັດຈາກຢາງວູຄາໄນສ

- 10% ມີ 23 ລາຍການ

ລວມມີ: ສາດປູພື້ນ, ຢາງນອກຊະນິດອັດລົມທີ່ໃຊ້ແລ້ວ, ຢາງນອກຊະນິດອັດລົມທີ່ໃຊ້ກັບ ພາຫະນະ

- 17.5% ມີ 1 ລາຍການ

ລວມມີ ສິນຄ້າປະເພດເຄື່ອງນຸ່ງຫົ່ມ ແລະ ເຄື່ອງປະດັບເຄື່ອງນຸ່ງຫົ່ມ (ລວມທັງຖົງມື) ທີ່ເຮັດຈາກຢາງວູຄາໄນສ ນອກຈາກທີ່ເຮັດດ້ວຍຢາງແຂງ

- ເກືອບທຸກລາຍການສິນຄ້າແມ່ນຈະຖືກລົບລ້າງອັດຕາພາສີໃນປີ 2010

ຍົກເວັ້ນ 2 ລາຍການທີ່ຈະຖືກຖືກລົບລ້າງີໃນປີ 2020 (ລວມມີ: ເຄື່ອງນຸ່ງທີ່ໃຊ້ໃນການປ້ອງກັນໃນເວລາ x-ray ຫຼື ຜ້າກັນແສງ, ແລະ ຖົງມືຜ່າຕັດ ທີ່ເຮັດຈາກຢາງວູຄາໄນສ).

## ປະເທດນິວຊີແລນ

ແຕ່ລະປີປະເທດນິວຊີແລນນຳເຂົ້າຢາງຈາກບັນດາປະເທດອາຊຽນ ມີມູນຄ່າປະມານ 50.4 ລ້ານໂດລາສະຫະລັດ ຊຶ່ງມູນຄ່າລວມທີ່ປະເທດນິວຊີແລນ ນຳເຂົ້າຢາງຈາກທົ່ວໂລກ ປະມານ 2.3 ຕື້ໂດລາສະຫະລັດຕໍ່ປີ. ເກືອບເຄິ່ງໜຶ່ງຂອງລາຍການສິນຄ້າໝວດນີ້ ແມ່ນມີອັດຕາພາສີ 0%.

- ອັດຕາພາສີ ປີ 2005 (ມີ 161 ລາຍການສິນຄ້າ)

- 0% ມີ 79 ລາຍການ

ລວມມີ: ຢາງທຳມະຊາດ, ຢາງບາລາຕາ(balata), ຢາງພາລາ, ຢາງກວາຍ(guayule), ຊິເຄີລ (chicle) ແລະ ຢາງທີ່ຄ້າຍຄືຢາງທຳມະຊາດ, ໃນຮູບແບບເປັນວັດຖຸດິບຫຼືເປັນແຜ່ນ , ຜືນ ຫຼື ແຜ່ນຍາວ , ຢາງໃນຂອງຕີນລົດ, ສາຍພານສົ່ງ, ຢາງນອກຊະນິດອັດລົມບາງຊະນິດ.

- 5% ມີ 2 ລາຍການ

ລວມມີ: ທໍ່ວຢາງ, ສົ້ນສ່ວນ ແລະ ເຄື່ອງປະກອບຕ່າງໆຂອງເຄື່ອງຈັກພະຫະນະທີ່ເຮັດຈາກຢາງວູຄາໄນສ ທີ່ໃຊ້ໃນການປະກອບ ຫຼື ການຜະລິດພາຫະນະ.

- 6% – 7.5% ມີ 69 ລາຍການ

ລວມມີ: ສາຍພານສົ່ງບາງປະເພດທີ່ເຮັດຈາກ ແຜ່ນ, ຜືນ, ແຜ່ນຍາວ, ດົ້ວ, ແລະ ປະເພດໂປຣ ຟາຍທີເຮັດດ້ວຍຢາງວູຄາໄນສທີ່ ນອກຈາກທີ່ເຮັດດ້ວຍຢາງແຂງ.

- 10% – 11.5% ມີ 11 ລາຍການສິນຄ້າ

ລວມມີ: ຢາງນອກຊະນິດອັດລົມບາງປະເພດທີ່ຫຼໍ່ດອກໃໝ່ ຫຼື ໃຊ້ແລ້ວ ທີ່ເຮັດດ້ວຍຢາງ; ຢາງຕັນ, ດອກຢາງຊະນິດປ່ຽນໄດ້ ແລະ ຢາງຮອງໃນ, ຢາງທໍ່ເບກລົດ, ລວມທັງຢາງນອກຊະນິດອັດລົມທີ່ເຮັດດ້ວຍ ຢາງ.

- 17.5% ມີ 2 ລາຍການສິນຄ້າ

ລວມມີ: ຢາງນອກໃໝ່ຊະນິດອັດລົມທີ່ໃຊ້ກັບພາຫະນະ, ສົ້ນສ່ວນ ແລະ ເຄື່ອງປະກອບຕ່າງໆ ຂອງພາຫະນະຂົນສົ່ງໂດຍສານທີ່ເຮັດຈາກຢາງວູຄາໄນສ.

- ທຸກລາຍການສິນຄ້າແມ່ນຈະຖືກລົບລ້າງອັດຕາພາສີໃນປີ 2010 ຍົກເວັ້ນ 11 ລາຍການ ຊຶ່ງ ຈະເປັນ 0% ໃນປີ 2020.

ໃນ 11 ລາຍການນັ້ນປະກອບມີ: ຢາງນອກຊະນິດອັດລົມໃໝ່, ຢາງນອກຊະນິດອັດລົມທີ່ຖືກໃຊ້ແລ້ວ (0% ໃນປີ 2012), ເຄື່ອງນຸ່ງຫົ່ມຊະນິດຕ່າງໆທີ່ເຮັດຈາກຢາງວູຄາໄນສ ນອກຈາກທີ່ເຮັດດ້ວຍຢາງແຂງ ແລະ ສິ່ງຂອງອື່ນໆທີ່ເຮັດດ້ວຍຢາງວູຄາໄນສ ນອກຈາກທີ່ເຮັດດ້ວຍ ຢາງແຂງ.

**6. ພລາສຕິກ ແລະ ເຄື່ອງໃຊ້ທີ່ເຮັດຈາກພລາສຕິກ (ໝວດ 39)**

**ປະເທດອິດສະຕາລີ**

ປະເທດອິດສະຕາລີນຳເຂົ້າພລາສຕິກ ແລະ ເຄື່ອງໃຊ້ທີ່ເຮັດຈາກພລາສຕິກຈາກອາຊຽນມີມູນຄ່າປະມານ 771 ລ້ານໂດລາສະຫະລັດ ແລະ ຈາກທົ່ວໂລກປະມານ 3.9 ຕື້ໂດລາສະຫະລັດຕໍ່ປີ. ລາຍການສິນຄ້າ ໃນໝວດນີ້ ຫຼາຍກວ່າ 80% ມີອັດຕາພາສີ 5% , ເຖິງວ່າຈະມີບາງລາຍການອັດຕາພາສີເປັນ 0%, 10% ແລະ ໜຶ່ງລາຍການເປັນ 17.5% ແຕ່ລາຍການສິນຄ້າທັງໝົດນີ້ ແມ່ນຈະຖືກລຶບລ້າງອັດຕາພາສີ ໃນປີ 2010 ຍົກເວັ້ນ 3 ລາຍການ ຈະຖືກລຶບລ້າງໃນປີ 2020.

- ອັດຕາພາສີ ປີ 2005 ( ມີ 140 ລາຍການສິນຄ້າ)

- 0% ມີ 12 ລາຍການ

ລວມມີ: ເຊລລູໂລສ(cellulose) ແລະ ພລາສຕິກໄຊ້ (Plasticsed) ແລະ ສິ່ງທີ່ບໍ່ແມ່ນພລາສຕິກໄຊ້ທີ່ໄດ້ຈາກການວິໄຈທາງເຄມີ, ໄສ້ຫຸ່ມ(ເຮັດໄສ້ກອກ), ແຜ່ນ, ຜືນ, ຟີມ, ແຜ່ນບາງ ແລະ ແຜ່ນຍາວທີ່ເຮັດຈາກເສັ້ນໄຍສັງເຄາະຂອງເຊລລູໂລສ, ເສັ້ນໄຍຂອງຢາງວູຄາໄນສ ແລະ ເຊລູໂລສອາຊິເຕດ.

- 5% ມີ 117 ລາຍການ

ລວມມີ: ໂພລີເມີຂອງເອທີລີນ (polymers of ethylene) ໃນຮູບແບບຂັ້ນຕົ້ນຂອງສໄຕລີນ (styrene), ຄຣໍລາຍ (chlride) ຂອງໄວນິສ (vinyl) ຫຼື ຂອງໂອເລຟິນຮາໂຣເຈນ (halogenated olefins) ອື່ນໆ, ໄຍສັງເຄາະຂອງໄວນິສ(vinyl) ຫຼື ໄວນິສອິສເຕີ (vinyl ester), ສີລີໂຄນ, ໂພລີເມີທຳມະຊາດ (polymers).

- 10% ມີ 10 ລາຍການ

ລວມມີ: ບາງຊະນິດຂອງຫຼອດ, ທໍ່ ແລະ ທໍ່ອ່ອນ, ແລະ ເຄື່ອງອາໄລ່ໂພລພີລີນຂອງພລາສຕິກອື່ນໆເຊິ່ງເປັນຊະນິດທີ່ໃຊ້ກັບຍານພາຫະນະໂດຍສານ, ຜະລິດຕະພັນທີ່ເຮັດດ້ວຍພລາສຕິກຕ່າງໆ ທີ່ໃຊ້ເປັນສ່ວນປະກອບໃນຍານພາຫະນະໂດຍສານ.

- 17% ມີ 1 ລາຍການ

ປະເພດເຄື່ອງນຸ່ງຫົ່ມທີ່ເຮັດດ້ວຍພລາສຕິກ

- ອັດຕາພາສີຂອງທຸກລາຍການສິນຄ້າຈະຖືກລຶບລ້າງໃນປີ 2020:

- ອັດຕາພາສີ ຂອງທຸກລາຍການສິນຄ້າຖືກກຳນົດໃຫ້ເປັນ 0% ໃນເວລາສັນຍາມີຜົນບັງຄັບໃຊ້ ຫຼື ຈະຖືກລຶບລ້າງທັງໝົດໃນປີ 2010 ຍົກເວັ້ນ 3 ລາຍການ

- 3 ລາຍການທີ່ຍັງຮັກສາໄວ້ນັ້ນຈະຫຼຸດລົງຮອດ 0% ໃນປີ 2020 ( ມີ 1 ລາຍການແມ່ນສິນຄ້າປະເພດເຄື່ອງນຸ່ງຫົ່ມທີ່ເຮັດດ້ວຍພາສຕິກອັດຕາພາສີ 17.5% ແລະ 2 ລາຍການສິນຄ້າລວມມີ: ແຜ່ນ, ຜືນ, ແຜ່ນຍາວໆ ອັດຕາພາສີ 5%)

## ປະເທດນິວຊີແລນ

ພລາສຕິກ ແລະ ເຄື່ອງໃຊ້ທີ່ເຮັດຈາກພລາສຕິກ ແມ່ນສິນຄ້າຫຼັກໜຶ່ງທີ່ປະເທດນິວຊີແລນນຳເຂົ້າ. ນິວຊີແລນນຳເຂົ້າຢາງຈາກອາຊຽນມີມູນຄ່າປະມານ 194 ລ້ານໂດລາສະຫະລັດ (ໂດຍສະເລ່ຍລະຫວ່າງ ປີ 2006-2008). ຊຶ່ງມູນຄ່າທັງໝົດທີ່ປະເທດນິວຊີແລນນຳ ເຂົ້າພລາສຕິກ ແລະ ເຄື່ອງໃຊ້ທີ່ເຮັດ ຈາກພລາສຕິກຈາກທົ່ວໂລກ ແຕ່ລະປີປະມານ 1.1 ຕື້ໂດລາສະຫະລັດ. ມີ 240 ລາຍການສິນຄ້າໃນໝວດນີ້ ແລະ ຫຼາຍກວ່າເຄິ່ງໜຶ່ງໃນຈຳນວນນີ້ມີອັດຕາພາສີລະຫວ່າງ5%-7.5%. ເກືອບທຸກລາຍການສິນຄ້າ ຂອງໝວດນີ້ແມ່ນ ຈະຖືກລຶບລ້າງອັດຕາພາສີໃນປີ 2010. ມີປະມານ 16 ລາຍການສິນຄ້າແມ່ນຈະຖືກລຶບລ້າງໃນປີ 2012 ແລະ 21 ລາຍການ ໃນປີ 2020.

- ອັດຕາພາສີ ປີ 2005 ( ມີ 236 ລາຍການສິນຄ້າ) ຢູ່ລະຫວ່າງ 0% ແລະ 19%

- 0% ມີ 83 ລາຍການ

ລວມມີ: ໂພລີເມີ (polymer) ຂອງໂພຟີລີນ(propylene) ຫຼື ໂອຟິນ(olefins)ອື່ນໆ, ໃນຮູບແບບຂັ້ນຕົ້ນຂອງສໄຕລີນ(styrene), ໂພລີເມີທຳມະຊາດ(ຍົກຕົວຢ່າງ: ອາຊິດອາກີລິກ) ແລະ ໂພລີເມີທຳມະຊາດທີ່ຖືກປຸງແຕ່ງແລ້ວ (ໂປຣຕີນແຂງ, ຢາງທຳມະຊາດທີ່ໄດ້ຈາກການວິໄຈທາງເຄມີ).

- 5% -7% ມີ 143 ລາຍການ

ເສັ້ນໄຍສັງເຄາະເສັ້ນຍາວດ່ຽວ (ເສັ້ນລາຍດ່ຽວ ທີ່ເຮັດດ້ວຍພາສຕິກທີ່ມີຂະໜາດເສັ້ນຜ່າສູນກາງເກີນ 1 ມມ, ທ່ອນ ແລະ ເສັ້ນຍາວ ແລະ ເປັນຮູບໂປຣຟາຍ ຈະແຕ່ງໜ້າແລ້ວຫຼືບໍ່ກໍ່ຕາມ ແຕ່ບໍ່ໄດ້ໃຊ້ເພື່ອເຮັດເປັນສິ່ງອື່ນໆທີ່ເຮັດດ້ວຍພລາສຕິກ.

- 19% ມີ 5 ລາຍການ

ເຊິ່ງລວມທັງເຄື່ອງໃຊ້ອື່ນໆທີ່ເຮັດຈາກພລາສຕິກ ແລະ ເຄື່ອງໃຊ້ທີ່ເຮັດຈາກວັດຖຸດິບອື່ນໆ ທີ່ມີລະຫັດເຄົ້າ 39.01 ຫາ 39.14 (ແຜ່ນຮອງບ່າ, ເສື້ອໂຄດ, ເສື້ອແຈັກເກັດ ແລະ ເຄື່ອງຫຸ້ມຂາ)

- ອັດຕາພາສີເກືອບທັງໝົດຂອງສິນຄ້າໄດ້ຖືກກຳນົດໃຫ້ເປັນ 0% ໃນເວລາສັນຍາມີຜົນບັງຄັບໃຊ້ໃນປີ 2010. ສ່ວນພາສີທີ່ຍັງຮັກສາໄວ້ແມ່ນຈະຖືກລົບລ້າງໃນປີ 2020 (ລວມເອົາບາງຊະນິດຂອງອາຄຣີລິກໂພລີເມີ, ໂພລີເອັດໂທລ, ໂພລີເທີ ແລະ ເຣຊິນອີພອກໄຊອື່ນໆ, ແຜ່ນຕິດ, ຜືນ, ຟີມ, ແຜ່ນບາງ, ແຜ່ນແຖບ, ແຜ່ນຍາວ ແລະ ນອກຈາກແຜ່ນບາງອື່ນໆ, ທີ່ບໍ່ແມ່ນເຊລູລາ ແລະ ບໍ່ ໄດ້ເສີມໃຫ້ແຂງ, ສະເກັດ, ໄດ້ຮັບການສະໜັບສະໜູນ ຫຼື ປະສົມກັບສານອື່ນໆ, ສິ່ງອື່ນທີ່ເປັນແຜ່ນ, ຜືນ, ຟີມ, ແຜ່ນບາງ, ແລະ ແຜ່ນຍາວທີ່ເຮັດດ້ວຍພາສຕິກ, ອ່າງອາບນ້ຳ, ຝັກບົວອາບນ້ຳ, ອ່າງລ້າງຖ້ວຍ, ອ່າງລ້າງໜ້າ, ອ່າງນ້ຳຂະໜາດນ້ອຍ, ຊັກໂຄກ, ບ່ອນນັ່ງ ແລະ ຝາປິດ, ຖັງນ້ຳລ້າງວິດ ແລະ ຜະລິດຕະພັນທີ່ຄ້າຍຄຽງກັບເຄື່ອງສຸຂະອານາໄມທີ່ເຮັດດ້ວຍພາສຕິກ: ເຄື່ອງຂອງສຳລັບ ລຳລຽງຂົນສົ່ງ ຫຼື ການຫຸ້ມຫໍ່ສິນຄ້າ, ທີ່ເຮັດດ້ວຍພາສຕິກ, ກະດອນ ອັດ, ຝາອັດ, ຝາປິດແຈບ ແລະ ເຄື່ອງສຳລັບອັດອື່ນໆ ທີ່ເຮັດດ້ວຍພາສຕິກ, ຖ້ວຍຊາມ ແລະ ເຄື່ອງໃຊ້ສຳລັບໂຕະອາຫານ, ເຄື່ອງທີ່ໃຊ້ໃນເຮືອນຄົວ, ເຄື່ອງໃຊ້ພາຍໃນເຮືອນ ແລະ ເຄື່ອງສຸຂະອານາໄມຕ່າງໆທີ່ເຮັດດ້ວຍພາສຕິກ)

**7. ເຄື່ອງເຟີນິເຈີ( ໝວດ 94)**

**ປະເທດອິດສະຕາລີ**

ແຕ່ລະປີປະເທດອິດສະຕາລີນຳເຂົ້າເຄື່ອງເຟີນິເຈີຈາກອາຊຽນ ສະເລ່ຍມີມູນຄ່າປະມານ 265 ລ້ານໂດລາສະຫະລັດ ແລະ ຈາກທົ່ວໂລກປະມານ 2.5 ຕື້ໂດລາສະຫະລັດ. ຫຼາຍກ່ວາເຄິ່ງໜຶ່ງຂອງລາຍການສິນຄ້າໃນໝວດນີ້ ແມ່ນມີອັດຕາພາສີ 5%.

- ອັດຕາພາສີ ປີ 2005 ( ມີ 40 ລາຍການສິນຄ້າ)

- 0% ມີ 7 ລາຍການ

ລວມມີ: ເບາະນັ່ງເທິງເຄື່ອງບິນ, ຕັ່ງປົວແຂ້ວ/ຕັ່ງຕັດຜົມ ແລະ ຂາຕັ້ງທຽນທີ່ເຮັດດ້ວຍແກ້ວ.

- 5% ມີ 29 ລາຍການ

ລວມມີ: ເຄື່ອງເຟີນີເຈີທີ່ເຮັດດ້ວຍໂລຫະ, ພລາສຕິກ ໄມ້ ຫວາຍ ໄມ້ໄຜ່ແລະ ກົກຜື ຫຼື ວັດຖຸທີ່ຄ້າຍ ຄຽງ, ບັນດາສິ້ນສ່ວນປະກອບຂອງອາຄານ, ໂຄມໄຟຍ່ອຍສຳລັບຕິດເພດານ ແລະ ຕິດຝາ.

- 7.5% ມີ 2 ລາຍການ

ລວມມີ: ຖົງນອນ ແລະ ເຄື່ອງບ່ອນນອນເສື່ອບາງປະເພດ.

- 10% ມີ 2 ລາຍການ

ເບາະນັ່ງທີ່ໃຊ້ສຳລັບຍານພາຫະນະ.

• ອັດຕາພາສີທັງໝົດຈະຖືກລຶບລ້າງໃນປີ 2010, ຍົກເວັ້ນ 2 ລາຍການ ທີ່ຈະຖືກລຶບລ້າງຮອດ 0% ໃນປີ 2020.

- ໃນ 2 ລາຍການນັ້ນລວມມີ: ເບາະນັ່ງຂອບໄມ້ທີ່ນຸ້ມນວນ ແລະ ເຄື່ອງເຟີນີເຈີທີ່ເຮັດດ້ວຍໄມ້ສຳລັບໃຊ້ ໃນຫ້ອງການ ເຊິ່ງອັດຕາພາສີຈະຮັກສາ ໄວ້ໃນລະດັບ 5% ຈົນເຖິງປີ 2019.

**ປະເທດນິວຊີແລນ**

ໃນ 3 ປີທີ່ຜ່ານມາ ປະເທດນິວຊີແລນນຳເຂົ້າເຄື່ອງເຟີນີເຈີຈາກອາຊຽນສະເລ່ຍມີມູນຄ່າປະມານ 54 ລ້ານ ໂດລາສະຫະລັດຕໍ່ປີ ແລະ ນຳເຂົ້າຈາກທົ່ວໂລກປີລະປະມານ 1.3 ຕື້ໂດລາສະຫະລັດ.

• ອັດຕາພາສີ ປີ 2005 ( ມີ 61 ລາຍການສິນຄ້າ).

- 0% ມີ 7 ລາຍການ

ລວມມີ: ຕັ່ງປົວແຂ້ວແລະ ຕັ່ງຕັດຜົມ ຫຼື ຕັ່ງທີ່ຄ້າຍຄື ລວມທັງສິ້ນສ່ວນປະກອບຂອງສິ່ງດັ່ງກ່າວ, ໂຄມໄຟນິລະໄພຂອງຊ່າງຂຸດແຮ່, ໂຄມໄຟທີ່ບໍ່ໃຊ້ໄຟຟ້າ ແລະ ອຸປະກອນທີ່ໃຫ້ແສງສະຫວ່າງທີ່ເຮັດຈາກ ໂລຫະ ແລະ ແກ້ວ

- 5%-6.5% ມີ 8 ລາຍການ

ລວມມີ: ໂຄມໄຟທີ່ບໍ່ໃຊ້ໄຟຟ້າ, ອຸປະກອນທີ່ໃຫ້ແສງສະຫວ່າງທີ່ເຮັດຈາກພລາສຕິກ, ບັນດາສິ້ນສ່ວນປະກອບຂອງອາຄານ, ເຄື່ອງໝາຍທີ່ມີແສງສະຫ່ວາງ, ປ້າຍຊື່ທີ່ມີແສງສະຫວ່າງ ແລະ ສິ່ງທີ່ຄ້າຍຄຼ້າງກັນທີ່ເຮັດຈາກພລາສຕິກ.

- 7% ມີ 42 ລາຍການ

ລວມມີ: ເຄື່ອງເຟີນີເຈີທີ່ເຮັດດ້ວຍໂລຫະ ໄມ້ພາສຕິກ ຫຼື ວັດສະດຸອື່ນໆເຊັ່ນ: ຫວາຍ ກົກຜື ໄມ້ໄຜ ຫຼື ວັດຖຸທີ່ຄ້າຍຄຼ້າງ, ປ້າຍຊື່ທີ່ມີແສງສະຫວ່າງ ແລະ ສິ່ງທີ່ຄ້າຍຄຼ້າງກັນທີ່ເຮັດຈາກເຊລາມິກ.

- 10% -12% ມີ 3 ລາຍການ

ເບາະນັ່ງ/ ບັນດາສິ້ນສ່ວນປະກອບຂອງສິ່ງດັ່ງກ່າວທີ່ໃຊ້ສຳລັບຍານພາຫະນະ.

- 17.5% ມີ 1 ລາຍການ

ເບາະນັ່ງທີ່ໃຊ້ເປັນສິ້ນສ່ວນໜຶ່ງສຳລັບການປະກອບຍານພາ ຫະນະ.

- ອັດຕາພາສີຂອງທັງໝົດລາຍການສິນຄ້າຈະຖືກລຶບລ້າງໃນປີ 2010, ຍົກເວັ້ນ 6 ລາຍການ ທີ່ຈະຖືກລຶບລ້າງໃນປີ 2020.

- ອັດຕາພາສີທີ່ເປັນ7% ຈະຫຼຸດເປັນ 0%

8 ລາຍການ ໃນປີ 2012 (ລວມມີ:ຕັ່ງນັ່ງຊະນິດໝູນໄດ້, ຖານຮອງເສື່ອ, ເສື່ອຢາງ, ບາງຊະນິດຂອງເຄື່ອງເຟີນີເຈີໃຊ້ໃນຫ້ອງການທີ່ເຮັດດ້ວຍໂລຫະ).

ໃນປີ 2013 ມີ 3 ລາຍການ (ເຄື່ອງເຟີນີເຈີທີ່ເຮັດດ້ວຍວັດສະດຸຕ່າງໆ: ຫວາຍ, ກົກຜື, ໄມ້ໄຜ່ ຫຼື ວັດຖຸທີ່ຄ້າຍຄຼ້າງ).

ໃນປີ 2019 ມີ 6 ລາຍການ (ເຄື່ອງເຟນີເຈີທີ່ເຮັດດ້ວຍໄມ້ສຳລັບຫ້ອງແຕ່ງກິນ, ຫ້ອງນ້ຳ ຫຼື ສຳລັບໃຊ້ໃນຫ້ອງການ).

ແລະໃນປີ 2020 ມີ 4 ລາຍການ (ເບາະນັ່ງນວມ, ເຄື່ອງເຟີນີເຈີພາສຕິກ, ຕຽງນອນ).

- ອັດຕາພາສີ 12% ແມ່ນຈະຖືກກຳນົດໃຫ້ເປັນ 0% ໃນປີ 2020 (ບາງປະເພດຂອງເສື່ອ ແລະ ບ່ອນນອນ/ໝອນ).

- ອັດຕາພາສີ 17.5% ແມ່ນຈະຖືກກຳນົດໃຫ້ເປັນ 0% ໃນປີ 2012 (ເບາະນັ່ງທີ່ໃຊ້ປະກອບໃນເຄື່ອງຈັກຂອງພາຫະນະ).

**8. ພາຫະນະສຳລັບສຳລັບຂົນສົ່ງສິນຄ້າ (HS 8704).**

**ປະເທດອົດສະຕາລີ**

ກຸ່ມສິນຄ້ານີ້ແມ່ນກຸ່ມສິນຄ້າທີ່ສຳຄັນຂອງປະເທດອົດສະຕາລີ ທີ່ມີການນຳເຂົ້າຈາກບັນດາປະເທດອາຊຽນ. ສະເລ່ຍໃນແຕ່ລະປີອົດສະຕາລີມີມູນຄ່າການນຳເຂົ້າຈາກອາຊຽນປະມານ 1.6 ຕື້ໂດລາສະຫະລັດ ແລະ ມູນຄ່າທີ່ປະເທດອົດສະຕາລີມີການນຳເຂົ້າຈາກທົ່ວໂລກສູງເຖິງ 4.4 ຕື້ໂດລາສະຫະລັດຕໍ່ປີ. ໃນປະເທດອົດສະຕາລີ, ເຄິ່ງໜຶ່ງຂອງລາຍການສິນຄ້າໃນໝວດນີ້ມີອັດຕາພາສີຢູ່ລະຫ່ວາງ 5-10%. ທຸກລາຍການສິນຄ້າໃນໝວດນີ້ແມ່ນຈະຖືກລົບລ້າງໃນປີ 2010.

- ອັດຕາພາສີ ປີ 2005 (10 ລາຍການ): ມີອັດຕາພາສີ 5% ສຳລັບທຸກໆລາຍການ.
- ອັດຕາພາສີຂອງທຸກລາຍການຈະຖືກລົບລ້າງທັງໝົດ ໃນ ເວລາສັນຍາມີຜົນມີບັງຄັບໃຊ້.

**ປະເທດນິວຊີແລນ**

ປະເທດນິວຊີແລນມີມູນຄ່າການນຳເຂົ້າສິນຄ້າຈາກບັນດາປະເທດອາຊຽນປະມານ 195.6 ລ້ານໂດລາສະຫະລັດ ແລະ ປະເທດນິວຊີແລນມີມູນຄ່າການນຳເຂົ້າສິນຄ້າຈາກທົ່ວໂລກປະມານ 663.7 ລ້ານໂດລາສະຫະລັດຕໍ່ປີ. ໃນປະເທດນິວຊີແລນ, ເກືອບທຸກລາຍການສິນຄ້າໃນໝວດນີ້ແມ່ນຖືກລົບລ້າງອັດຕາພາສີແລ້ວ ສ່ວນລາຍການ ທີ່ຍັງເຫຼືອໜ້ອຍກວ່າ 10% ແມ່ນຍັງຕ້ອງເສຍພາສີ 7%.

- ອັດຕາພາສີ ປີ 2005 ( 20 ລາຍການ): 7% ສຳລັບ 6 ລາຍການ ແລະ 0% ສຳລັບລາຍ ການທີ່ເຫຼືອ.

- ອັດຕາພາສີ 7% ມີລວມມີ:

| | |
|---|---|
| | - ລົດຖອກດິນທີ່ອອກແບບເພື່ອໃຊ້ງານນອກທາງຫຼວງ |

| | |
|---|---|
| 8704.10.01 | --ນ້ຳໜັກລວມບໍ່ເກີນ 10,500 ກິໂລ |

| | |
|---|---|
| 8704.21 | --ນ້ຳໜັກລວມບໍ່ເກີນ 5 ໂຕນ |
| 8704.21.80 | ---ອື່ນໆ |

| | |
|---|---|
| 8704.22 | --ນ້ຳໜັກລວມແຕ່ 5 ໂຕນຂຶ້ນໄປ ແຕ່ບໍ່ໃຫ້ເກີນ 20 ໂຕນ |
| 8704.22.11 | ---ນ້ຳໜັກລວມບໍ່ເກີນ 10,500 ກິໂລ |

| | |
|---|---|
| 8704.31 | --ນ້ຳໜັກລວມບໍ່ເກີນ 5 ໂຕນ |
| 8704.31.80 | ---ອື່ນໆ |

| | |
|---|---|
| 8704.32 | --ນ້ຳໜັກລວມ 5 ໂຕນຂຶ້ນໄປ |
| 8704.32.11 | ---ນ້ຳໜັກລວມບໍ່ເກີນ 10,500 ກິໂລ |

| | |
|---|---|
| 8704.90 | --ອື່ນໆ |
| 8704.90.21 | ---ນ້ຳໜັກລວມບໍ່ເກີນ 10, 500 ກິໂລ |

- ອັດຕາພາສີຂອງທຸກລາຍການສິນຄ້າແມ່ນຈະຖືກລົບລ້າງ ນັບແຕ່ມື້ທີ່ສັນຍາມີຜົນບັງຄັບໃຊ້.

### 9. ພາຫະນະສຳລັບຂົນສົ່ງຜູ້ໂດຍສານ/ພາຫະນະໂດຍສານ (PVM) (ໝວດ 8703)

#### ປະເທດອົດສະຕາລີ

ໃນແຕ່ລະປີປະເທດອົດສະຕາລີນຳເຂົ້າພາຫະນະໂດຍສານຈາກອາຊຽນມີມູນຄ່າປະມານ 810.6 ລ້ານໂດລາສະຫະລັດຕໍ່ປີ ແລະ ນຳເຂົ້າຈາກທົ່ວໂລກມີປະມານ 11.1 ຕື້ໂດລາສະຫະລັດ. ເຄິ່ງໜຶ່ງຂອງລາຍການສິນຄ້າໃນໝວດນີ້ອັດຕາພາສີ 5% ແລະ ຫຼາຍກ່ວາເຄິ່ງໜຶ່ງໜ້ອຍໜຶ່ງແມ່ນ 10%. ສ່ວນອັດຕາພາສີຂອງພາຫະນະທີ່ໃຊ້ແລ້ວແມ່ນ 10% ບວກກັບ ອັດຕາພາສີສະເພາະ.

- ອັດຕາພາສີ ປີ 2005 ( 32 ລາຍການສິນຄ້າ)

ພາຫະນະໂດຍສານ (PMV) ທີ່ຜ່ານການນຳໃຊ້ແລ້ວ: ອັດຕາພາສີສະເພາະ (10% ບວກ 12,000ໂດລາ/ຄັນ);

- ພາຫະນະໂດຍສານໃໝ່: ພາສີ 10%
- ພາຫະນະອື່ນໆ: ພາສີ 5%.

- ອັດຕາພາສີທັງໝົດແມ່ນຈະຖືກລົບລ້າງນັບແຕ່ມື້ສັນຍາມີຜົນບັງຄັບໃຊ້, ຍົກເວັ້ນພາຫະນະສະເພາະທີ່ຜະລິດຢູ່ປະເທດອິນໂດເນເຊຍ, ມາເລເຊຍ ແລະ ໄທ, ເຊິ່ງອາດມີການລົບລ້າງອັດຕາພາສີຕາມພາຍຫຼັງ.

- ບັນຊີທີ່ລາຍລະອຽດກ່ວານີ້ຂອງສິນຄ້າທີ່ໄດ້ຮັບການປະຕິບັດແບບພິເສດ ແລະ ຕາຕະລາງລົບລ້າງອັດຕາພາສີຂອງພວກມັນສາມາດຊອກໄດ້ ໃນຕາຕະລາງແຜນຫຼຸດຜ່ອນອັດຕາພາສີຂອງປະເທດອົດສະຕາລີທີ່ມີຢູ່ໃນເວບໄຊສ ຂອງກອງເລຂາອາຊຽນ www.aseansec.org.

- ນະໂຍບາຍການຫຼຸດຜ່ອນອັດຕາພາສີແບບຊ້າໆສຳລັບພາຫະນະທີ່ຜະລິດຢູ່ປະເທດອິນໂດເນເຊຍ, ມາເລເຊຍ ແລະ ໄທ:

- ອັດຕາພາສີຂອງພາຫະນະໂດຍສານທີ່ຜ່ານການນຳໃຊ້ຈະຖືກລົບລ້າງນັບແຕ່ມື້ສັນຍາມີຜົນບັງຄັບໃຊ້ສຳລັບ 3 ປະເທດນີ້;
- ອັດຕາພາສີຂອງພາຫະນະໂດຍສານໃໝ່ຈະຫຼຸດຮອດ 0% ເປັນ ແຕ່ລະໄລຍະດັ່ງນີ້:

2013,2014,2019 ຫຼື 2020, ຂຶ້ນກັບຂະໜາດ ຫຼື ຊະນິດຂອງເຄື່ອງຈັກຖ້າຜະລິດຢູ່ປະເທດອິນໂດເນເຊຍ.

2010 ຫຼື 2017, ຂຶ້ນກັບຂະໜາດຂອງເຄື່ອງຈັກ ຖ້າຜະລິດຢູ່ປະເທດມາເລເຊຍ.

2020 ຖ້າຜະລິດຢູ່ປະເທດໄທ.

- ອັດຕາພາສີຂອງພາຫະນະອື່ນໆຈະຫຼຸດຮອດ 0% ເປັນແຕ່ລະໄລຍະດັ່ງນີ້:

2013 ຫຼື 2015 ຖ້າຜະລິດຢູ່ປະເທດອິນໂດເນເຊຍ

2010 ຖ້າຜະລິດຢູ່ປະເທດມາເລເຊຍ.

2020 ຖ້າຜະລິດຢູ່ປະເທດໄທ.

- ສຳລັບການນຳເຂົ້າຈາກປະເທດສະມາຊິກອາຊຽນອື່ນອັດຕາພາສີແມ່ນຈະຖືກລົບລ້າງທັງໝົດ ນັບແຕ່ມື້ສັນຍາມີຜົນບັງຄັບໃຊ້.

**ປະເທດນິວຊີແລນ**

ໃນແຕ່ລະປີປະເທດນິວຊີແລນນຳເຂົ້າພາຫະນະໂດຍສານ ຈາກອາຊຽນມີມູນຄ່າປະມານ 17.5 ລ້ານໂດລາສະຫະລັດ ແລະ ຈາກທົ່ວໂລກປະມານ 2.1 ຕື້ໂດລາສະຫະລັດ. ເຄິ່ງໜຶ່ງຂອງລາຍການສິນຄ້າຖືກກຳນົດໄວ້ທີ່ 17.5% ແລະ ສ່ວນທີ່ເຫຼືອແມ່ນຖືກຍົກເວັ້ນພາສີ.

- ອັດຕາພາສີ ປີ 2005 ( 24 ລາຍການສິນຄ້າ)

- 0% ມີ 8 ລາຍການ (ພາຫະນະອື່ນໆ)

- 17.5% ມີ 16 ລາຍການ (ລົດໂຮງໝໍ ແລະ ມໍເຕີ້ໂຮມ)

- ຢ່າງຊ້າທີ່ສຸດ ອັດຕາພາສີແມ່ນຈະຖືກລົບລ້າງທັງໝົດໃນປີ 2012.

ອັດຕາພາສີ 0% ແມ່ນຈະຖືກປະຕິບັດນັບແຕ່ມື້ສັນຍາມີຜົນບັງຄັບໃຊ້, ໃນຂະນະທີ່ອັດຕາພາສີ 17.5% ຈະຖືກລົບລ້າງໃນ ປີ 2010 (ລົດໂຮງໝໍ) ຫຼື ອັດຕາພາສີຈະຫຼຸດລົງຈົນຮອດ 0% ໃນປີ 2012 (ລົດມໍເຕີ້ໂຮມ).

**10. ເສື້ອຜ້າ ແລະ ເກີບ ( HS 61, 62, 64)**

**ປະເທດອິດສະຕາລີ**

ໃນແຕ່ລະປີປະເທດອິດສະຕາລີມີການນຳເຂົ້າເສື້ອຜ້າ ແລະ ເກີບ ຈາກອາຊຽນສະເລ່ຍມີມູນຄ່າປະມານ 220.4 ລ້ານໂດລາສະຫະລັດ ແລະ ຈາກທົ່ວໂລກປະມານ 4.4 ຕື້ໂດລາສະຫະລັດ. ເກືອບທຸກລາຍການພາສີ ຂອງຜະລິດຕະພັນເສື້ອຜ້າທີ່ນຳເຂົ້າມາມີອັດຕາພາສີ 17.5% ແລະ ສຳລັບຜະລິດຕະພັນເກີບ 10%.

**ເສື້ອຜ້າ**

- ອັດຕາພາສີຂອງທັງໝົດລາຍການສິນຄ້າຈະຖືກລົບລ້າງໃນປີ 2020

- ອັດຕາພາສີ 0% (31 ລາຍການສິນຄ້າ) ແລະ 5% (3 ລາຍການສິນຄ້າ): ຈະຖືກກຳນົດໃຫ້ເປັນ 0% ນັບແຕ່ມື້ສັນຍາມີຜົນບັງຄັບໃຊ້(EIF).

- 7.5% ມີ 28 ລາຍການ: ຈະຖືກລົບລ້າງໃນປີ 2010.

- 17.5% ມີ 216 ລາຍການ: ຈະຖືກລົບລ້າງ ນັບແຕ່ມື້ສັນຍາມີຜົນບັງຄັບໃຊ້ ( 61 ລາຍການ), ຫຼື ຈະຍ້າຍເປັນ 0% ໃນປີ 2012 ( 6 ລາຍການ), ໃນປີ 2015 ( 22 ລາຍການ) ຫຼື ໃນປີ 2020 (ມີ 127 ລາຍການ).

**ເກີບ**

- ອັດຕາພາສີຂອງທັງໝົດລາຍການສິນຄ້າຈະຖືກລົບລ້າງນັບແຕ່ມື້ສັນຍາມີຜົນບັງຄັບໃຊ້.

- ອັດຕາພາສີ 0% ( 11 ລາຍການສິນຄ້າ): ຈະຖືກກຳນົດໃຫ້ເປັນ 0% ນັບຕັ້ງແຕ່ມື້ສັນຍາມີຜົນບັງຄັບໃຊ້.

- ອັດຕາພາສີ 5% ( 2 ລາຍການສິນຄ້າ): ຈະຖືກກຳນົດໃຫ້ເປັນ 0% ນັບຕັ້ງແຕ່ມື້ສັນຍາມີຜົນບັງຄັບໃຊ້.

- ອັດຕາພາສີ 7.5% (5 ລາຍການສິນຄ້າ) : ຈະຖືກກຳນົດໃຫ້ເປັນ 0% ນັບຕັ້ງແຕ່ມື້ສັນຍາມີຜົນບັງຄັບໃຊ້.

- ອັດຕາພາສີ 10% ( 22 ລາຍການສິນຄ້າ): ຈະຖືກກຳນົດໃຫ້ເປັນ 0% ນັບຕັ້ງແຕ່ມື້ສັນຍາມີຜົນບັງຄັບໃຊ້.

**ປະເທດນິວຊີແລນ**

ສະເລ່ຍແລ້ວປະເທດນິວຊີແລນນຳເຂົ້າເສື້ອຜ້າ ແລະ ເກີບ ຈາກອາຊຽນມີມູນຄ່າມີມູນຄ່າປະມານ 30.6 ລ້ານໂດລາສະຫະລັດ ແລະ ນຳເຂົ້າ ຈາກທົ່ວໂລກມີມູນຄ່າປະມານ 2.5 ຕື້ໂດລາສະຫະລັດຕໍ່ປີ.

ເກືອບທຸກລາຍການຂອງຜະລິດຕະພັນເສື້ອຜ້າທີ່ນໍາເຂົ້າມາ ແມ່ນມີອັດຕາພາສີ 19%, ແລະ ເກືອບທຸກລາຍການພາສີສໍາລັບຜະລິດຕະພັນເກີບມີອັດຕາພາສີຢູ່ລະຫ່ວາງ 17.5% -19%.

**ເສື້ອຜ້າ**

- ອັດຕາພາສີຂອງທັງໝົດລາຍການສິນຄ້າຈະຖືກລົບລ້າງໃນປີ 2020

- ອັດຕາພາສີ 0-5% ຈະຖືກກໍານົດໃຫ້ເປັນ 0% ນັບຕັ້ງແຕ່ມື້ສັນຍາມີຜົນບັງຄັບໃຊ້.

- ອັດຕາພາສີ 7% - 7.5% ຈະຍ້າຍເປັນ 0% ໃນປີ 2017, ລວມມີ: ຖົງມື, ຖົງມືທີ່ບໍ່ຫຸ້ມ ປາຍນີ້ວ ແລະ ຖົງມືນວມ, ສິ່ງທີ່ໄດ້ຈາກການຖັກ ຫຼື ໂຄຣເຊັດທີ່ຫຸ້ມດ້ວຍພລາສຕິກ/ຢາງ.

- ອັດຕາພາສີ 19% ຈະຫຼຸດລົງຈົນຮອດ 0% ໃນປີ 2017 (176 ລາຍການ), ໃນປີ 2020 (101 ລາຍການ) ຫຼື ໃນປີ 2012 ( 2 ລາຍການ).

**ເກີບ**

- ເກືອບທຸກລາຍຍການພາສີຂອງຜະລິດຕະພັນກຸ່ມນີ້ຢູ່ລະຫວ່າງ 17.5% - 19% ເຊິ່ງຈະຫຼຸດລົງຈົນຮອດ 0% ໃນປີ 2017 ຫຼື 2018.

- ອັດຕາພາສີຂອງທັງໝົດລາຍການສິນຄ້າຈະຖືກລົບລ້າງໃນປີ 2018

- ອັດຕາພາສີ 0% ຈະຖືກກໍານົດໃຊ້ນັບແຕ່ມື້ສັນຍາໃຊ້ມີຜົນບັງຄັບ ໃຊ້.

- ອັດຕາພາສີ 7%-7.5% ຈະຫຼຸດລົງຈົນຮອດ 0% ໃນປີ 2017 ລວມມີ: ສິ້ນສ່ວນຂອງເກີບ (ພື້ນດ້ານໃນທີ່ຖອດອອກໄດ້, ສົ້ນເກີບສິ່ງທີ່ຄ້າຍຄຽງຖອດອອກໄດ້ລວມທັງສະໜັບແຂ່ງ, ເຄື່ອງຫຸ້ມຂາ, ສິ່ງຄ້າຍຄຽງ ແລະ ສິ້ນສ່ວນຂອງສິ່ງດັ່ງກ່າວ).

**11. ວັດຖຸໃຊ້ຕໍ່າແຜ່ນ ແລະ ຜະລິດຕະພັນທີ່ເຮັດດ້ວຍສິ່ງດັ່ງກ່າວ.**

**ປະເທດອິດສຕາລີ**

- ອັດຕາພາສີ ປີ 2005

- 0% ມີ 114 ລາຍການ
- 5% ມີ 114 ລາຍການ
- 7.5% ມີ 86 ລາຍການ
- 10% ມີ 273 ລາຍການ
- 17.5% ມີ 18 ລາຍການ

• ອັດຕາພາສີຈະຖືກລຶບລ້າງໃນທຸກລາຍການ ໃນປີ 2020

- ຫຼາຍລາຍການອັດຕາພາສີ ຈະກຳນົດເປັນ 0% ໃນມື້ສັນຍາມີຜົນບັງຄັບໃຊ້ ຫຼື ຈະຖືກລຶບລ້າງ ໃນປີ 2010 (563 ລາຍການ).

- ສ່ວນອັດຕາພາສີທີ່ຍັງເຫລືອ ຈະຫຼຸດລົງ 0% ໃນປີ 2015 (2 ລາຍການ) ຫຼື ປີ 2020 (ໃນ 40 ລາຍການ)

- ຜ້າພົມ: ອັດຕາພາສີ 0% ໃນບາງຜ້າພົມ (ເຮັດດ້ວຍມື, ເປືອກໝາກພ້າວ, ໄຍໄມ້, ປໍສາ, ຝ້າຍ ) ຈະກຳນົດເປັນ 0% ໃນມື້ສັນຍາມີຜົນບັງຄັບໃຊ້ ໃນຂະນະທີ່ອັດຕາພາສີ 10% ຈະຫຼຸດລົງຫາ 0% ໃນປີ 2020.

ປະເທດນິວຊີແລນ

• ອັດຕາພາສີ ປີ 2005

- 0% ມີ 428 ລາຍການ
- 5% - 7.5% ມີ 120 ລາຍການ
- 12% - 12.5% ມີ 122 ລາຍການ
- 17% - 17.5% ມີ 40 ລາຍການ
- ອັດຕາພາສີສະເພາະ ຂອງ $NZ 3.55/kg ໃນ 2 ລາຍການ

- ອັດຕາພາສີຈະຖືກລຶບລ້າງ(ໝົດໄປ) ໃນທຸກລາຍການໃນປີ 2020

- ຫຼາຍລາຍການອັດຕາພາສີ 0% ຈະກຳນົດໃນມື້ສັນຍາມີຜົນບັງຄັບໃຊ້ ຫຼື ຈະຖືກລຶບລ້າງໃນປີ 2010 (457 ລາຍການ) .

- ສ່ວນອັດຕາພາສີທີ່ຍັງເຫລືອ ຈະຫຼຸດລົງ 0% ໃນປີ 2012 (59 ລາຍການ), 2016 (2 ລາຍການ), 2017 (172 ລາຍການ) ຫຼື ໃນປີ 2020 (ຈະເຫລືອພຽງ 22 ລາຍການ)

- ຜ້າພົມ: ໃນບາງຜ້າພົມມີອັດຕາພາສີ 17% ຈະຫຼຸດລົງ 0% ໃນປີ 2017. ອັດຕາພາສີ 17.5% ຂອງຜ້າພົມທີ່ຕັດ ຫຼືເຮັດເປັນຮູບ ເພື່ອປະກອບໃສ່ລົດໃຫ່ຍ ຈະໝົດໄປໃນປີ 2010. ອັດຕາພາສີ 12.5% ຂອງ ພົມສັກະຫຼາດ ຈະຫຼຸດລົງ 0% ໃນປີ 2017.

**12. ແຮ່ທາດ ແລະ ເຊື້ອເພີງ (HS 25-27)**

**ປະເທດອິດສະຕາລີ:**

ໃນທຸກໆປີ ປະເທດ ອິດສະຕາລີ ຈະນຳເຂົ້າຈຳພວກແຮ່ທາດ ແລະ ເຊື້ອເພີງ ເຊິ່ງມີມູນຄ່າປະມານ 14 ຕື້ໂດລາສະຫະລັດ ຈາກບັນດາປະເທດ ອາຊຽນ. ເຊິ່ງມູນຄ່າທັງໝົດໃນການນຳເຂົ້າ ຜະລິດຕະພັນຊະນິດນີ້ ຂອງອິດສະຕາລີ ໃນທົ່ວໂລກແມ່ນ 23.3 ລ້ານໂດລາສະຫະລັດຕໍ່ປີ. ລາຍການພາສີສ່ວນໃຫ່ຍ ຂອງປະເທດອິດສະຕາລີ ຕໍ່ສິນຄ້າໃນໝວດນີ້ ແມ່ນປອດພາສີ, ເຊິ່ງອັດຕາພາສີ 5% ມີ 14 ລາຍການ (ປະກອບດ້ວຍ: ແກັດສຖ່ານຫີນ, ແກັດສນ້ຳ, ຜະລິດຈາກແກັດສ ແລະ ຄ້າຍຄືແກັດ ແລະ ອື່ນໆ ນອກຈາກ ແກັດສເຊື້ອໄຟ ແລະ ອື່ນໆ ທີ່ມີລັກສະນະເປັນແກັດສ hydrocarbons ແລະ ເປັນກົດ) ອັດຕາພາສີ ຂອງ 14 ລາຍການນີ້ ຈະໝົດໄປໃນປີ 2010.

- ອັດຕາພາສີ ປີ 2005 (251 ລາຍການ)
  - 0% ມີ 237 ລາຍການ
  - 5% ມີ 14 ລາຍການ, ລວມມີສິນຄ້າເຊັ່ນ: ຂອງລອກລຽນແບບ ອາຍຖ່ານຫີນ, ອາຍນ້ຳ ແລະ ອາຍກາດສ ອື່ນໆ ນອກຈາກອາຍເຊື້ອໄຟ ແລະ ອື່ນໆ ທີ່ມີລັກສະນະເປັນອາຍໄຮໂດຼກາກບອນ.

- ໃນທຸກລາຍການອັດຕາພາສີ ຈະໝົດໄປ ໃນມື້ສັນຍາມີຜົນບັງຄັບໃຊ້ ແຕ່ຍັງເຫຼືອ 1 ລາຍການ ຈະໝົດໄປ ໃນປີ 2010

**ປະເທດນິວຊີແລນ**

ສຳລັບປະເທດ ນິວຊີແລນ ລາຍການພາສີສ່ວນໃຫ່ຍ ແມ່ນປອດພາສີ. ມີ 9 ລາຍການ ທີ່ຍັງຕ້ອງເສຍພາ ສີ 5-7% ປະກອບດ້ວຍ: ທີວເຊື້ອໄຟ, ນ້ຳມັນກາດ, ນ້ຳມັນຂາວ, ປີໂຕຼລຽມເຢລລີ, ນ້ຳມັນຈາລະບີ ແລະ ນ້ຳມັນເຄື່ອງ.

- ອັດຕາພາສີ ປີ 2005 (185 ລາຍການ)
  - 0% ມີ 176 ລາຍການ
  - 5% ມີ 1 ລາຍການ (ເຊື້ອໄຟແຫຼວ)
  - 6.5% ມີ 3 ລາຍການ ( ນ້ຳມັນຈາລະບີ, ກະແລັດ ແລະນ້ຳມັນລໍ່ລື່ນ ອື່ນໆ )
  - 7% ມີ 5 ລາຍການ ( ປະກອບດ້ວຍ: ບໍ່ເຊື້ອໄຟ, ນ້ຳມັນກາດ,
- ອັດຕາພາສີ ຈະໝົດໄປໃນທຸກລາຍການ ໃນມື້ສັນຍາມີຜົນບັງຄັບໃຊ້ ແຕ່ມີ 1 ລາຍການຊຶ່ງ ຈະໝົດໄປ ໃນປີ 2010.

**13. ໄມ້ ແລະຜະລິດຕະພັນຈາກໄມ້ (ລະຫັດ HS 44)**

**ປະເທດອິດສະຕາລີ:**

ເກືອບທຸກສິນຄ້າໃນໝວດສິນຄ້ານີ້ຂອງອິດສະຕາລີ ແມ່ນມີອັດຕາພາສີ 5%

- ອັດຕາພາສີ ປີ 2005 ( 102 ລາຍການ )
  - 0% ມີ 26 ລາຍການ
  - 5% ມີ 76 ລາຍການ
- ທຸກລາຍການອັດຕາພາສີຈະຖືກລົບລ້າງໃນປີ 2010 ຍົກເວັ້ນ 1 ລາຍການ:
  - 1 ລາຍການດັ່ງກ່າວ ລວມມີ ຈຳພວກ fiberboard ທີ່ເຮັດດ້ວຍໄມ້ ຫຼື ທີ່ເຮັດດ້ວຍວັດຖຸດິບອື່ນໆ) ຈະມີອັດຕາພາສີ 5% ຈົນຮອດປີ 2019 ກ່ອນທີ່ຈະຖືກລົບລ້າງທັງໝົດໃນປີ 2020.

**ປະເທດນິວຊີແລນ**

ເກືອບທຸກສິນຄ້າໃນໝວດສິນຄ້ານີ້ຂອງ ນິວຊີແລນ ແມ່ນມີອັດຕາພາສີ ລະຫວ່າງ 5%- 7%

- ອັດຕາພາສີ ປີ 2005 ( 139 ລາຍການ )
  - 0% ມີ 69 ລາຍການ
  - 5% ມີ 29 ລາຍການ
  - 6.5%-7% ມີ 41 ລາຍການ
- ທຸກລາຍການອັດຕາພາສີຈະຖືກລຶບລ້າງໃນປີ 2010 ຍົກເວັ້ນ 28 ລາຍການ ຊຶ່ງຈະຖືກລຶບລ້າງໃນປີ 2012, 2017 ແລະ 2020:

  - ໃນປີ 2012 :

  ມີ 12 ລາຍການ ໃນອັດຕາ 5% ແລະ 5 ລາຍການ ໃນອັດຕາ 7% ທີ່ຈະຖືກລຶບລ້າງເປັນ 0% (ລວມມີ ແຜ່ນກະດານທີ່ເຮັດດ້ວຍໄມ້ ຫຼືໄດ້ຈາກວັດຖຸດິບອື່ນໆ, ໄດ້ຈາກ ຫຼື ບໍ່ໄດ້ຈາກສິ່ງທີ່ເກີດຈາກຢາງ ຫຼື ທຳມະຊາດ ແລະ ຈຳພວກຊິ້ນສ່ວນຂອງເຮືອ ແລະ ຄ້າຍຄືເຮືອ (ຕົງຢ່າງ: ອົງປະກອບຫຼັກຂອງເຮືອ ແລະ ຊິ້ນສ່ວນນ້ອຍໆຂອງເຮືອ)

  - ໃນປີ 2017:

  ມີ 2 ລາຍການ ອັດຕາພາສີ 5% ຈະຖືກລຶບລ້າງເປັນ 0% (ລວມທັງໄມ້ ທີ່ມີສ່ວນປະກອບຂອງໄມ້ເຂດຮ້ອນ)

  - ໃນປີ 2020:

  ມີ 9 ລາຍການອັດຕາພາສີ 5% ,6.5% ແລະ 7% ຈະຖືກລຶບລ້າງ (ລວມທັງໄມ້ອັດຈຳນວນໜຶ່ງ, ໄມ້ສີເນຍ ແລະໄມ້ອື່ນ ທີ່ຄ້າຍຄື, ປະຕູ, ໂຄງປະຕູ, ແມ່ພິມທີ່ເຮັດດ້ວຍໄມ້ ແລະ ຈຳພວກໄມ້ອັດທີ່ປະດັບດ້ວຍມຸກ, ໂລງສົບ ແລະ ກ່ອງໃສ່ເຄື່ອງປະດັບ ແລະຜະລິດຕະພັນອື່ນທີ່ຄ້າຍຄືທີ່ເຮັດດ້ວຍໄມ້)

**14. ເຫຼັກ ແລະ ເຫຼັກກ້າ ( ລະຫັດ 72-73)**

**ປະເທດອິດສະຕາລີ:**

ເກືອບທຸກສິນຄ້າໃນໝວດສິນຄ້ານີ້ຂອງ ອິດສະຕາລີ( ເກືອບ 80%) ແມ່ນມີອັດຕາພາສີ 5%

- ອັດຕາພາສີ ປີ 2005 ( 305 ລາຍການ )

- 0% ມີ 55 ລາຍການ
- 5% ມີ 243 ລາຍການ
- 10% ມີ 7 ລາຍການ

• ທຸກລາຍການອັດຕາພາສີຈະຖືກລົບລ້າງໃນມື້ສັນຍາມີຜົນບັງຄັບໃຊ້ ຍົກເວັ້ນ 3 ລາຍການ ຊຶ່ງຍັງມີອັດຕາພາສີ 5% ກ່ອນທີ່ຈະຫຼຸດລົງເປັນ 0% ໃນປີ 2020.

 - ລາຍການເຫຼົ່ານີ້ລວມມີ ທໍ່ທີ່ໃຊ້ສົ່ງນ້ຳມັນ/ ທໍ່ສົ່ງແກັດສ, ທໍ່ເຫຼັກ/ເຫຼັກກ້າອື່ນໆ

| | |
|---|---|
| 7304.10.00 | - ທໍ່ທີ່ໃຊ້ເປັນທໍ່ສົ່ງນ້ຳມັນຫຼືອາຍແກັດສ |
| 7305 | ທໍ່ອດ ແລະ ທໍ່ອື່ນໆ (ຕົວຢ່າງ: ຊະນິດຕິດຕໍ່ກັນດ້ວຍການຈອດ, ຍ້ຳຕະປູ, ຫຼື ໃນລັກສະນະຄ້າຍຄຽງກັນ) ທີ່ມີໜ້າຕັດເປັນຮູບວົງມົນ, ມີເສັ້ນຜ່າສູນກາງຮອບນອກເກີນ 406 ມມ ທີ່ເຮັດດ້ວຍເຫຼັກ ຫຼື ເຫຼັກກ້າ. |
| 7305.12.00 | -- ອື່ນໆ, ເຊື່ອມຈອດຕິດກັນຕາມແນວຍາວ |
| 7306 | ທໍ່ອດ, ທໍ່ ແລະໂປຣຟາຍ ໂຄ່ງຊະນິດອື່ນໆ(ເຊັ່ນ: ຊະນິດຕໍ່ກັນແບບເປີດ ຫຼື ຕິດຕໍ່ກັນດ້ວຍການຈອດ, ຍ້ຳປະຕູ ຫຼື ໃນລັກສະນະຄ້າຍຄຽງກັນ) ທີ່ເຮັດດ້ວຍເຫຼັກ ຫຼື ເຫຼັກກ້າ. |
| 7306.60.00 | -- ອື່ນໆ ທີ່ເຊື່ອມຈອດຮອຍຕໍ່ແລ້ວ ມີໜ້າຕັດທາງຂວາງເປັນຮູບວົງມົນ |

**ປະເທດນິວຊີແລນ**

ເກືອບທຸກສິນຄ້າໃນໝວດສິນຄ້ານີ້ຂອງ ນິວຊີແລນ ແມ່ນມີອັດຕາພາສີ ລະຫວ່າງ 5%-7% ມີພຽງສອງສາມລາຍການ ທີ່ມີອັດຕາ 10% ແລະ 17.5%

• ອັດຕາພາສີ ປີ 2005 ( 445 ລາຍການ )
 - 0% ມີ 201 ລາຍການ
 - 5% ມີ 122 ລາຍການ
 - 6.5% -7% ມີ 116 ລາຍການ
 - 10% ມີ 3 ລາຍການ
 - 17.5% ມີ 3 ລາຍການ

- ອັດຕາພາສີ ຂອງ 204 ລາຍການ ແມ່ນກຳນົດເປັນ 0% ຫຼື ຖືກລົບລ້າງໃນມື້ສັນຍາມີຜົນບັງຄັບໃຊ້ ແລະ ສ່ວນທີ່ຍັງເຫຼືອ ຈະຫຼຸດລົງເປັນ 0% ໃນປີ 2018:
  - ອັດຕາພາສີ 0% ແລະ 10% ຖືກຫຼຸດເປັນ 0% ຫຼື ລົບລ້າງໃນມື້ສັນຍາມີຜົນບັງຄັບໃຊ້
  - ອັດຕາພາສີ 17.5% ຖືກກຳນົດເປັນ 0% ໃນປີ 2010 ລວມມີສິນຄ້າເຊັ່ນ:

| | |
|---|---|
| 73.20 | ສະປິງ ແລະແຜ່ນທີ່ໃຊ້ເປັນສະປິງ ທີ່ເຮັດດ້ວຍເຫຼັກ ຫຼື ເຫຼັກກ້າ |
| 7320.10 | - ແໜບລົດ ແລະ ແຜ່ນທີ່ໃຊ້ເປັນແໜບດັ່ງກ່າວ |
| | -- ແຜ່ນໂຄ້ງທີ່ເປັນສະປິງກ້ອງລົດ (ແຕ່ບໍ່ລວມເອົາຫ່ວງກຸນແຈ) |
| | ---ສຳລັບໃຊ້ໃນການປະກອບລົດຍົນ ຊຶ່ງອາດຖືກກຳນົດໂດຍລັດຖະມົນຕີ ອີງຕາມພາກທີ 14 ຂອງກົດໝາຍນີ້ |
| 7320.10.02 | ---ສຳລັບລົດຂົນສົ່ງໂດຍສານລະຫັດເຄົ້າ 87.03 ແລະ ພາຫະນະອື່ນໆ ຂອງລະຫັດເຄົ້າ 87.04 ທີ່ມີນ້ຳໜັກບໍ່ເກີນ 3,500 ກິໂລກລາມ |

| | |
|---|---|
| 7320.20 | -ສະປິງຂົດແບບໃບພັດ |
| | --ຂົດລວດທ້ອຍ ແລະສະປິງບ່ອນນັ່ງ |
| | ---ສຳລັບໃຊ້ໃນການປະກອບລົດຍົນ ຊຶ່ງອາດຖືກກຳນົດໂດຍລັດຖະມົນຕີ ອີງຕາມພາກທີ 14 ຂອງກົດໝາຍນີ້ |
| 7320.20.02 | ---ສຳລັບລົດຂົນສົ່ງໂດຍສານລະຫັດເຄົ້າ 87.03 ແລະ ພາຫະນະອື່ນໆ ຂອງລະຫັດເຄົ້າ 87.04 ທີ່ມີນ້ຳໜັກບໍ່ເກີນ 3,500 ກິໂລກລາມ |

| | |
|---|---|
| 7320.90 | - ອື່ນໆ |
| | --ຂົດລວດທ້ອຍ ແລະສະປິງບ່ອນນັ່ງ |
| | ---ສຳລັບໃຊ້ໃນການປະກອບລົດຍົນ ຊຶ່ງອາດຖືກກຳນົດໂດຍລັດຖະມົນຕີ ອີງຕາມພາກທີ 14 ຂອງກົດໝາຍນີ້ |
| 7320.90.02 | ---ສຳລັບລົດຂົນສົ່ງໂດຍສານລະຫັດເຄົ້າ 87.03 ແລະ ພາຫະນະອື່ນໆ ຂອງລະຫັດເຄົ້າ 87.04 ທີ່ມີນ້ຳໜັກບໍ່ເກີນ 3,500 ກິໂລກລາມ |

- ລາຍການທີ່ມີອັດຕາພາສີ 6.5% ຍ້າຍໄປເປັນ 0% ໃນປີ 2012.

- ຕົວຢ່າງ: ຜະລິດຕະພັນເຫຼັກກ້າແຜ່ນ ຫຼື ກໍ້ ທີ່ຊຸບ ຫຼື ເຄືອບກັບກົ່ວ, ເຊິ່ງອັດຕາພາສີຈະຫຼຸດລົງເປັນ 5% ໃນປີ 2010, ຫຼຸດລົງເປັນ 3% ໃນປີ 2011 ກ່ອນທີ່ຈະຫຼຸດລົງເປັນ 0% ໃນປີ 2012.

- ລາຍການທີ່ມີອັດຕາພາສີ 7% ຈະຫຼຸດລົງ 0% ໃນປີ 2012.

- ປະກອບມີຈຳພວກທີ່ເຮັດດ້ວຍເຫຼັກ/ເຫຼັກກ້າ ເຊັ່ນ: ແຜ່ນໂລຫະ, ທີ່ສົ່ງນ້ຳມັນ ແລະ ທີ່ສົ່ງອາຍແກັສ, ຫຼອດ ແລະ ທໍ່ອື່ນໆ, ຊະນິດຕໍ່ຕິດກັນດ້ວຍການຈອດ.

- ທຸກອັດຕາພາສີ 5% ຈະຫຼຸດລົງ 0% ໃນປີ 2020.

- ບາງລາຍການທີ່ຈະຫຼຸດລົງ 0% ໃນປີ 2012 ( ຜະລິດຕະພັນເປັນແຜ່ນແປ ທີ່ເຮັດດ້ວຍເຫຼັກ ຫຼື ເຫຼັກປະສົມ ເຊັ່ນ: ໜ້າຕັດຮູບຕ່າງໆ, ຮູບຮ່າງ ແລະ ທ່ອນ ຈຳພວກທີ່ເຮັດດ້ວຍເຫຼັກ ຫຼື ເຫຼັກປະສົມ : ທໍ່ຕ່າງໆ, ຫຼອດ ແລະ ທໍ່ເຄື່ອງຕົ້ມນ້ຳຮ້ອນບາງຊະນິດ).
- ບາງລາຍການທີ່ຍັງເຫຼືອ 5% ຈົນເຖິງປີ 2013 ( ທ່ອນ ແລະ ເສັ້ນບາງຊະນິດ, ທີ່ໄດ້ຈາກການຮີດຮ້ອນ, ເສັ້ນລວດ ທີ່ເຮັດດ້ວຍເຫັກ ຫຼື ເຫຼັກປະສົມ).

**ໂອກາດໃນການຄ້າດ້ານການບໍລິການ**

ໂດຍຜ່ານສັນຍາ AANZFTA ທັງສອງປະເທດອົດສະຕາລີ ແລະ ນິວຊີແລນ ເຫັນດີຮັບເອົາຂໍ້ຜູກມັດທັງອັນເກົ່າ ແລະ ອັນໃໝ່ ໃນການຄ້າດ້ານການບໍລິການທີ່ຈະເປີດໂອກາດໃຫ້ຜູ້ສົ່ງອອກຂອງອາຊຽນ ບໍ່ຖືກບັງຄັບຈາກສະມາຊິກອົງການການຄ້າໂລກອື່ນໆ. ຂໍ້ຜູກມັດທີ່ປະເທດອົດສະຕາລີ ແລະ ນິວຊີແລນ ໄດ້ຕົກລົງປະຕິບັດເກີນກວ່າຂໍ້ຜູກພັນທີ່ປະເທດເຫຼົ່ານີ້ມີໄວ້ ໃນສັນຍາລວມຂອງອົງການການຄ້າໂລກວ່າດ້ວຍການຄ້າດ້ານບໍລິການ GATS ໄດ້ຮັບການພິຈາລະນາ ດັ່ງຕໍ່ໄປນີ້:

## ບົດສະຫຼຸບກ່ຽວກັບຂໍ້ຜູກພັນດ້ານການບໍລິການຂອງອົດສະຕາລີໃນສັນຍາການຄ້າເສລີອາຊຽນ-ອົດສະຕາລີ-ນິວຊີແລນ(ນອກເໜືອຈາກໃນ GATS).

**ຂໍ້ຜູກພັນດ້ານຂະແໜງການ**

**1. ການບໍລິການດ້ານທຸລະກິດ**

- ການບໍລິການດ້ານກົດໝາຍ

- ການໃຫ້ຄໍາປຶກສາທາງດ້ານກົດໝາຍ ແລະ ການບໍລິການເປັນຕົວແທນດ້ານກົດໝາຍ ພາຍໃນ.
  - ອົດສະຕາລີໄດ້ເພີ່ມເຕີມຂໍ້ຜູກພັນອັນໃໝ່ເຂົ້າໃນຂໍ້ຜູກພັນລວມ ຕາມຮູບແບບທີ 1, 2 ແລະ 3.
- ໃຫ້ບໍລິການແນະນໍາດ້ານກົດໝາຍຕ່າງປະເທດ ແລະ ກົດໝາຍສາກົນ.

○ ຂໍ້ຜູກພັນໃນສັນຍາ AANZFTA ກ່າວວ່າ, ບຸກຄົນທີ່ປະກອບອາຊີບທາງດ້ານກົດໝາຍອາດສາມາດເຂົ້າຮ່ວມງານກັບບໍລິສັດກົດໝາຍທ້ອງຖິ່ນໃນຖານະເປັນທີ່ປຶກສາໄດ້ຢ່າງດຽວ ແຕ່ບໍ່ອາດສາມາດເຂົ້າເປັນຫຸ້ນສ່ວນນໍາ ຫຼື ປະກອບອາຊີບເປັນທະນາຍຄວາມທ້ອງຖິ່ນໃນອົດສະຕາລີໃຕ້. ຂໍ້ຈໍາກັດນີ້ໃນ GATS ແມ່ນກໍານົດໃຫ້ໃຊ້ກັບອົດສະຕາລີໂດຍລວມແທນທີ່ຈະໃຊ້ສະເພາະແຕ່ ກັບອົດສະຕາລີໃຕ້.

○ ແລະໃນ GATS ຍັງກໍານົດວ່າການບໍລິການໃຫ້ຄໍາປຶກສາດ້ານກົດໝາຍຢ່າງໜ້ອຍຕ້ອງມີຄູ່ຮ່ວມມື 1 ຄົນ ທີ່ມີທີ່ຢູ່ຖາວອນ(ໃນ ລັດ Victoria, ລັດ NSW) ຫຼື ທີ່ມີທີ່ຢູ່ຖາວອນຢ່າງໜ້ອຍ 180 ວັນ /ປີປະຕິທິນ. ແຕ່ຂໍ້ຈໍາກັດປະຕິບັດຊາດນີ້ ແມ່ນບໍ່ໄດ້ນໍາມາໃຊ້ໃນສັນຍາ AANZFTA.

- ການພະຍາບານ ແລະ ການພະດຸງຄັນ (ການຕໍາແຍ)

- ໄດ້ເພີ່ມເຂົ້າເປັນຂະແໜງການຍ່ອຍໃໝ່ໜຶ່ງໃນ AANZFTA ແຕ່ບໍ່ມີການຜູກມັດຂໍ້ຜູ້ພັນ ສໍາລັບຮູບແບບ 1, 2 ແລະ 3 ທັງໃນການເຂົ້າສູ່ຕະຫຼາດ ແລະ ຂໍ້ຈໍາກັດປະຕິບັດແບບທົ່ວໄປ. ຂໍ້ຜູກພັນອັນໃໝ່ນີ້ ຮັບປະກັນການຄອບຄຸມເອົາກາລະໂອກາດເຫຼົ່ານີ້ພາຍໃຕ້ຂໍ້ຜູກພັນການເຄື່ອນຍ້າຍຊົ່ວຄາວຂອງບຸກຄົນທົ່ວໄປຂອງປະເທດອົດສະຕາລີ.

- ການບໍລິການດ້ານບໍ່ແຮ່

ຍົກຕົວຢ່າງການໃຫ້ຄໍາແນະນໍາ ຫຼື ຄໍາປຶກສາ ກ່ຽວກັບພື້ນຖານຂອງສັນຍາ/ຄ່າທໍານຽມທີ່ກ່ຽວຂ້ອງກັບການພັດທະນາດ້ານນໍ້າມັນ ແລະ ບໍ່ແຮ່.

**2. ຄົມມະນາຄົມ**

- ອົດສະຕາລີໄດ້ລຶບຂໍ້ຈຳກັດທີ່ລ້າສະໄໝຫຼາຍຢ່າງໃນຕາຕະລາງ GATS ອອກ ແລະ ໄດ້ປັບປຸງ ໂດຍການຈຳກັດວົງເງິນສູງສຸດຂອງບໍລິສັດຕ່າງປະເທດ ແລະໃຫ້ສິດບໍລິສັດລັດທີ່ເປັນເຈົ້າຂອງເດີມ.

- ບໍ່ມີຂໍ້ຈຳກັດໃນດ້ານການເຂົ້າເຖິງຕະຫຼາດ ຫຼື ການປະຕິບັດຊາດສຳລັບທັງການສະໜອງຂ້າມແດນ ແລະ ການບໍລິໂພກຕ່າງແດນ ໃນຂະແໜງການຍ່ອຍດ້ານໂທລະຄົມມະນາຄົມ ຂອງອົດ ສະຕາລີ.
- ແຕ່ກໍ່ມີເງື່ອນໄຂທີ່ກ່ຽວຂ້ອງກັບດ້ານການຄ້າເຊັ່ນ:

○ ນິຕິບຸກຄົນທີ່ຖືໃບອະນຸຍາດເປັນເຈົ້າຂອງຫຸ້ນໃໝ່ຕ້ອງແມ່ນໜ່ວຍງານຂອງລັດ ຫຼື ບໍລິສັດທີ່ຈົດທະບຽນຖືກຕ້ອງຕາມລັດຖະທຳມະນູນພາຍໃຕ້ກົດໝາຍຂອງອົດສະຕາລີ ຫຼື ຄູ່ຮ່ວມມື ເຊິ່ງແຕ່ລະຝ່າຍ ໄດ້ເປັນບໍລິສັດທີ່ຈົດທະບຽນຖືກຕ້ອງຕາມລັດຖະທຳມະນູນ ພາຍໃຕ້ກົດໝາຍຂອງອົດສະຕາລີ.

○ ກຳມະສິດລວມຂອງ(ຫຸ້ນ)ຕ່າງປະເທດທີ່ສາມາດມີໄດ້ໃນບໍລິສັດເທວສຫຼາ (Telstra) ສູງສຸດແມ່ນບໍ່ໃຫ້ເກີນ 35% ແລະ ສູງສຸດບໍ່ເກີນ 5% ໃນກໍລະນີເປັນກຳມະສິດ(ຄົນ)ດຽວ.

○ ປະທານ ແລະ ຜູ້ອຳນວຍການສ່ວນໃຫຍ່ຂອງບໍລິສັດເທວສຫຼາ (Telstra) ຕ້ອງແມ່ນຄົນສັນຊາດ (ພົນລະເມືອງ) ອົດສະຕາລີ. ບໍລິສັດເທວສຫຼາ(Telstra) ຕ້ອງຮັກສາສຳນັກງານໃຫຍ່, ພື້ນຖານການປະຕິບັດການທີ່ສຳຄັນ ແລະ ສະຖານທີ່ລວບລວມໄວ້ໃນປະເທດອົດສະຕາລີ.

### 3. ການບໍລິການດ້ານການສຶກສາ

- ການໃຫ້ບໍລິການດ້ານການສຶກສາປະເພດອື່ນໆອີກຈຳນວນໜຶ່ງ ແມ່ນໄດ້ເພີ່ມເຂົ້າໃນຂໍ້ຜູກພັນພາຍໃຕ້ AANZFTA. ໃນນີ້ກວມເອົາການສິດສອນພິເສດ (ນອກເວລາຮຽນປົກກະຕິ), ການສອບເສັງພາສາອັງກິດ ແລະ ພາສາອື່ນໆ, ການສິດສອນພິເສດ ສຳລັບຂະແໜງການປຸງແຕ່ງອາຫານ ແລະ ການບຳບັດ ແບບພື້ນບ້ານ/ບູຮານ (ລວມທັງການນວດ, ການຝັງເຂັມ, ດົນຕີ, ເຕັ້ນລຳ ແລະ ສິ ລະປະການຕໍ່ສູ້/ມວຍ).

### 4. ການບໍລິການດ້ານສິ່ງແວດລ້ອມ.

- ໄດ້ມີການເພີ່ມເຕີມຂະແໜງການຍ່ອຍໃໝ່ເຂົ້າໃນຂໍ້ຜູກພັນພາຍໃຕ້ AANZFTA.

- ການປົກປັກຮັກສາສະພາບແວດລ້ອມອາກາດ.

○ ກວມເອົາການບໍລິການໃນສະຖານີພະລັງງານ ຫຼື ສູນອຸດສາຫະກຳໃນການກຳຈັດມົນລະພິດອາກາດ, ການຕິດຕາມການປ່ອຍແກັດສລົດຍົນ (mobile emissions) ແລະ ການຈັດຕັ້ງປະຕິບັດ ຂອງລະບົບຄວບຄຸມ ຫຼື ໂຄງການເພື່ອການຫຼຸດຜ່ອນ.

- ການບຳບັດຄືນ ແລະ ທຳຄວາມສະອາດຂອງດິນ ແລະ ນ້ຳ.

○ ກວມເອົາລະບົບທຳຄວາມສະອາດໃນຊີທູ (Situ) ຫຼື ລົດຍົນ (mobile), ການຕອບສະໜອງ

ໃນເຫດການສຸກເສີນ, ການທຳຄວາມສະອາດ ແລະ ການບັນເທົາ (ການເຮັດໃຫ້ຫຼຸດລົງ) ໄລຍະຍາວ ຂອງການທຳລາຍປ່າໄມ້ ແລະ ໄພພິບັດທາງທຳມະຊາດ ແລະ ໂຄງການຟື້ນຄືນສະພາບເດີມ (ເຊັ່ນ: ການຟື້ນຄືນຂອງພື້ນທີ່ບໍ່ໄລຫະ) ລວມທັງການຕິດຕາມກວດກາ.

- ການຫຼຸດສຽງລົບກວນ ແລະ ການສັ່ນສະເທືອນ.
  - ກວມເອົາທັງໂຄງການຕິດຕາມກວດກາ ແລະ ການຕິດຕັ້ງລະບົບພ້ອມຈໍພາບສຳລັບຕິດຕາມການຫຼຸດຜ່ອນສຽງລົບກວນ.
- ການປົກປັກຮັກສາຊີວະນາໆພັນ ແລະ ພື້ນແຜ່ນດິນ.
  - ກວມເອົາການປົກປັກຮັກສາລະບົບນິເວດວິທະຍາ ແລະ ພູມລຳເນົາຂອງສັດສາວາສິ່ງ ລວມທັງການເພີ່ມທະວີການປູກປ່າໄມ້ ແລະ ການສົ່ງເສີມການສຶກສາດ້ານປ່າໄມ້ແບບຍືນຍົງ.
- ແລະ ການບໍລິການອື່ນໆລວມທັງການບໍລິການທີ່ຕິດພັນກັບການປະເມີນຜົນກະທົບດ້ານສິ່ງແວດລ້ອມ.
- ບັນດາຂະແໜງການຍ່ອຍທີ່ເພີ່ມເຕີມເຂົ້າໃໝ່ເຫຼົ່ານີ້ (ໃນເມື່ອກ່ອນແມ່ນບໍ່ມີໃນ GATS) ໄດ້ປະເຊີນກັບການບໍ່ມີຂໍ້ຈຳກັດໃນການເຂົ້າເຖິງຕະຫຼາດ ຫຼື ການປະຕິບັດຊາດ ສຳລັບຮູບແບບການສະໜອງ 1, 2 ແລະ 3.

- ນອກນັ້ນ, ກໍ່ມີການປ່ຽນແປງບາງຢ່າງໃນດ້ານການປະຕິບັດ.

- ໃນການບໍລິການບໍລິຫານຈັດການຂອງເສຍ ແລະ ນ້ຳເສຍ ພາຍໃຕ້ສັນຍາ AANZFTA, ການສະໜອງການບໍລິການຂ້າມແດນ( Cross-border supply) ໄດ້ຜະເຊີນກັບການບໍ່ມີຂໍ້ຈຳກັດການເຂົ້າເຖິງຕະຫຼາດ ຫຼື ຈາກການປະຕິບັດຊາດ (ໃນ GATS ບໍ່ໄດ້ມີການຜູກມັດເນື່ອງຈາກວ່າຂາດຄວາມເປັນໄປໄດ້ທາງດ້ານເຕັກນິກ).

### 5. ການບໍລິການດ້ານການເງິນ.

- ສຳລັບການທະນາຄານ ແລະ ການບໍລິການດ້ານການເງິນອື່ນໆ, ໃນຂໍ້ຜູກພັນຂອງອິດສະຕາລີ ແມ່ນໄດ້ເພີ່ມຄຳອະທິບາຍຢ່າງຈະແຈ້ງຕໍ່ສູນໂອນເງິນ ແລະ ການບໍລິການຂອງສູນໂອນເງິນ.

### 6. ການຂົນສົ່ງ

- ໄດ້ຍົກລະດັບຂໍ້ຜູກພັນໃນດ້ານການບໍລິການເດີນເຮືອ, ການຂົນຖ່າຍສິນຄ້າ, ການເຊົ່າພາຫະນະທາງການຄ້າ, ການບໍລິການຝາກສາງ ແລະ ການບໍລິການເປັນຕົວແທນຂົນສົ່ງສິນຄ້າ.

- ໃນການໃຫ້ບໍລິການຂົນສົ່ງທາງທະເລ ໄດ້ມີການເພີ່ມຂໍ້ຜູກພັນເພີ່ມເຕີມທີ່ຊ່ວຍໃຫ້ການບໍລິ

ການຕໍ່ໄປນີ້ໃຊ້ໄດ້ກັບຄູ່ຄ້າທາງທະເລລະຫວ່າງປະເທດຕາມເງື່ອນໄຂທີ່ເໝາະສົມທີ່ບໍ່ເລືອກປະຕິບັດ ແລະ ກຳນົດເງື່ອນໄຂ.

○ ການຊ່ວຍເຫຼືອທາງດ້ານເສັ້ນທາງເດີນເຮືອ,ການລາກແກ່ ແລະເຮືອທີ່ໃຊ້ສຳລັບລາກແກ່.

○ ການສະໜອງນ້ຳ ແລະ ນ້ຳມັນ

○ ການເກັບຂີ້ເຫຍື້ອ ແລະ ກຳຈັດຂອງເສຍຂອງບາລາດສ(ballast)

○ ການບໍລິການຂອງທີວໜ້າ (ກັບຕັນ) ທ່າເຮືອ

○ ຄວາມຊ່ວຍເຫຼືອໃນການເດີນເຮືອ (ການບໍລິການຕາມຊາຍຝັ່ງແມ່ນມີຄວາມສຳຄັນຕໍ່ການເດີນເຮືອ ລວມທັງການສະໜອງນ້ຳ, ໄຟຟ້າ ແລະ ການສື່ສານ, ອຸປະກອນສິ່ງອຳນວຍຄວາມສະດວກສ້ອມແປງສຸກເສີນ, ບ່ອນຈອດເຮືອ ແລະ ການບໍລິການຈອດເຮືອ.)

- ການບໍລິການຂົນສົ່ງທາງລົດໄຟກໍ່ໄດ້ຈັດເຂົ້າເປັນຂະແໜງການຍ່ອຍໃໝ່ອັນໜຶ່ງໃນ AANZFTA. ຂະແໜງການຍ່ອຍນີ້ກວມເອົາ: ການລຳລຽງສິນຄ້າ, ການບໍລິການການຊຸກລາກ ແລະ ການບໍລິການສິ່ງເສີມສຳລັບການບໍລິການຂົນສົ່ງທາງລົດໄຟ.

- ທຸກຮູບແບບຂອງການສະໜອງໃນຂະແໜງການຍ່ອຍນີ້ແມ່ນປະເຊີນກັບການບໍ່ມີຂໍ້ຈຳກັດໃນການເຂົ້າເຖິງຕະຫຼາດ ແລະ ການປະຕິບັດຊາດ.

○ ແຕ່ວ່າສຳລັບ "ຂໍ້ຜູກພັນລຸ່ມນີ້" ເຖິງວ່າຈະບໍ່ມີຂໍ້ຈຳກັດສິດທິໃນການສ້າງເຄືອຂ່າຍໃໝ່, ແຕ່ການເຂົ້າໄປໃນເຂດດິນແດນສາທາລະນະອາດຈະບໍ່ໄດ້ຮັບການຮັບ ປະກັນ.

○ ແລະສຳລັບ "ຂໍ້ຜູກພັນຂ້າງເທິງ" (ການບໍລິການຂົນສົ່ງດ້ວຍລາງ ເຊັ່ນ: ລົດໄຟ): ບໍ່ມີຂໍ້ຍົກເວັ້ນ ໃນການເຂົ້າເຖິງພື້ນຖານໂຄງລ່າງທາງລົດໄຟທີ່ຈັດສັນ ພາຍໃຕ້ຫຼັກການການແຂ່ງຂັນສຳລັບຄວາມປອດໄພ, ປະສິດທິພາບ ແລະ ຄວາມສົນໃຈຂອງຜູ້ໃຊ້ໃນໄລຍະຍາວ.

- ການບໍລິການໃຫ້ເຊົ່າພາຫະນະທາງການຄ້າພ້ອມດ້ວຍຜູ້ຄວບຄຸມ ແມ່ນໄດ້ຖືກເພີ່ມເຂົ້າເປັນຂໍ້ຜູກພັນອັນໃໝ່ໃນຂໍ້ຜູກພັນລວມຕາມຮູບແບບ 1, 2 ແລະ 3.

- ການບໍລິການດ້ານການຂົນຖ່າຍສິນຄ້າທີ່ກ່ຽວຂ້ອງກັບການຂົນສົ່ງທາງລົດໄຟ, ທາງລົດ ແລະ ທາງອາກາດ ແມ່ນໄດ້ຖືກເພີ່ມເຂົ້າເປັນຂໍ້ຜູກພັນໃໝ່ອັນໜຶ່ງໃນຂໍ້ຜູກພັນລວມຕາມຮູບ ແບບ 2 ແລະ 3 ເທົ່ານັ້ນ (ແລະໄດ້ເຮັດການບັນທຶກໄວ້ກ່ຽວກັບຄວາມເປັນໄປບໍ່ໄດ້ທາງດ້ານເຕັກນິກໃນ ຮູບແບບ 1).

**ບົດສະຫຼຸບກ່ຽວກັບຂໍ້ຜູກມັດທາງດ້ານການຄ້າດ້ານບໍລິການຂອງປະເທດນິວຊີແລນພາຍໃຕ້ AANZFTA.**

**(ນອກຈາກທີ່ໄດ້ລະບຸໃນ GATS)**

**1. ການບໍລິການດ້ານທຸລະກິດ**

- ການບໍລິການດ້ານກົດໝາຍ

• ພາຍໃຕ້ຂໍ້ຜູກພັນຂອງການບໍລິການດ້ານກົດໝາຍ ແມ່ນໄດ້ເພີ່ມຕື່ມຂໍ້ຜູກພັນຂອງການບໍລິການດ້ານກົດໝາຍຕ່າງປະເທດ ຊຶ່ງປະກອບມີຮູບແບບທີ 1, 2, 3 ແລະ ບໍ່ມີຂໍ້ຈຳກັດໃນການເຂົ້າສູ່ຕະຫຼາດ ແລະ ການປະຕິບັດແບບຊາດ.

- ການບໍລິການດ້ານວິສາວະກຳ

• ມີການລຶບລ້າງຂໍ້ຫ້າມທີ່ກ່ຽວຂ້ອງກັບເງື່ອນໄຂໃນການການລົງທະບຽນ ແລະ ການຢັ້ງຢືນ. ໃນ GATS ຮູບແບບທີ 1, 3 ແລະ 4 ແມ່ນມີຂໍ້ຫ້າມກ່ຽວກັບການເຂົ້າສູ່ຕະຫຼາດ ແລະ ການປະຕິບັດແບບຊາດ ໂດຍຜ່ານການຮັບຮອງບາງວຽກທີ່ກ່ຽວຂ້ອງກັບສຸຂະພາບ ແລະ ຄວາມປອດໄພ ຊຶ່ງມີຂອບເຂດຈຳກັດ ສຳລັບນັກວິສາວະກອນທີ່ໄດ້ລົງທະບຽນ ຍ້ອນວ່າຜູ້ກ່ຽວຕ້ອງເປັນຜູ້ທີ່ມີຖິ່ນຖານຢູ່ໃນປະເທດນິຊີແລນ. ແຕ່ໃນ AANZFTA ຂໍ້ຈຳກັດເຫຼົ່ານີ້ແມ່ນຈະຖືກຍົກເວັ້ນ.

- ການບໍລິການປິ່ນປົວສັດ

• ການບໍລິການດ້ານນີ້ແມ່ນ "ບໍ່ໄດ້ຖືກຜູກມັດເນື່ອງຈາກບໍ່ມີຄວາມເປັນໄປໄດ້ທາງດ້ານທາງເຕັກນິກ" ສຳລັບການສະໜອງການບໍລິການຂ້າມແດນ ທັງໃນການເຂົ້າສູ່ຕະຫຼາດ ແລະ ການປະຕິບັດແບບຊາດພາຍໃຕ້ GATS. ແຕ່ໃນຂໍ້ຜູກພັນຂອງ AANZFTA ແມ່ນບໍ່ໄດ້ລະບຸ.

- ບາງຂະແໜງການຍ່ອຍໃໝ່ ໄດ້ແມ່ນຖືກເພີ່ມເຕີມເຂົ້າໃນການບໍລິການດ້ານທຸລະກິດ ລວມມີ: ການບໍລິການຖ່າຍພາບ, ການບໍລິການອານຸສັນຍາ, ການໃຫ້ບໍລິການໃນການລາຍງານເຄຣດິດ, ໜ່ວຍງານການຮຽກເງິນກູ້, ການບໍລິການການອອກແບບການຕົບແຕ່ງກາຍ, ການບໍລິການຮັບໂທລະສັບ, ການບໍລິການການຊອກຫາຄູ່ ແລະ ການບໍລິການດ້ານທຸລະກິດອື່ນໆ, ລວມທັງທຸລະກິດ ທີ່ເປັນນາຍໜ້າແລ່ນເອກະ

ສານຕ່າງໆ, ການໃຫ້ບໍລິການຕີລາຄາສິນຄ້າ, ການໃຫ້ບໍລິການດ້ານເລຂານຸການ, ການໃຫ້ບໍລິການໃນການວາງສະແດງສິນຄ້າ/ຮັບຈັດງານເປີດໂຕສິນຄ້າຕ່າງໆ.

- ທຸກຂະແໜງການຍ່ອຍໃໝ່ດັ່ງທີ່ໄດ້ກ່າວມາຂ້າງເທິງ ແມ່ນບໍ່ມີຂໍ້ຈຳກັດໃນການເຂົ້າສູ່ຕະຫຼາດ ແລະ ການປະຕິບັດແບບຊາດ ສຳລັບຮູບແບບທີ 1, 2 ແລະ 3.

- ມີຂໍ້ຜູກມັດເພີ່ມເຕີມສຳລັບການໃຫ້ບໍລິການໃນການລາຍງານການອອກເຄຣດິດ ຊຶ່ງມີເງື່ອນໄຂວ່າການຮັກສາຂໍ້ມູນສ່ວນຕົວຂອງບຸກຄົນ ຕ້ອງມີຄວາມສອດຄ່ອງກັບລັດຖະທຳມະນູນກ່ຽວກັບສິດຄວາມເປັນສ່ວນຕົວ ສະບັບທີ 1993 (ກົດລະບຽບທີ່ນຳໃຊ້ກ່ຽວກັບການຮັກສາຂໍ້ມູນສ່ວນບຸກຄົນຂອງປະເທດນິວຊີແລນ ໂດຍລວມແລ້ວ ແມ່ນສອດຄ່ອງກັບບົດແນະນຳໃນການຄຸ້ມຄອງການປົກປ້ອງຄວາມເປັນສ່ວນຕົວ ແລະ ກະແສການລະເມີດຂໍ້ມູນສ່ວນຕົວຂອງສະພາ OECD).

## 2. ວິສະວະກຳກໍ່ສ້າງ ແລະ ການບໍລິການທີ່ກ່ຽວຂ້ອງ

- ວິສະວະກຳກໍ່ສ້າງ ແລະ ການບໍລິການທີ່ກ່ຽວຂ້ອງ ລວມມີ: ວຽກງານການກໍ່ສ້າງອາຄານທົ່ວໄປ, ວິສະວະກຳໂຍທາທິການ, ການຕິດຕັ້ງ ແລະ ວຽກງານການປະກອບ, ວຽກງານກ່ຽວກັບການສຳເລັດການສ້າງອາຄານ ແລະ ວຽກສຳເລັດຮູບ, ຕະຫຼອດຮອດການບໍລິການອື່ນໆ (ການກະກຽມພື້ນທີ່, ການບູລະນະ, ແລະ ການແກ້ໄຂໂຄງສ້າງທີ່ສ້ອມແປງແລ້ວ ແລະ ການບໍລິການເຊົ່າອຸປະກອນຕ່າງໆ)

- ພາຍໃຕ້ GATS ໝວດວ່າດ້ວຍການສະໜອງການບໍລິການຂ້າມແດນສຳລັບທຸກຂະແໜງການຍ່ອຍພາຍໃຕ້ຂະແໜງນີ້ ແມ່ນ "ບໍ່ໄດ້ຖືກຜູກມັດເນື່ອງຈາກບໍ່ມີຄວາມເປັນໄປໄດ້ທາງດ້ານເຕັກນິກ" (ສຳລັບທັງໃນການເຂົ້າສູ່ຕະຫຼາດ ແລະ ໃນການປະຕິບັດແບບຊາດ), ແຕ່ພາຍໃຕ້ AANZFTA ແມ່ນ "ບໍ່ມີຂໍ້ຜູກພັນສຳລັບການບໍລິການໃຫ້ຄຳປຶກສາ". ໝາຍຄວາມວ່າການສະໜອງການບໍລິການຂ້າມແດນສຳລັບຂະແໜງການໃຫ້ຄຳປຶກສາໃນທຸກຂະແໜງການຍ່ອຍເຫຼົ່ານັ້ນ ແມ່ນບໍ່ມີຂໍ້ຈຳກັດໃນການເຂົ້າສູ່ຕະຫຼາດ ຫຼື ການປະຕິບັດແບບຊາດ ອີກຕໍ່ໄປ..

- ສຳລັບການບໍລິການເຊົ່າອຸປະກອນຕ່າງໆທີ່ກ່ຽວກັບການກໍ່ສ້າງແມ່ນໄດ້ຖືກເພີ້ມເຂົ້າໃນ AANZFTA ຊຶ່ງຮູບແບບທີ 1,2,3 ຈະບໍ່ມີຂໍ້ຈຳກັດໃນການເຂົ້າສູ່ຕະຫຼາດ ຫຼື ການປະຕິບັດແບບຊາດ.

## 3. ການບໍລິການດ້ານການສຶກສາ

ບາງການບໍລິການດ້ານການສຶກສາ ໄດ້ຖືກເພີ່ມເຂົ້າໃນ AANZFTA ລວມມີ: ການຈັດການຝຶກອົບຮົມດ້ານພາສາ ທີ່ຈັດຂຶ້ນທີ່ສະຖາບັນຊ່ຽວຊານດ້ານພາສາ ແລະ ການສອນພິເສດສຳລັບລະດັບປະຖົມ ແລະ ມັດທະຍົມໃນສະຖາບັນຊ່ຽວຊານສະເພາະນອກລະບົບການສຶກສາພາກບັງຄັບ ຂອງປະເທດນິວຊີແລນ.

## 4. ການບໍລິການດ້ານສິ່ງແວດລ້ອມ

ຂໍ້ມູນໃໝ່ພາຍໃຕ້ AANZFTA ກໍຄືຂໍ້ກຳນົດວ່າດ້ວຍການບໍລິການໃຫ້ຄຳປຶກສາ ທີ່ກວມເອົາທຸກການບໍລິການດ້ານສິ່ງແວດລ້ອມຢ່າງເຕັມຮູບແບບ ລວມມີ:

- ນ້ຳເສຍ ແລະ ການບໍລິການໃນການຈຳກັດສິ່ງເສດເຫຼືອຕ່າງໆ

- ການປ້ອງກັນສະພາບອາກາດພາຍນອກ ແລະ ສະພາບພູມອາກາດ, ການຟື້ນຟູ ແລະ ທຳຄວາມສະອາດພື້ນດິນ ແລະ ນ້ຳ, ການຫຼຸດຜ່ອນສຽງລົບກວນ ແລະ ການສັ່ນສະເທືອນ, ການຄຸ້ມຄອງຄວາມຫຼາກຫຼາຍທາງຊີວະວິທະຍາ ແລະ ສະພາບທາງດ້ານພູມສາດ ແລະ ການບໍລິການດ້ານສິ່ງແວດລ້ອມອື່ນໆ ຊຶ່ງທັງໝົດນີ້ແມ່ນເປັນພຽງການໃຫ້ຄຳປຶກສາເທົ່ານັ້ນ.

- ການບໍລິການທັງໝົດທີ່ກ່າວມາຂ້າງເທິງ ແມ່ນບໍ່ມີຂໍ້ຈຳກັດໃນການເຂົ້າຫາຕະຫຼາດ ຫຼື ການປະຕິບັດແບບຊາດ ສຳລັບຮູບແບບທີ 1,2,3.

## 5. ການບໍລິການດ້ານການເງິນ

- ສຳລັບການໃຫ້ບໍລິການດ້ານປະກັນໄພທີ່ບໍ່ແມ່ນການປະກັນໄພຊີວິດ ໄດ້ມີການຍົກເລີກຂໍ້ຫ້າມທີ່ພົວພັນເຖິງຄະນະບໍລິຫານການຕະຫຼາດໝາກແອັບເປີ້ນ . ພາຍໃຕ້ GATS, ລັດຖະທຳມະນູນຂອງຄະນະບໍລິຫານການຕະຫຼາດໝາກແອັບເປີ້ນ ແລະ ໝາກແພ ໂດຍຕາງໜ້າໃຫ້ແກ່ຊາວກະສິກອນ ແມ່ນມີອຳນາດໃນການຈັດໃຫ້ມີການປະກັນໄພແບບບັງຄັບ ແລະ ໃນການຮຽກຮ້ອງໃຫ້ຊາວກະສິກອນ ຕ້ອງຈ່າຍພາສີ ເພື່ອທົດແທນຈຳນວນເງິນການປະກັນໄພດັ່ງກ່າວ.

- ສຳລັບຂະແໜງການຍ່ອຍລະດັບກາງຂອງການປະກັນໄພ, ໄດ້ເພີ່ມຕື່ມເງື່ອນໄຂໃໝ່ກ່ຽວກັບ "ການເກັບພາສີຈາກຜູ້ຜະລິດແປ້ງສາລີ" ຊຶ່ງໄດ້ກຳນົດວ່າ ຜູ້ຜະລິດແປ້ງສາລີຂອງບໍລິສັດ NZ ltd. ມີອຳນາດໃນການຈັດໃຫ້ມີການປະກັນໄພທຳມະຊາດແບບບັງຄັບ ໂດຍຕາງໜ້າໃຫ້ບັນດາຊາວກະສິກອນ ແລະ ຮຽກຮ້ອງໃຫ້ພວກເຂົາຈ່າຍພາສີເພື່ອທົດແທນຈຳນວນເງິນປະກັນໄພ.

**Notes on Accompanying CD**

This CD-ROM contains the following:

Part A: Text and schedules of the Agreement Establishing the ASEAN-Australia-New Zealand Free Trade Area (AANZFTA). It also includes the text of the Understanding on Article 1 (Reduction and Elimination of Customs Duties) of Chapter 2 (Trade in Goods Chapter) of the AANZFTA and the Implementing Arrangement for ASEAN-Australia-New Zealand Free Trade Area Economic Co-operation Work Programme Pursuant to Chapter 12 (Economic Cooperation) of the AANZFTA.

Part B: Product Specific Rules (PSR), Certificate of Origin (CO) Form, Exporter's Declaration Form, and Guidelines for Completing the CO Form of the AANZFTA ROO. For tariff reduction schedules for Trade in Goods, please refer to Part A above. Note that tariff reduction schedules as annexed are in HS 2002. Readers/users are advised to refer to the www.asean.org at entry into force of AANZFTA for the HS 2007 version of the tariff reduction schedules.

Utmost care has been done in the preparation/compilation of the files in the CD, should there be any discrepancies, the original legal text, including the schedules of the AANZFTA signed by the Parties shall prevail.



This translation was certified
by Ministry of Industry and Commerce of Lao PDR